GCI

# ບົດທີ 8

# ຂອງປະທານຝ່າຍວິນຍານ

**ອາລຳພະບົດ:**

**ຈຸດປະສົງຂອງບົດຮຽນ:**

- ເພື່ອໃຫ້ເຂົ້າໃຈເຖິງຂອງປະທານ ແລະພັນທະກິດຊະນິດຕ່າງໆ
- ເພື່ອໃຫ້ເຂົ້າໃຈເຖິງຈຸດປະສົງຂອງຂອງປະທານ
- ເພື່ອຊ່ວຍໃຫ້ຜູ້ສຶກສາໄດ້ຄົ້ນພົບຂອງປະທານຝ່າຍວິນຍານຂອງຕົນເອງ

## ໂຄງຮ່າງບົດຮຽນ

**I. ອະລຳພະບົດ**

ກ. ການຮັບໃຊ້ພະຜູ້ເປັນເຈົ້າເປັນສິດທິພິເສດ

ຂ. ຈຸດປະສົງຂອງຂອງປະທານຂອງເຮົາ

ຄ. ເງື່ອນໄຂກ່ອນທີ່ເຮົາຈະໄດ້ຮັບຂອງປະທານ

ງ. ຄວາມສາມາດຂອງມະນຸດກັບຂອງປະທານຂອງພະວິນຍານແຕກຕ່າງກັນຢ່າງໃດແດ່?

ຈ. ຜົນຂອງພະວິນຍານກັບຂອງປະທານຂອງພະວິນຍານແຕກຕ່າງກັນຢ່າງໃດແດ່?

**II. ຂອງປະທານ ແລະພັນທະກິດ 3 ປະເພດຫລັກ**

ກ. ຂອງປະທານ ແລະພັນທະກິດ 3 ປະເພດຫລັກ

ຂ. ລັກສະນະທົ່ວໄປຂອງຂອງປະທານເພື່ອການບົວລະບັດ, ການສຳແດງ, ແລະການເປັນຜູ້ນຳ

**III. ການສຶກສາເຖິງເລື່ອງຂອງປະທານແຫ່ງການສຳແດງ ໃນພະທຳ 1ໂກຣິນໂທ 12:8-10**

ກ. ລາຍລະອຽດຕ່າງໆຂອງຂອງປະທານ

**IV. ຂອງປະທານເພື່ອການຮັບໃຊ້ຕາມໜ້າທີ່**

ກ. ຂອງປະທານໃນການເຜີຍພະວັດຈະນະ

ຂ. ຂອງປະທານໃນການບົວລະບັດ

ຄ. ຂອງປະທານໃນການສັ່ງສອນ

ງ. ຂອງປະທານໃນການເຕືອນສະຕິ

ຈ. ຂອງປະທານໃນການໃຫ້

ສ. ຂອງປະທານໃນການບໍລິຫານຈັດການ

ຊ. ຂອງປະທານໃນການສະແດງຄວາມເມດຕາ

**V. ສະຫລຸບ**

ກ. ກຸນແຈສູ່ການຄົ້ນພົບຂອງປະທານຝ່າຍວິນຍານ/ ພັນທະກິດຂອງເຮົາ

ຂ. ກຸນແຈສູ່ການພັດທະນາຂອງປະທານຝ່າຍວິນຍານ/ ພັນທະກິດຂອງເຮົາ

GCI

# I. ອະລຳພະບົດ

ກ. ການຮັບໃຊ້ພະຜູ້ເປັນເຈົ້າເປັນສິດທິພິເສດ

ຄວາມສຳພັນຂອງການຄົ້ນພົບຂອງປະທານຝ່າຍວິນຍານຂອງຕົນເອງ - ມັດທາຍ 25:14-30

ໃນເລື່ອງນີ້ ພວກເຮົາໄດ້ຮັບບົດຮຽນຫລາຍປະການຄື:

1. ພະເຈົ້າຊົງເປັນຜູ້ປະທານຂອງປະທານຫລືຄວາມສາມາດ

**ເອເຟໂຊ 4:11** : "ຂອງປະທານຂອງພະອົງ ກໍຄືໃຫ້ບາງຄົນເປັນອັກຄະສາວົກບາງຄົນເປັນຜູ້ເຜີຍພະວັດຈະ ນະ ບາງຄົນເປັນຜູ້ປະກາດຂ່າວປະເສີດ ບາງຄົນເປັນສິດຍາພິບານ ແລະອາຈານ

2. ຜູ້ເຊື່ອໃນພະເຈົ້າທຸກຄົນໄດ້ຮັບມອບຂອງປະທານແລ້ວ:

**ມັດທາຍ 25:15**

ຄົນໜຶ່ງທ່ານໃຫ້.. 5 ຕາລັນ

ຄົນໜຶ່ງ 2 ຕາລັນ

ຄົນໜຶ່ງ 1 ຕະລັນ

ໂຣມ 12:6 "ແລະເຮົາທຸກຄົນໄດ້ຮັບຂອງປະທານຕ່າງໆກັນ ຕາມພະຄຸນທີ່ໄດ້ຊົງໂຜດປະທານແກ່ພວກເຮົາ ຄືຖ້າເປັນການປະກາດພະທຳ ກໍຈົ່ງປະກາດຕາມຂະໜາດແຫ່ງຄວາມເຊື່ອ"

3. ພະເຈົ້າຮຽກຮ້ອງໃຫ້ປະຊາກອນຂອງພະອົງທຸກຄົນຕ້ອງສະເໜີລາຍງານຕໍ່ພະອົງ:

ມັດທາຍ 25:19 "ຢູ່ດົນນານຕໍ່ມານາຍຂອງຂ້ອຍໃຊ້ເຫລົ່ານັ້ນກໍກັບມາຄິດບັນຊີກັບເຂົາ"

4. ຄວາມຈິງບາງຢ່າງກ່ຽວກັບທາດຊຶ່ງບໍ່ເກີດຜົນ

ກ) ເຂົາ**ເຂົ້າໃຈພະ**ເຈົ້າຢ່າງຜິດໆ

ມັດທາຍ 25: 24 "..ທ່ານເປັນຄົນໃຈແຂງ"

ໂຮເຊຢາ 4:6 "ປະຊາກອນຂອງເຮົາພິນາດເພາະຂາດຄວາມຮູ້"

ຂ) ເຂົາມີຄວາມຢ້ານ ຂໍ້ 25

ມັດທາຍ 25:25 "ຂ້າພະເຈົ້າຢ້ານ"ຄວາມຢ້ານເຮັດໃຫ້ຫລາຍຄົນບໍ່ສາມາດບັນລຸເປົ້າໝາຍ ແລະແຜນການໃນຊີວິດໄດ້

2 ຕີໂມທຽວ 1:7 "ເພາະວ່າພະເຈົ້າບໍ່ໄດ້ຊົງປະທານຈິດທີ່ຂີ້ຢ້ານໃຫ້ເຮົາ ແຕ່ໄດ້ຊົງປະທານຈິດທີ່ປະ ກອບດ້ວຍລິດຄວາມຮັກ ແລະການບັງຄັບຕົນເອງໃຫ້ແກ່ເຮົາ"

ຄ) ເຂົາເປັນຄົນ**ກຽດຄ້ານ**

GCI

ມັດທາຍ 25:26 " ພະເຈົ້າຊົງເອີ້ນເຂົາວ່າ "ຂ້າໃຊ້ຊົ່ວຊ້າ ແລະກຽດຄ້ານ"

ງ) ພະເຈົ້າຊົງເປັນຜູ້ປະທານເປັນ**ບຳເໜັດ**

**ມັດທາຍ 25:21,23** "ດີແລ້ວ , ຂ້ອຍໃຊ້ຜູ້ດີ ແລະສັດຊື່ເອີຍ ເຈົ້າເປັນຜູ້ສັດຊື່ໃນຂອງເລັກນ້ອຍ ເຮົາຈະ ຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງ ຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າເທີ້ນ"

ຂ. ຈຸດປະສົງຂອງຂອງປະທານຂອງເຮົາ

2 ໂກຣິນໂທ 3:4-6, ເອເຟໂຊ 4:12-13, 1ເປໂຕ 4:10
ໃນກິດຈະການ 8:19-23 - ຊີໂມນຄົນເຮັດວິທະຍາຄົມໄດ້ເຫັນການຊົງເຈີມໃນພັນທະກິດຂອງເປໂຕ ແລະໂຢຮັນ ເຂົາ ຈຶ່ງຢາກໄດ້ການຊົງເຈີມຢ່າງດຽວກັນ ເພື່ອຈະໄດ້ວາງມືໃສ່ຄົນອື່ນ ພະຄຳພີກ່າວວ່າເຂົາມີເຈດຕະນາທີ່ບໍ່ຖືກຕ້ອງ.

1. ເພື່ອນຳມາຊຶ່ງຊີວິດ 2ໂກຣິນໂທ 3:4-6

ຂໍ້ 6 ກ່າວວ່າ "ພະອົງຊົງເຮັດໃຫ້ເຮົາສາມາດທີ່ຈະເປັນພັນທະກອນແຫ່ງພັນທະສັນຍາໃຫມ່ໄດ້"

ພະຄຳ ພີບໍ່ໄດ້ ກ່າວວ່າ "ພະອົງກຳລັງຈະເຮັດໃຫ້ເຮົາເປັນ" ແຕ່ຊົງປະທານໃຫ້ເຮົາມີຄວາມສາມາດ ເຮົາເປັນພັນທະກອນແຫ່ງພັນທະສັນຍາໃຫມ່ - ເປັນພັນທະສັນຍາແຫ່ງພະວິນຍານຜູ້ຊົງປະທານຊີວິດ ອາດມີບາງຄົນທີ່ສາມາດໃຊ້ຂອງປະທານຂອງເຂົາໂດຍທາງເນື້ອໜັງ ຫລືໂດຍຕົວອັກສອນຕາມບັນຍັດຊຶ່ງປະທານໃຫ້ ຫາຍ ແຕ່ບໍ່ໄດ້ນຳມາຊຶ່ງຊີວິດ"

2. ເພື່ອເສີມສ້າງປະຊາກອນຂອງພະເຈົ້າ ເອເຟໂຊ 4:12

ເອເຟໂຊ 4:11-12: ກ່າວໄວ້ວ່າ "ຂອງປະທານທັງມວນມີໄວ້ເພື່ອ "ຕຽມທຳມິກະຊົນໃຫ້ເປັນຄົນທີ່ຈະຮັບໃຊ້"

ກ) ເພື່ອເປັນເຄື່ອງມືໃນການເປັນນ້ຳໜຶ່ງໃຈດຽວກັນ ຂໍ້ 13
ຂ) ເພື່ອເຮັດໃຫ້ຄົນຂອງພະເຈົ້າຈະເລີນຂຶ້ນສູ່ຄວາມເປັນຜູ້ໃຫຍ່ ຂໍ້ 13

3. ເພື່ອບົວລະບັດຊຶ່ງກັນແລະກັນ 1 ເປໂຕ 4:10

"ຕາມຊຶ່ງທຸກຄົນໄດ້ຮັບຂອງປະທານທີ່ຊົງປະທານໃຫ້ແລ້ວ ກໍໃຫ້ໃຊ້ຂອງປະທານນັ້ນ ເພື່ອປະໂຫຍດແກ່ກັນ ແລະກັນ ເປັນຜູ້ຮັບມອບສັນທະທີ່ດີ ທີ່ແຈກ ແລະສຳແດງພະຄຸນນານາປະການຂອງພະເຈົ້າ"

ພະທຳຕອນນີ້ບອກເຮົາວ່າຂອງປະທານທີ່ເຮົາມີຢູ່ນັ້ນເປັນສິ່ງທີ່ເຮົາ "ໄດ້ຮັບມາ" ບໍ່ແມ່ນສິ່ງທີ່ເຮົາຫາມາໄດ້ ຫລືລົງທຶນລົງແຮງຈົນໄດ້ມາ ຈຸດປະສົງຂອງຂອງປະທານທີ່ເຮົາມີຢູ່ນັ້ນເພື່ອເຮົາຈະໄດ້ຮັບໃຊ້ຜູ້ອື່ນໄດ້.

GCI

ຄ. ເງື່ອນໄຂກ່ອນທີ່ເຮົາຈະໄດ້ຮັບຂອງປະທານ:ໂຣມ 12:1-3

1. ໂຣມ 12:1: ເຮົາຕ້ອງຖວາຍຕົວເອງເພື່ອເປັນເຄື່ອງບູຊາອັນມີຊີວິດທີ່ບໍລິສຸດ ແລະເປັນທີ່ພໍພະໄທຂອງພະເຈົ້າ

   1ເປໂຕ 1:15-16 "ແຕ່ເພາະພະອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍລິສຸດ ຝ່າຍພວກທ່ານຈົ່ງກາຍເປັນຜູ້ບໍລິສຸດ ໃນກິລິຍາວາຈາທຸກປະການເໝືອນກັນ ເພາະມີຄຳຂຽນໄວ້ແລ້ວວ່າ, ເຈົ້າທັງຫລາຍຈົ່ງເປັນບໍລິສຸດ ເພາະຝ່າຍ ເຮົາບໍລິສຸດ"

2. ໂຣມ 12:2 ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກ

   1ໂຢຮັນ 2:15-16 ເພາະວ່າສາລະພັດສິ່ງຊຶ່ງມີຢູ່ໃນໂລກນັ້ນໄດ້ແກ່ ຕັນຫາຂອງເນື້ອໜັງ, ຕັນຫາຂອງຕາ, ຄວາມຫຍິ່ງພະຫຍອງໃນຊີວິດ

3. ຈົ່ງດຳເນີນຊີວິດໃນວິຖີທາງແຫ່ງຄວາມຮັກ

   1ໂກຣິນໂທ 14:1 "ຈົ່ງມຸ້ງຫາຄວາມຮັກ ແລະຂົນຂວາຍຂອງປະທານຝ່າຍພະວິນຍານດ້ວຍຄວາມຈິງໃຈ ສະເພາະຢ່າງຍິ່ງການກ່າວພະຄຳ"

   ບໍ່ວ່າເຮົາຈະມີຂອງປະທານເປັນການນຳ ການສອນ ການຈັດການ ການເວົ້າພາສາແປກໆ ຫລືການຮັກສາໂລກ ເຮົາຕ້ອງດຳເນີນຊີວິດໃນຄວາມຮັກ.

ງ. ຄວາມສາມາດຂອງມະນຸດກັບຂອງປະທານຂອງພະວິນຍານແຕກຕ່າງກັນຢ່າງໃດແດ່?

| | **ຄວາມສາມາດ:** | **ຂອງປະທານ:** |
|---|---|---|
| 1 | ໄດ້ຮັບມາຈາກບັນພະບຸລຸດ | ໄດ້ຮັບຈາກພະວິນຍານບໍລິສຸດ |
| 2 | ຕິດຕົວມາຕັ້ງແຕ່ເກີດ | ຕິດຕົວມາຕັ້ງແຕ່ບັງເກີດໃໝ່ |
| 3 | ພະເຈົ້າປະທານໃຫ້ແກ່ມະນຸດທຸກຄົນໃນໂລກ | ພະເຈົ້າປະທານໃຫ້ແກ່ທຸກຄົນໃນພະກາຍຂອງພະຄຣິດ |
| 4 | ເພື່ອການເຮັດກິດຈະກຳຂອງມະນຸດ | ເພື່ອພັນທະກິດໃນພະກາຍຂອງພະຄຣິດ |
| 5 | ອາດເຮັດໄດ້ໂດຍບໍ່ຕ້ອງມີພະວິນຍານ | ຕ້ອງເພິ່ງພາໃນພະວິນຍານບໍລິສຸດ |
| 6 | ເຮັດໃນວິຖີຂອງທຳມະຊາດ | ເຮັດໃນວິຖີຂອງຝ່າຍວິນຍານ |
| 7 | ຕາມປົກກະຕິສິ່ງຜົນຊົ່ວຄັ້ງຊົ່ວຄາວ | ສິ່ງຜົນຊົ່ວນິລັນດອນບໍ່ຈຳກັດ |
| 8 | ເຮັດໃຫ້ຕົວເອງໄດ້ຮັບກຽດ | ເຮັດໃຫ້ພະເຈົ້າໄດ້ຮັບກຽດ |

GCI

ຈ. ຜົນຂອງພະວິນຍານກັບຂອງປະທານຂອງພະວິນຍານແຕກຕ່າງກັນຢ່າງໃດແດ່?

ຄາລາເຕຍ 5, 1ໂກຣິນໂທ 12, ໂຣມ 12, ເອເຟໂຊ 4

| | ຜົນຂອງພະວິນຍານ | ຂອງປະທານຂອງພະວິນຍານ |
|---|---|---|
| 1 | ເປັນສິ່ງບົ່ງຊີ້ເຖິງຊີວິດຂອງຄຣິສຕຽນ | ເປັນສິ່ງບົ່ງຊີ້ເຖິງການກະທຳຂອງຄຣິສ ຕຽນ |
| 2 | ຄືກັນໃນຄຣິສຕຽນທຸກຄົນ | ແຕກຕ່າງກັນໄປໃນຄຣິສຕຽນແຕ່ລະຄົນ |
| 3 | ຊາຕານຮຽນແບບບໍ່ໄດ້ | ຊາຕານຮຽນແບບໄດ້ |
| 4 | ກ່ຽວຂ້ອງກັບບຸກຄະລິກກະພາບ | ກ່ຽວຂ້ອງກັບງານຮັບໃຊ້ພັນທະກິດ |
| 5 | ເປັນຈຸດໝາຍຢູ່ໃນຕົວເອງ | ເປັນເຄື່ອງມືນຳໄປສູ່ຈຸດໝາຍ |
| 6 | ໝັ້ນຄົງຖາວອນຢັ້ງຢືນນິລັນດອນ | ມີວາລະຢຸດ |
| 7 | ຂຶ້ນຢູ່ກັບຊີວິດຝ່າຍວິນຍານ ແລະຄວາມເປັນຜູ້ໃຫຍ່ | ບໍ່ຂຶ້ນຢູ່ກັບຊີວິດຝ່າຍວິນຍານ |

## II. ຂອງປະທານ ແລະພັນທະກິດຊະນິດຕ່າງໆ

ກ. ຂອງປະທານ ແລະພັນທະກິດ 3 ປະເພດຫລັກ

ພະເຈົ້າບໍ່ໄດ້ຈຳກັດງານຮັບໃຊ້ຂອງເຮົາແຕ່ຂອບເຂດຄວາມສາມາດທີ່ເຮົາໄດ້ຮັບມາຈາກຄອບຄົວຫລືເຮົາຮຽນມາຈາກໂຮງຮຽນໂດຍພະຄຸນຂອງພະເຈົ້າ ພະອົງຊົງບັນຈຸຂອງປະທານໄວ້ໃນຜູ້ເຊື່ອທຸກຄົນ ເພື່ອເຮົາຈະໄດ້ມີຄວາມສາມາດ ພິເສດຊຶ່ງເຮົາເອີ້ນວ່າ "ຂອງປະທານຝ່າຍວິນຍານ" ພະຄຳພີກ່າວເຖິງພັນທະກິດພິເສດ 3 ປະເພດເພື່ອງານຮັບໃຊ້ຂອງເຮົາ

- ເອເຟໂຊ 4:7-16 ກ່າວເຖິງຂອງປະທານໃນການ**ເປັນຜູ້ນຳ** ( ພາສາກຣີກຄື ໂດມ່າ ) ເປັນສິ່ງທີ່ ພະເຢຊູຊົງປະ ທານໃຫ້ຫລັງຈາກທີ່ພະອົງເປັນຂຶ້ນມາຈາກຄວາມຕາຍ ເພື່ອໃຫ້ຄຣິສຕະຈັກໄດ້ຮັບການຝຶກຝົນ ໜູນຈິດຊູໃຈແລະ ຮູ້ຈັກທິດທາງໃນການເຮັດພັນທະກິດ.
- ໂຣມ 12:6-8 ໄດ້ກ່າວເຖິງງານຮັບໃຊ້ພິເສດ 7ຊະນິດ (ພາສາກຣີກຄື ໄດໂຄເນັຽ) ພະຄຳພີກ່າວວ່າຄຣິສຕຽນ ແຕ່ລະຄົນມີຂອງປະທານເຫລົ່ານີ້ຢ່າງນ້ອຍໜຶ່ງຊະນິດ
- 1ໂກຣິນໂທ 12:8-10 ກ່າວເຖິງຂອງປະທານໃນການສຳແດງຂອງພະວິນຍານເກົ້າຊະນິດ ( ພາສາກຣີກຄື ຟາ ເນໂຣຊິສ) ເພື່ອໃຫ້ບັນດາຜູ້ເຊື່ອທັງຫລາຍໃນພະກາຍຂອງພະຄຣິດ ໄດ້ຮັບຄວາມຊ່ວຍເຫລືອ ການນຳພາ ແລະ ການໜູນຈິດຊູໃຈແບບເໜືອທຳມະຊາດ

ນອກເໜືອຈາກຂອງປະທານຫລັກເຫລົ່ານີ້ແລ້ວ ພະຄຳພີຍັງໄດ້ກ່າວເຖິງຂອງປະທານອື່ນໆອີກຫລາຍຊະນິດ ໃນບົດນີ້ເຮົາຈະກ່າວເຖິງຂອງປະທານຝ່າຍວິນຍານ 25 ຊະນິດ ແລະຂັ້ນຕອນໃນການກວດສອບຂອງປະທານ ເພື່ອຜູ້ອ່ານຈະໄດ້ແນ່ໃຈວ່າພະເຈົ້າຊົງປະທານຄວາມສາມາດພິເສດອັນໃດໃຫ້ຕົນເອງແດ່

GCI

ຂ. ລັກສະນະທົ່ວໄປຂອງຂອງປະທານເພື່ອການບົວລະບັດ,ການສຳແດງ,ແລະການເປັນຜູ້ນຳ

1. ອັກຄະສາວົກ ເອເຟໂຊ 4:11

ຄືຜູ້ທີ່ພະເຈົ້າຊົງປະທານຄວາມສາມາດໃຫ້ສຳແດງຄວາມເປັນຜູ້ນຳເໜືອຄຣິສຕະຈັກຫລາຍແຫ່ງ ແລະ ສາມາດນຳພາຄຣິສຕະຈັກໄດ້ໃນເລື່ອງຝ່າຍວິນຍານ 2ໂກຣິນໂທ 12:12 ກ່າວວ່າໂປໂລເຮັດພັນທະກິດໂດຍເຮັດໝາຍສຳຄັນ ແລະການອັດສະຈັນນຳບາງຄົນກ່າວວ່າຂອງປະທານເຫລົ່ານີ້ໄດ້ພົ້ນສະໄໝໄປແລ້ວຕັ້ງແຕ່ຍຸກອັກຄະສາວົກສິບສອງຄົນຕາມ ເອເຟໂຊ 4:11-13 ນັ້ນໂປໂລກ່າວວ່າຂອງປະທານພັນທະກິດທັງຫ້າຈະມີຢູ່ໃນຄຣິສຕະຈັກຈົນກະທັ້ງເຮົາທຸກຄົນບັນລຸເຖິງຄວາມເປັນນ້ຳໜຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງພະເຈົ້າຈົນກວ່າເຮົາທຸກຄົນເຕີບໃຫຍ່ເປັນຜູ້ໃຫຍ່ເຕັມທີ່ຂະນະນີ້ເຮົາຍັງບໍ່ບັນລຸເຖິງຄວາມເປັນນ້ຳໜຶ່ງໃຈດຽວກັນໃນຄວາມເຊື່ອ ດັ່ງນັ້ນໃນທຸກວັນນີ້ເຮົາຈຶ່ງສາມາດຄາດຫວັງທີ່ຈະໄດ້ເຫັນພັນທະກິດຂອງອັກຄະສາວົກໃນຄຣິສຕະຈັກ.

2. ຜູ້ເຜີຍພະຄຳ ເອເຟໂຊ 4:11

ຄືຜູ້ທີ່ຮູ້ຈັກພະໄທຂອງພະເຈົ້າ ແລະເຮັດໜ້າທີ່ເປັນ ຄື ໂຄສົກຂອງພະເຈົ້າ ໂດຍການສຳແດງພະວິນຍານບໍລິສຸດເຮັດໃຫ້ເຂົາສາມາດຮູ້ເຖິງສະຖານນະການນັ້ນໆໃນອາດີດໃນປະຈຸບັນ ແລະອານາຄົດ ຕົວຢ່າງຜູ້ເຜີຍພະວັດຈະນະ ນາທານຮູ້ເຖິງຄວາມບາບທີ່ດາວິດໄດ້ລ່ວງປະເວນີກັບນາງບັດເຊບາ (2 ຊາມູເອລ 12) ຜູ້ເຜີຍພະວັດຈະນະອາກາບັດກໍໄດ້ຮັບການສຳແດງໃຫ້ຮູ້ເຖິງອານາຄົດຂອງໂປໂລ (ກິດຈະການ 21:11)

3. ຜູ້ປະກາດຂ່າວປະເສີດ ເອເຟໂຊ 4:11

ຄືຜູ້ທີ່ໄດ້ຮັບຄວາມສາມາດໃຫ້ນຳຈິດວິນຍານຈຳນວນຫລາຍມາເຖິງພະຄຣິດ ໃນກິດຈະການ 8:5-6 ຖືກເອີ້ນວ່າຜູ້ປະກາດຂ່າວປະເສີດ ຟີລິບ ໄດ້ເດີນທາງໄປສະມາເລັຽແລະເທດສະໜາຢູ່ບ່ອນນັ້ນພ້ອມກັບສຳແດງໝາຍສຳຄັນ ແລະການອັດສະຈັນຕ່າງໆ ຈົນເຮັດໃຫ້ຄົນຈຳນວນຫລາຍໄດ້ຮັບການຮັກສາໂລກແລະໄດ້ຫັນກັບມາເຊື່ອໃນພະເຈົ້າ.

4. ສິດຍາພິບານ ເອເຟໂຊ 4:11

ຄືຜູ້ທີ່ໄດ້ຮັບຄວາມສາມາດເພື່ອໃຫ້ລ້ຽງດູລູກແກະຂອງພະເຈົ້າ ໂດຍການບຳລຸງລ້ຽງປອບໂຍນ ແລະນຳພາເຂົາໄປຕາມທາງຂອງພະຜູ້ເປັນເຈົ້າ.

5. ອາຈານ ເອເຟໂຊ 4:11

ຄືຄົນທີ່ໄດ້ຮັບຄວາມສາມາດທີ່ຈະສື່ສານຄວາມຈິງຂອງພະເຈົ້າໃນລັກສະນະທີ່ປະຊາກອນຂອງພະເຈົ້າສາມາດເຂົ້າໃຈໄດ້ຈົນຊີວິດຂອງພວກເຂົາໄດ້ຈະເລີນເຕີບໃຫຍ່ຂຶ້ນ
ຂໍ້ສັງເກດ- ລຳດັບທີ 15 ນີ້ມັກຈະເອີ້ນກັນວ່າຂອງປະທານແຫ່ງພັນທະກິດທັງຫ້າ.

GCI

6. <u>ຖ້ອຍຄຳປະກອບດ້ວຍປັນຍາ</u> 1 ໂກຣິນໂທ 12:8

ຄືການສຳແດງຂອງພະວິນຍານບໍລິສຸດແກ່ຄົນໃດຄົນນຶ່ງເພື່ອໃຫ້ເຂົາເກີດຄວາມເຂົ້າໃຈທີ່ຈະນຳຄວາມຮູ້ມາປະຍຸກໃຊ້ເພື່ອການເສີມສ້າງພະກາຍຂອງພະຄຣິດ ຕົວຢ່າງ- ພະເຢຊູສາມາດຕອບຄຳຖາມຊຶ່ງເປັນອຸບາຍຂອງພວກຟາລີຊາຍໄດ້ ໃນມັດທາຍ 22:21 "ຂອງຂອງຊີຊາຈົ່ງຖວາຍແກ່ຊີຊາ ສ່ວນຂອງຂອງພະເຈົ້າກໍຈົ່ງຖວາຍແດ່ພະເຈົ້າ"

7. ຖ້ອຍຄຳປະກອບດ້ວຍຄວາມຮູ້ 1 ໂກຣິນໂທ 12:8

ຄືການສຳແດງຂອງພະວິນຍານບໍລິສຸດແກ່ຄົນໃດຄົນໜຶ່ງເພື່ອໃຫ້ເຂົາຮູ້ເຖິງຂໍ້ແທ້ຈິງກ່ຽວກັບສະຖານະການໃດ ໆ ທັ້ງໃນອາດີດ ແລະປະຈຸບັນເພື່ອໃຫ້ພະກາຍຂອງພະຄຣິດໄດ້ຮັບການເສີມສ້າງຮັບການຕັກເຕືອນແກ້ໄຂ ຫລືຮັບການເລົ້າໂລມໃຈ

8. ການສັງເກດວິນຍານ 1ໂກຣິນໂທ 12:10

ເປັນຄວາມສາມາດໃນການວິນິໄສຊຶ່ງມາຈາກພະວິນຍານບໍລິສຸດເພື່ອຈະໄດ້ຮູ້ວ່າສິ່ງທີ່ກຳລັງເກີດຂຶ້ນໃນສະຖານະການນັ້ນໆ ເປັນຜົນມາຈາກວິນຍານຂອງມະນຸດຂອງມານ ຫລືຂອງພະວິນຍານບໍລິສຸດ
ຕົວຢ່າງ- ກິດຈະການ 16:16-18
ຂໍ້ສັງເກດ ລຳດັບທີ່ 6-8 ມັກຈະເອີ້ນກັນວ່າ ຂອງປະທານແຫ່ງການສຳແດງ

9. ການເວົ້າພາສາແປກໆ 1 ໂກຣິນໂທ 12:10

ມີຄວາມສາມາດທີ່ພະເຈົ້າປະທານໃຫ້ແກ່ປະຊາກອນຂອງພະອົງ ເພື່ອໃຫ້ເວົ້າພາສາຕ່າງ ໆ ໄດ້ໂດຍທີ່ບໍ່ເຄີຍຮຽນມາກ່ອນ ຫລາຍຄັ້ງເປັນການເຜີຍພະສຸລະສຽງຂອງພະເຈົ້າໃຫ້ແກ່ຜູ້ເຊື່ອໃນພະອົງໃນສະຖານະການນັ້ນໆ
ຕົວຢ່າງ ກິດຈະການ 16:16-18

10. ການແປ (ຕີຄວາມໝາຍ) ພາສາແປກໆ 1ໂກຣິນໂທ 12:10

ຄືຄວາມສາມາດທີ່ພະເຈົ້າປະທານໃຫ້ແກ່ຜູ້ເຊື່ອໃນພະອົງ ເພື່ອມີຄວາມໝາຍຂອງພາສາແປກໆ ເພື່ອໃຫ້ພະກາຍຂອງພະຄຣິດໄດ້ຮັບຄວາມເຂົ້າໃຈ ແລະຈະເລີນຂຶ້ນຊຶ່ງຕາມທຳມະຊາດແລ້ວຜູ້ແປບໍ່ໄດ້ມີຄວາມຮູ້ໃນພາສານັ້ນໆເລີຍ ແຕ່ເປັນໄປໂດຍການສຳແດງຂອງພະວິນຍານບໍລິສຸດ ຂໍໃຫ້ສັງເກດຄວາມແຕກຕ່າງລະຫວ່າງການຕີຄວາມໝາຍກັບການແປ.

GCI

11. ການເຜີຍພະຄຳ 1ໂກຣິນໂທ 12:10

ຄືຄວາມສາມາດທີ່ພະເຈົ້າປະທານໃຫ້ແກ່ຜູ້ເຊື່ອໃນພະອົງ ເພື່ອສື່ສານຖ້ອຍຄຳຂອງພະອົງໃນເລື່ອງທີ່ກ່ຽວກັບສະຖານະການປະຈຸບັນ ຫລືອານາຄົດ
ຕົວຢ່າງ ກິດຈະການ 21:9 - ລູກສາວ 4 ຄົນຂອງຟີລິບ
ຂໍ້ສັງເກດ ລຳດັບທີ່ 9-11 ມັກຈະເອີ້ນກັນວ່າ ຂອງປະທານແຫ່ງຖ້ອຍຄຳ

12. ຄວາມເຊື່ອ 1 ໂກຣິນໂທ 12:9

ເປັນຄວາມຮູ້ສຶກໝັ້ນໃຈທີ່ພະເຈົ້າປະທານໃຫ້ແກ່ຄົນບາງຄົນ ເພື່ອໃຫ້ເຂົາໃຊ້ຄວາມເຊື່ອໃນພະເຈົ້າໃນທ່າມກາງສະຖານະການທີ່ເບິ່ງຈະເປັນໄປບໍ່ໄດ້ ຕົວຢ່າງ ຈອນ ມູນເລີ ມີຂອງປະທານແຫ່ງຄວາມເຊື່ອໃນການສະແດງຄວາມໄວ້ວາງໃຈໃນພະເຈົ້າເພື່ອໃຫ້ພະອົງຊົງລ້ຽງດູເດັກກຳພ້າໃນໂຄງການຂອງເຂົາໂດຍທີ່ບໍ່ເຄີຍເຫລົ່າເຖິງຄວາມຕ້ອງການຂອງເຂົາໃຫ້ໃຜຟັງເລີຍ

13. ການຮັກສາໂລກ 1 ໂກຣິນໂທ 12:9

ມີຄວາມສາມາດທີ່ພະວິນຍານບໍລິສຸດປະທານໃຫ້ຜູ້ເຊື່ອໃນພະອົງເພື່ອໃຫ້ເຂົາມີລິດເດດທີ່ຈະຮັກສາຄົນເຈັບປ່ວຍໂດຍວິທີການເໜືອທຳມະຊາດຕົວຢ່າງ ກິດຈະການ 3:1-10

14. ການສຳແດງອິດທິລິດ 1 ໂກຣິນໂທ 12:10

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນໃນພະກາຍຂອງພະຄຣິດ ເພື່ອໃຫ້ເຮັດການອັດສະຈັນຊຶ່ງເປັນສິ່ງທີ່ຝືນກັບກົດເກນຂອງທຳມະຊາດ

ຕົວຢ່າງ: ລູກາ 8:24 - ພະເຢຊູຊົງຫ້າມລົມພະຍຸ
ຂໍ້ສັງເກດ: ລຳດັບທີ່ 12-14 ມັກຈະເອີ້ນກັນວ່າ ຂອງປະທານແຫ່ງລິດເດດ

15. ຜູ້ອຸປະກາລະ (ບົວລະບັດ) 1 ໂກຣິນໂທ 12:28, ໂຣມ 12:7

ຄືຄວາມສາມາດທີ່ຊົງປະທານພອນໃຫ້ແກ່ບາງຄົນໃນພະກາຍຂອງພະຄຣິດເພື່ອໃຫ້ໃຊ້ພອນສະຫວັນທີ່ມີຢູ່ເພື່ອເສີມສ້າງພະກາຍຂອງພະຄຣິດ ພວກເຂົາຈະເຮັດໜ້າທີ່ຊ່ອຍເຫລືອການກະຕຸ້ນກຳລັງໃຈ ແລະແຮງບັນດານໃຈຜ່ານທາງຊີວິດຂອງພວກເຂົາ
ຕົວຢ່າງ: ກິດຈະການ 6:1-4 ,ກິດຈະການ 9:36

GCI

16. ການໜູນໃຈ ໂຣມ 12:8

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນໃນພະກາຍຂອງພະຄຣິດ ເພື່ອໃຫ້ຄົນອື່ນໆໄດ້ຮັບການຊ່ວຍເຫລືອການກະຕຸ້ນກຳລັງໃຈ ແລະແຮງບັນດານໃຈຜ່ານທາງຊີວິດຂອງພວກເຂົາ

17. ການໃຫ້ ໂຣມ 12:8

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນໃນພະກາຍຂອງພະຄຣິດ ເພື່ອໃຫ້ເຂົາສະໜັບສະໜູນງານຂອງພະເຈົ້າໃຫ້ກ້າວໜ້າໂດຍການຖວາຍເງິນທອງ ຫລືຊັບສິ່ງຂອງຕ່າງໆ

18. ການເປັນຜູ້ນຳ ໂຣມ 12:8
ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນໃນພະກາຍຂອງພະຄຣິດເພື່ອໃຫ້ເຂົານຳພາ (ບໍ່ແມ່ນບັງຄັບ) ຄົນອື່ນໆໄປຈົນເຖິງເປົ້າໝາຍທີ່ພະເຈົ້າຊົງປະທານໃຫ້ ກິດຈະການ 15:13,19

19. ການສະແດງຄວາມເມດຕາ ໂຣມ 12:8

ເປັນຄວາມຮູ້ສຶກເມດຕາສົງສານຊຶ່ງພະເຈົ້າຊົງປະທານໃຫ້ແກ່ບາງຄົນ ເພື່ອໃຫ້ເຂົາມີຄວາມເຫັນອົກເຫັນໃຈຄົນທີ່ຕົກທຸກໄດ້ຍາກ ຈົນຕ້ອງລົງມືຊ່ວຍເຫລືອປອບໂຍນ ຫລືເສີມກຳລັງຜູ້ທີ່ກຳລັງທຸກຍາກເຫລົ່ານັ້ນ ການກະທຳຂອງພວກເຂົາຈະຊ່ວຍໃຫ້ຄົນທັງຫລາຍໄດ້ສຳຜັດກັບຄວາມຮັກ ແລະຄວາມເມດຕາຂອງພະຄຣິດ

ຕົວຢ່າງ: ແມ່ຊີເທຣ໌ຊາ

ຂໍ້ສັງເກດ: ລຳດັບທີ 15-19 ມັກຈະເອີ້ນກັນວ່າ ຂອງປະທານແຫ່ງການບັນດານໃຈ

20. ການຮັບຮອງແຂກ ໂຣມ 12:13

ຄືຄວາມມີນ້ຳໃຈໂອບອ້ອມອາລີ ຊຶ່ງຊ່ວຍໃຫ້ບາງຄົນສາມາດຈັດຕຽມທີ່ພັກ ແລະອາຫານໃຫ້ແກ່ຜູ້ຍາກໄຮ້ ເພື່ອເຮັດໃຫ້ເຂົາຮູ້ສຶກຄືກັບຢູ່ໃນບ້ານຂອງຕົນເອງ

21. ການບໍລິຫານຈັດການ 1ໂກຣິນໂທ 12:28

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນເພື່ອຊ່ວຍໃຫ້ພະກາຍເຮັດໜ້າທີ່ໄດ້ຢ່າງລາບລື້ນ ທັກສະໃນທາງການບໍລິຫານຂອງເຂົາສາມາດເຮັດໃຫ້ແຜນງານ ແລະເປົ້າໝາຍຂອງຄຣິສຕະຈັກບັນລຸຄວາມສຳເລັດໄດ້

22. ການຄອງໂສດ ມັດທາຍ 19:10-12

GCI

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນເຮັດໃຫ້ເຂົາຮູ້ສຶກເພິ່ງພໍໃຈໃນການຄອງຊີວິດໂສດ ແລະ ສາມາດທຸ້ມເທຊີວິດເພື່ອພະກິດຄຸນໄດ້ຢ່າງເຕັມທີ່ໂດຍບໍ່ຕ້ອງກັງວົນເຖິງເລື່ອງຄອບຄົວ

23. ການອະທິຖານເພື່ອ ລູກາ 2:36-37

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນໃນພະກາຍຂອງພະຄຣິດ ເພື່ອໃຫ້ເຂົາທຸ້ມເທໃນການອະທິຖານ ແລະການວິງວອນ

24. ນັກດົນຕຣີ 1ໂກຣິນໂທ 15:20-21

ຄືຄວາມສາມາດທີ່ຊົງປະທານໃຫ້ແກ່ບາງຄົນເພື່ອບົວລະບັດພະເຈົ້າ ແລະຜູ້ເຊື່ອໃນພະອົງ ໂດຍເຮັດໜ້າທີ່ສະໜັບສະໜູນໃນເລື່ອງການນະມັດສະການພະເຈົ້າ.

25. ນັກຮ້ອງ 1ໂກຣິນໂທ 15:16

ເປັນຄວາມສາມາດໃນການຮັບໃຊ້ດ້ານສຽງເພັງເພື່ອບົວລະບັດພະເຈົ້າ ແລະປະຊາກອນຂອງພະອົງ

## III. ການສຶກສາເຖິງເລື່ອງຂອງປະທານແຫ່ງການສຳແດງ ໃນພະທຳ 1ໂກຣິນໂທ 12:8-10

ກ. ລາຍລະອຽດຕ່າງໆ ຂອງຂອງປະທານ

ການຟື້ນຟູຝ່າຍວິນຍານທີ່ກຳລັງເກີດຂຶ້ນທົ່ວໄປໃນໂລກໃນເວລານີ້ຖືກເອີ້ນວ່າ "ການຟື້ນຟູແບບຄຣິສເມຕິດ" ຄຳນີ້ຖືກໃຊ້ເພື່ອອະທິບາຍເຖິງອົງປະກອບທີ່ສຳຄັນຍິ່ງຂອງການຟື້ນຟູຄັ້ງນີ້ ນັ້ນຄືການທີ່ "ຂອງປະທານ (ພາສາກຣີກໃຊ້ຄຳວ່າ ຄາຣິສມາ) ຂອງພະວິນຍານບໍລິສຸດ" ໄດ້ຮັບການຟື້ນກັບມາສູ່ຄຣິສຕະຈັກອີກຄັ້ງໜຶ່ງ ເປັນເຫດໃຫ້ເກີດປາກົດການຕ່າງໆ ອັນເຕັມດ້ວຍລິດເດດຊຶ່ງເຄີຍເກີດຂຶ້ນຢ່າງເດ່ນຊັດໃນຄຣິສຕະຈັກຍຸກທຳອິດ ການສຳແດງຫລືຂອງປະທານຂອງພະວິນຍານບໍລິສຸດ ໄດ້ຫາຍສາບສູນໄປຈາກຄຣິສຕະຈັກມາເປັນເວລາຫລາຍສັດຕະວັດໃນໄລຍະ 50 ປີທີ່ຜ່ານມາ ພະເຈົ້າໄດ້ຊົງຣື້ຟື້ນປາກົດການເຫລົ່ານີ້ໃຫ້ກັບມາສູ່ຄຣິສຕະຈັກ ແລະພະອົງຊົງເລັ່ງແຜນການນີ້ຢ່າງເດັ່ນຊັດໃນໄລຍະ 20 ປີ ທີ່ຜ່ານມານີ້.

ການຟື້ນຟູແບບແຄລິດສະມາຕິກ ໄດ້ແຊກຊຶມໄປສູ່ຄຣິສຕະຈັກໃນທຸກຊອກທຸກມຸມເປັນເຫດໃຫ້ພະກາຍຂອງພະຄຣິດໄດ້ສຳຜັດກັບລິດເດດ ແລະກັບມີຊີວິດຊີວາຂຶ້ນມາອີກຄັ້ງໜຶ່ງ ການຟື້ນຟູພະພອນໃນເລື່ອງນີ້ເຮັດໃຫ້ເກີດຄວາມຈື່ຈຳຢ່າງໃຫຍ່ຫລວງທີ່ເຮົາຈະຕ້ອງຟ້າວສັ່ງສອນໃນເລື່ອງທີ່ສຳຄັນຍິ່ງເຫລົ່ານີ້

ໂປໂລກ່າວກັບຄຣິສຕະຈັກທີ່ເມືອງໂກຣິນໂທວ່າ "ຂ້າພະເຈົ້າຢາກໃຫ້ທ່ານເຂົ້າໃຈເລື່ອງຂອງປະທານຝ່າຍພະວິນຍານນັ້ນ(ບໍ່ຢາກໃຫ້ເປັນຄົນທີ່ບໍ່ຮູ້ເລື່ອງຮູ້ລາວ)" (1 ໂກຣິນໂທ 12:1) .

GCI

1. ປະເພດຕ່າງໆຂອງຂອງປະທານ

ມີຂອງປະທານແບບແຄລິດສະມາຕິກຫລາຍຊະນິດຊຶ່ງກ່າວໄວ້ໃນພະຄຳພີ ຂໍ້ພະຄຳພີທີ່ອ້າງອີງກັນເປັນຫລັກໄດ້ແກ່ ໂຣມ 12:3-9 , 1ໂກຣິນໂທ 12:8-10, 28-30, ເອເຟໂຊ 4:11

ສຳລັບບົດຮຽນນີ້ເຮົາຈະຈຳກັດການພິຈາລະນາໄວ້ພຽງເລື່ອງຂອງປະທານພະວິນຍານບໍລິສຸດ 9 ຊະນິດຕາມທີ່ກ່າວໄວ້ໃນ 1 ໂກຣິນໂທ 12 ເທົ່ານັ້ນ

ເພື່ອໃຫ້ງ່າຍແກ່ການສຶກສາ ເຮົາຈະແບ່ງຂອງປະທານອອກເປັນ 3 ກຸ່ມຄື:

ກ) ຂອງປະທານດ້ານຖ້ອຍຄຳ
   1) ພາສາແປກໆ
   2) ການແປພາສາແປກໆ
   3) ການເຜີຍພະວັດຈະນະ

ຂ) ຂອງປະທານແຫ່ງຄຳສຳແດງ
   1. ຖ້ອຍຄຳປະກອບດ້ວຍສະຕິປັນຍາ
   2. ຖ້ອຍຄຳປະກອບດ້ວຍຄວາມຮູ້
   3. ການສັງເກດວິນຍານ

ຄ) ຂອງປະທານດ້ານຄວາມສາມາດ
   1) ຄວາມເຊື່ອ
   2) ການຮັກສາໂລກ
   3) ການເຮັດການອິດທິລິດ

2. ພະວິນຍານຈະຊົງໃຊ້ໃຜໃນການສຳແດງຂອງປະທານ

ກ) ຜູ້ທີ່ເປັນອະໄວຍະວະໃນພະກາຍຂອງພະຄຣິດສາມາດໃຊ້ຂອງປະທານໄດ້ (1ໂກຣິນໂທ 12:7,11,14,26,31) ບໍ່ຄວນມີອະໄວຍະວະສ່ວນໃດທີ່ຫລ້າຫລັງໃນການໃຊ້ຂອງປະທານ (1 ໂກຣິນໂທ 1:7)

ຂ) ເຮົາຄວນເຕັມລົ້ນດ້ວຍພະວິນຍານບໍລິສຸດ (ເອເຟໂຊ 5:18)

ຄ) ເຮົາຕ້ອງມີໃນປາດຖະນາທີ່ຈະໃຫ້ພະເຈົ້າຊົງໃຊ້ໃນເລື່ອງຂອງປະທານ (1 ໂກຣິນໂທ 12:31)

ງ) ເຮົາຈະຕ້ອງບໍ່ເພີກເສີຍ ຫລືເຮັດບໍ່ຮູ້ເລື່ອງຮູ້ລາວ ກ່ຽວກັບການໃຊ້ຂອງປະທານ (1 ໂກຣິນໂທ 12:1)

ຈ) ເຮົາຈະຕ້ອງມີໃຈປາດຖະນາຢາກໄດ້ຂອງປະທານ (1 ໂກຣິນໂທ 14:1-6)

GCI

ສ) ເຮົາຄວນມີແຮງບັນດານໃຈທີ່ເກີດຈາກຄວາມຮັກແທ້ທີ່ມີຕໍ່ພະກາຍຂອງພະຄຣິດ (1 ໂກຣິນໂທ 13) ແລະມີຄວາມປາດຖະໜາອັນບໍລິສຸດທີ່ຈະເສີມສ້າງພະກາຍໃຫ້ຈະເລີນຂຶ້ນ (1ໂກຣິນໂທ 14:12)

ຊ) ເຮົາຄວນສະແຫວງຫາຊ່ອງທາງທີ່ຈະມີຄວາມຊຳນານໃນເລື່ອງການໃຊ້ຂອງປະທານ (1 ໂກຣິນໂທ 14:12)

3. ການເວົ້າພາສາແປກໆ (1ໂກຣິນໂທ 12:10)

ກ) ມີການໃຊ້ງານ 2 ປະທານຄື

ປະການທຳອິດເປັນພາສາທີ່ໃຊ້ເພື່ອການອະທິຖານສ່ວນຕົວ ຈຸດປະສົງໃນການໃຊ້ຄືເພື່ອເສີມສ້າງຜູ້ທີ່ເວົ້າໃຫ້ຈຳເລີນຂຶ້ນປະການທີ່ສອງ ໃຊ້ເປັນຂອງປະທານແຫ່ງການເວົ້າພາສາແປກໆ ຊຶ່ງຕ້ອງໃຊ້ຄວບຄູ່ກັບຂອງປະທານໃນການແປພາສາ ເພື່ອເສີມສ້າງທຸກຄົນໃນຄຣິສຕະຈັກ ລວມທັງຄົນທີ່ເຂົ້າໃຈພາສານັ້ນໆ

ຂ) ແນວທາງໃນການໃຊ້ຂອງປະທານພາສາແປກໆ ໃນທີ່ປະຊຸມ:

1. ຕ້ອງໃຊ້ດ້ວຍທ່າທີແຫ່ງຄວາມຮັກ (1 ໂກຣິນໂທ 13:1)
2. ຄວນມີການແປພາສານຳ (1ໂກຣິນໂທ 14:5,13:28)
3. ໃນທີ່ປະຊຸມໃຫຍ່ ຄວນມີການເວົ້າບໍ່ເກີນ 2-3 ຄົນ ໂດຍໃຫ້ເວົ້າເທື່ອລະຄົນ (1ໂກຣິນໂທ 14:27)

ຈົ່ງຮຽນຮູ້ທີ່ຈະຍອມຈຳນົນຕໍ່ພະວິນຍານ ພະຍາຍາມຜ່ອນຄາຍຈິດໃຈ ແລະເປີດໃຈຕໍ່ອົງພະວິນຍານ ພະຍາຍາມພັດທະນາຄວາມໄວຕໍ່ການເຄື່ອນໄຫວຂອງພະວິນຍານໃນການປະຊຸມນະມັດສະການແຕ່ລະ ຄັ້ງ

ທ່ານບໍ່ຈຳເປັນຕ້ອງເວົ້າອອກມາໃນທັນທີທັນໃດ ເພາະວ່າວິນຍານຂອງຜູ້ເຜີຍພະວັດຈະນະ ຍ່ອມຢູ່ພາຍໃຕ້ ຍ່ອມຢູ່ພາຍໃຕ້ການຄວບຄຸມຂອງຜູ້ເຜີຍພະວັດຈະນະ (1ໂກຣິນໂທ 14:32) ທ່ານອາດຈະລໍຢູ່ຢ່າງງຽບໆ ຈົນເຖິງເວລາທີ່ເໝາະສົມທີ່ຈະເວົ້າ ແລ້ວພະວິນຍານກໍຈະກະຕຸ້ນໃຫ້ທ່ານຮູ້ໄດ້ຢ່າງຊັດເຈນ ພະອົງຈະບໍ່ຂັດຈັງຫວະເຫດການໃດໆທີ່ກຳລັງເກີດຂຶ້ນໃນບ່ອນປະຊຸມໃນເວລານັ້ນ ເພາະພະອົງບໍ່ໄດ້ເປັນພະເຈົ້າແຫ່ງຄວາມວຸ້ນວາຍ (1ໂກຣິນໂທ 14:1-33)

ສະຫງົບ ແລະຜ່ອນຄາຍເມື່ອພະວິນຍານຊົງນຳແລ້ວກໍໃຫ້ເວົ້າອອກໄປດ້ວຍນ້ຳສຽງທຳມະດາ ແຕ່ໃຫ້ຊັດເຈນ ທ່ານບໍ່ຈຳເປັນຕ້ອງຮ້ອງສຽງດັງ

GCI

4. ການແປພາສາແປກໆ (1 ໂກຣິນໂທ 12:10)

ການແປ ເປັນຂອງປະທານທີ່ໃຊ້ຄູ່ກັນກັບການເວົ້າພາສາແປກໆ ມັນເປັນຄວາມສາມາດທີ່ເໜືອທຳມະຊາດຊຶ່ງມາຈາກພະວິນຍານບໍລິສຸດເພື່ອໃຫ້ຕີຄວາມໝາຍຂອງພາສາທີ່ເວົ້າອອກມາເປັນພາສາຊຶ່ງຜູ້ຮ່ວມປະຊຸມນະມັດສະການຮູ້ ແລະເຂົ້າໃຈຂອງປະທານນີ້ບໍ່ແມ່ນການແປ (ຄືແປເອກະສານ) ແຕ່ເປັນການຕີຄວາມໝາຍ ເພາະຜູ້ທີ່ໃຊ້ຂອງປະທານນີ້ບໍ່ໄດ້ມີຄວາມຮູ້ເຖິງພາສາທີ່ກຳລັງເວົ້ານັ້ນເລີຍ

ກ) ໃຜແດ່ທີ່ໃຊ້ຂອງປະທານນີ້ໄດ້?

ການແປພາສາແປກໆ ເປັນສິ່ງທີ່ເກີດຂຶ້ນກັບເຮົາໄດ້ "ຕາມຊອບພະໄທ" ຂອງພະວິນຍານ (1 ໂກຣິນໂທ 12:11) ຜູ້ເຊື່ອທີ່ເຕັມລົ້ນດ້ວຍພະວິນຍານທຸກຄົນອາດໄດ້ຮັບການເລືອກສັນ ແລະຊົງເຈີມໃຫ້ສຳແດງເຖິງຂອງປະທານດັ່ງກ່າວນີ້ຜູ້ທີ່ເວົ້າພາສາແປກໆໄດ້ຮັບຄຳສັ່ງຈາກພະຄຳພີແລ້ວວ່າ "ຄົນທີ່ເວົ້າພາສາແປກໆໄດ້ນັ້ນ ຄວນຈະອະທິຖານຂໍໃຫ້ແປໄດ້ນຳ" (1 ໂກຣິນໂທ 14:13)

ເມື່ອມີຄົນເວົ້າພາສາແປກໆອອກມາແລ້ວ ໃຫ້ທ່ານລໍຖ້າງຽບໆຈົນເຂົາເວົ້າຈົບ ເມື່ອທ່ານເລີ່ມຕົ້ນແປນັ້ນບາງທີທ່ານອາດຈະມີຄວາມເຂົ້າໃຈພຽງແຕ່ປະໂຫຍກດຽວ ແລະມີແນວຄິດວ່າເນື້ອຄວາມຕໍ່ໄປຈະເປັນເລື່ອງໃດ ຊຶ່ງທ່ານຈະຕ້ອງໃຊ້ຄວາມເຊື່ອໃນການແປ ເຊັ່ນດຽວກັນກັບຂອງປະທານອື່ນໆ ເມື່ອທ່ານເລີ່ມເວົ້າຄຳແປອອກໄປຂໍໃຫ້ໃຊ້ນ້ຳສຽງປົກກະຕິທຳມະດາ ແຕ່ຊັດເຈນລະວັງຢ່າເວົ້າ "ເກີນຂະໜາດຄວາມເຊື່ອຂອງທ່ານ" (ໂຣມ 12:6)

ເມື່ອເຮັດການແປສຳເລັດແລ້ວ ແລະທ່ານຮູ້ສຶກວ່າພະວິນຍານໄດ້ຕັດສິ່ງທີ່ປະສົງຈະຕັດຄົບຖ້ວນແລ້ວ ກໍຈົ່ງຢຸດເວົ້າຢ່າພະຍາຍາມອະທິບາຍຄວາມໝາຍຂອງຄຳແປ ຫລືສະແດງ "ຄວາມຄິດເຫັນ" ວ່າຄຳແປນັ້ນໝາຍຄວາມວ່າຢ່າງໃດ ຈົ່ງປ່ອຍໃຫ້ພະວິນຍານໄດ້ເຮັດການເລົ້າໂລມ ຫລືໜູນຈິດຊູໃຈພີ່ນ້ອງດ້ວຍຂໍ້ຄວາມເຫລົ່ານັ້ນເອງ

ຖ້າມີຜູ້ເຊື່ອຄົນໃດຊຶ່ງພະເຈົ້າຊົງໃຊ້ຢູ່ສະເໝີໃນຂອງປະທານແຫ່ງຖ້ອຍຄຳຢູ່ໃນບ່ອນປະຊຸມນັ້ນກໍໃຫ້ເຂົາລອງວິນິໄສເບິ່ງວ່າຖ້ອຍຄຳເຫລົ່ານັ້ນມາຈາກພະເຈົ້າແມ່ນ ຫລືບໍ່ແມ່ນ (1 ໂກຣິນໂທ 14:29)

5. ການເຜີຍພະວັດຈະນະ (1 ໂກຣິນໂທ 12:10,13)

ຖ້າຈະແປຢ່າງງ່າຍໆ ຄຳວ່າເຜີຍພະວັດຈະນະໝາຍເຖິງ "ການກ່າວຖ້ອຍຄຳທີ່ໄດ້ຮັບການດົນໃຈອອກມາ" ຕາມພະທຳ 1ໂກຣິນໂທ 14:31 ນັ້ນ ຜູ້ເຊື່ອທຸກຄົນອາດຈະໃຊ້ຂອງປະທານດັ່ງກ່າວນີ້ໄດ້ເປັນຄັ້ງຄາວ ຕາມທີ່ພະວິນຍານຈະຊົງໂປດ

ແຕ່ລະຄົນສາມາດເຜີຍພະວັດຈະນະໄດ້ ໂດຍເຜີຍເທື່ອລະຄົນ ແລະບໍ່ເກີນຄັ້ງລະສາມຄົນໃນການປະຊຸມແຕ່ລະຄັ້ງເພາະມີອີກຫລາຍຄົນທີ່ກຳລັງລໍທີ່ຈະໃຊ້ຂອງປະທານຢູ່(1 ໂກຣິນໂທ 14:29,33)

GCI

ກ) ຈຸດປະສົງຂອງການເຜີຍພະວັດຈະນະໄດ້ແກ່

1) ເພື່ອເສີມສ້າງ - ໝາຍເຖິງເພື່ອເຮັດໃຫ້ຜູ້ເຊື່ອຈະເລີນ ແລະເຂັ້ມແຂງຂຶ້ນ
2) ເພື່ອຕັກເຕືອນ - ກະຕຸ້ນເຕືອນ ປະເຊີນໜ້າ ແລະທ້າທາຍຜູ້ເຊື່ອ
3) ເພື່ອເລົ້າໂລມໃຈ - ເປັນການເວົ້າແບບໜູນຈິດຊູໃຈ ແລະເລົ້າໂລມ
ຫລາຍຄັ້ງ ການເຜີຍພະວັດຈະນະປະກອບໄປດ້ວຍຖ້ອຍຄຳທັງສາມດ້ານນີ້

ຂ) ຄວາມເຂົ້າໃຈຜິດ 3 ປະການກ່ຽວກັບການເຜີຍພະວັດຈະນະ

1. ການເຜີຍພະວັດຈະນະ ບໍ່ແມ່ນສິ່ງດຽວກັນກັບການເທດສະໜາ
ຫລາຍຄົນຢືນຢັນວ່າ ຂອງປະທານແຫ່ງການເຜີຍພະວັດຈະນະ ຄືການມີຄວາມສາມາດທີ່ຈະເທດສະໜາໄດ້ດີ ການເທດສະໜາ ແລະສັ່ງສອນນັ້ນ ເປັນຜົນຈາກການໃຊ້ເວລາໄຄ່ຄວນພາວະນາໃນພະວັດຈະນະຂອງພະເຈົ້າ ໂດຍການຕຽມຈິດໃຈແລະວິນຍານເປັນຢ່າງດີ ນັກເທດຈະສາມາດເຮັດໃຫ້ຜູ້ຟັງເຂົ້າໃຈພະວັດຈະນະພະເຈົ້າໄດ້

ແຕ່ກົງກັນຂ້າມ ຂອງປະທານແຫ່ງການເຜີຍພະວັດຈະນະບໍ່ໄດ້ເກີດຈາກການສຶກສາພະຄຳພີມາເປັນຢ່າງດີຕາມປົກກະຕິແລ້ວ ການເຜີຍພະວັດຈະນະເປັນການເວົ້າອອກໄປໃນທັນທີທັນໃດໂດຍການເຈີມຂອງພະວິນຍານ ໂດຍທີ່ຜູ້ເວົ້າ ໂດຍທີ່ຜູ້ເວົ້າບໍ່ໄດ້ຄິດກະຕຽມຂໍ້ຄວາມໄວ້ລ່ວງໜ້າ

2. ການເຜີຍພະວັດຈະນະບໍ່ແມ່ນການນວາຍເຖິງສິ່ງທີ່ຈະເກີດຂຶ້ນໃນອານາຄົດ
ຂອງປະທານຊະນິດນີ້ ເປັນການກ່າວຖ້ອຍຄຳອອກໄປຕາມການຊົງນຳຫລາຍກວ່າການທຳນວາຍເຖິງສິ່ງທີ່ຈະເກີດຂຶ້ນ ຈຸດປະສົງຂອງຂອງປະທານນີ້ຄື ເພື່ອເສີມສ້າງຕັກເຕືອນ ແລະໜູນຈິດຊູໃຈ ບໍ່ແມ່ນເພື່ອການທຳນວາຍເຖິງສິ່ງທີ່ຈະເກີດຂຶ້ນໃນອານາຄົດ (1ໂກຣິນໂທ 14:3)

ແຕ່ຖ້າມີການທຳນວາຍເຂົ້າມາກ່ຽວຂ້ອງກັບການເຜີຍພະວັດຈະນະ ກໍເປັນເພາະວ່າມີການໃຊ້ຂອງປະທານອື່ນ(ເຊັ່ນ ຖ້ອຍຄຳປະກອບດ້ວຍຄວາມຮູ້ ຫລືສະຕິປັນຍາ) ເຂົ້າມາປະສົມປະສານນຳ

3. ຂອງປະທານຊະນິດນີ້ບໍ່ໄດ້ມີໄວ້ເພື່ອຊີ້ນຳທິດທາງໃນຊີວິດສ່ວນຕົວ ຖ້າເຮົາຕ້ອງການການຊົງນຳຈາກພະເຈົ້າເຮົາຄວນອະທິຖານທູນຂໍຕໍ່ພະເຢຊູໂດຍກົງ(ຢາກອບ 1:5)

ຄ) ຄຳສອນຈາກພະຄຳພີກ່ຽວກັບຂອງປະທານແຫ່ງການເຜີຍພະວັດຈະນະ

1) ການເຜີຍພະວັດຈະນະຄືການກ່າວຖ້ອຍຄຳແບບເໜືອທຳມະຊາດຕໍ່ມະນຸດ (1ໂກຣິນໂທ 14:3)
ເປັນການຖ່າຍທອດໃຫ້ຄຣິສຕະຈັກຮູ້ເຖິງສິ່ງທີ່ຢູ່ໃນພະໄທຂອງພະເຈົ້າ ຜູ້ເຜີຍພະວັດຈະນະກ່າວກັບບັນດາຜູ້ເຊື່ອແທນພະເຈົ້າ ເພື່ອເສີມສ້າງ ຕັກເຕືອນ ແລະໜູນຈິດຊູໃຈເຂົາ

GCI

2) ຄຳເຜີຍພະວັດຈະນະ ບໍ່ຈຳເປັນຕ້ອງມີການແປຄວາມໝາຍ ການເວົ້າພາສາແປກໆ ຈຳເປັນຕ້ອງມີການແປແຕ່ການເຜີຍພະວັດຈະນະບໍ່ຈຳເປັນຕ້ອງແປ

3) ການເຜີຍພະວັດຈະນະເຮັດໃຫ້ຄົນທີ່ຍັງບໍ່ເຊື່ອໄດ້ຮູ້ສຶກສຳນຶກ (1ໂກຣິນໂທ 14:15-16) ໂດຍທາງຂອງປະທານນີ້ ຜູ້ທີ່ຍັງບໍ່ເຊື່ອຈະ..

* ເກີດຄວາມຮູ້ສຶກສຳນຶກເຖິງຄວາມຜິດບາບ ແລະຕັດສິນຕົນເອງ
  - ຄວາມລັບຊຶ່ງຊ້ອນຢູ່ໃນໃຈຂອງເຂົາຈະເປີດເຜີຍອອກມາ
  - ເຂົາຈະໝອບກາບລົງຕໍ່ພະພັກພະເຈົ້າດ້ວຍຄວາມຖ່ອມໃຈ
  - ເຂົາຈະຍອມຮັບວ່າ ແທ້ຈິງພະເຈົ້າຊົງສະຖິດຢູ່ທ່າມກາງທ່ານທັງຫລາຍ
  - ເຂົາຈະນະມັດສະການພະເຈົ້າ

4) ເມື່ອມີການເຜີຍພະວັດຈະນະ ຜູ້ເຊື່ອຈະໄດ້ຮັບການຮຽນຮູ້(1ໂກຣິນໂທ 14:31) ນີ້ບໍ່ແມ່ນເລື່ອງຂອງການສອນຊຶ່ງຕາມປົກກະຕິຈະເກີດຈາກການອະທິບາຍພະວັດຈະນະຂອງພະເຈົ້າໂດຍຂອງປະທານພັນທະກິດອາຈານ ແຕ່ເປັນການຮຽນຮູ້ເຖິງສັດຈະທຳຝ່າຍວິນຍານຜ່ານທາງການຊົງເຈີມຂອງພະວິນຍານກ່ອນທີ່ຈະນຳສັດຈະທຳລັກສະນະນີ້ໄປໃຊ້ຈະຕ້ອງເຮັດການພິສູດເສັຽກ່ອນໂດຍໃຊ້ພະຄຣິສຕະທຳຄຳພີເປັນແກນ

5) ທຸກຄົນຄວນປາດຖະໜາ ແລະຢາກໄດ້ຂອງປະທານຊະນິດນີ້ (1ໂກຣິນໂທ 14:31) ໂດຍຂອງປະທານຊະນິດນີ້ພະເຈົ້າອາດຈະຊົງໃຊ້ເຮົາໃນການໜູນຈິດຊູໃຈປະຊາກອນຂອງພະອົງ

6) ຄົນທີ່ໃຊ້ຂອງປະທານຈະຕ້ອງຮັບຜິດຊອບໃນການໃຊ້ (1ໂກຣິນໂທ 14:32) ການເຜີຍພະວັດຈະນະບໍ່ແມ່ນຂອງປະທານທີ່ເຮົາຄວບຄຸມບໍ່ໄດ້ ຜູ້ທີ່ເຜີຍພະວັດຈະນະກໍບໍ່ໄດ້ຕົກຢູ່ໃນອາການພະວັງ ຫລືຖືກຄວບຄຸມຄວາມຄິດຈິດໃຈແຕ່ຢ່າງໃດເຂົາບໍ່ໄດ້ເວົ້າຫລືເຮັດສິ່ງໃດທີ່ຕ້ອງຝືນໃຈຕົວເອງ ຂອງປະທານແຫ່ງການເຜີຍພະວັດຈະນະຍ່ອມຢູ່ໃຕ້ການຄວບຄຸມຂອງຜູ້ເຜີຍພະວັດຈະນະນັ້ນ ຜູ້ທີ່ເຜີຍພະວັດຈະນະເປັນຜູ້ກ່າວຖ້ອຍຄຳແທນພະເຈົ້າ ແລະຜູ້ເຜີຍພະວັດຈະນະສາມາດທີ່ຈະຄວບຄຸມຖ້ອຍຄຳທີ່ຕົວເອງກ່າວອອກມາໄດ້ຕະຫລອດເວລາ

7) ເນື່ອງຈາກຜູ້ທີ່ເຜີຍພະວັດຈະນະເຮັດຜິດພາດໄດ້ເຂົາຈຶ່ງຕ້ອງມີການວິນິໄສຄຳເຜີຍພະວັດຈະນະ (1ໂກຣິນໂທ 14,29) ຕ້ອງສັງເກດເບິ່ງ ສະເທລີຍທຳບັນຍັດ 18:20-22 ເຢເລມີ 14:14,15,23.30)

8) ແນວທາງໃນການວິນິໄສຖ້ອຍຄຳເຜີຍພະວັດຈະນະ
   - ຄຳເຜີຍພະວັດຈະນະຈະຕ້ອງບໍ່ຂັດແຍ້ງກັບພະວັດຈະນະທີ່ຂຽນໄວ້ແລ້ວ (ພະຄຳພີ) ດັ່ງນັ້ນ ຄຳເຜີຍພະວັດຈະນະທຸກຄັ້ງຈະຕ້ອງຜ່ານການທົດສອບໂດຍພະວັດຈະນະຂອງພະເຈົ້າ ພະເຈົ້າຍ່ອມບໍ່ໃຊ້ຄຳເຜີຍພະວັດຈະນະມາສັ່ງໃຫ້ເຮົາເຮັດສິ່ງໃດທີ່ພະຄຳຫ້າມໄວ້
   - ຄຳເຜີຍພະວັດຈະນະຈະຕ້ອງຍົກຍ້ອງເຊີດຊູພະເຢຊູຄຣິດສະເໝີ ບໍ່ຫລົບລູ່ພະອົງ

GCI

- ຄຳເຜີຍພະວັດຈະນະຄວນເປັນສິ່ງເຕືອນສະຕິ ເສີມສ້າງແລະໜູນຈິດຊູໃຈໃນຜູ້ເຊື່ອ ບໍ່ຄວນເຮັດໃຫ້ຜູ້ເຊື່ອສັບສົນ ທໍ້ໃຈ ຫລືຂາດຄວາມໝັ້ນໃຈ
- ໃນການເຜີຍພະວັດຈະນະຄວນມີຜູ້ເຊື່ອທີ່ເຂັ້ມແຂງຢູ່ຮ່ວມນຳ ໂດຍສະເພາະຢ່າງຍິ່ງຜູ້ເຊື່ອທີ່ມີຄວາມເປັນຜູ້ໃຫຍ່ ແລະຄຸ້ນເຄີຍກັບການໃຊ້ຂອງປະທານນີ້ເປັນຢ່າງດີ
- ການເຜີຍພະວັດຈະນະບໍ່ຄວນເຮັດຕາມບັນຍາກາດຂອງການປະຊຸມ ແຕ່ອາດປ່ຽນທິດທາງຂອງການນະມັດສະການໄປ
- ຖ້າເປັນການເຜີຍພະວັດຈະນະຊຶ່ງພະຍາກອນສິ່ງຕ່າງໆກໍຄວນເກີດຂຶ້ນຕາມນັ້ນແທ້ໆ
- ການເຜີຍພະວັດຈະນະຄວນຜ່ານການທົດສອບເລື່ອງ "ຜົນ" (ມັດທາຍ 7:16) ພະເຢຊູຕັດເຖິງຜູ້ເຜີຍພະວັດຈະນະທຽມເທັດໄວ້ວ່າ "ທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ" ເຮົາຕ້ອງຮູ້ຈັກປົກປ້ອງລູກແກະຈາກສິ່ງທີ່ອ້າງວ່າເປັນການເຜີຍພະວັດຈະນະຂອງຄົນຊຶ່ງດຳເນີນຊີວິດຢ່າງບໍ່ຖະຫວາຍກຽດແກ່ພະຄຣິດ

9) ວິທີການເຜີຍພະວັດຈະນະ ຈົ່ງເຮັດໃຫ້ຕົວເອງຜ່ອນຄາຍ ບໍ່ເຄັ່ງຄຽດ ຈົ່ງລໍຄອຍພະເຈົ້າໃນວິນຍານທີ່ງຽບສະຫງົບໃຫ້ຈິດໃຈເປີດລໍຄອຍພະສຸລະສຽງຂອງພະອົງ. ຢ່າເຜີຍພະວັດຈະນະເກີນຂະໜາດຄວາມເຊື່ອຂອງຕົນເອງ (ໂຣມ 12:6)

6. ຖ້ອຍຄຳປະກອບດ້ວຍຄວາມຮູ້ (1 ໂກຣິນໂທ 12:8)

ຄຳນິຍາມ ຖ້ອຍຄຳປະກອບດ້ວຍຄວາມຮູ້ ຄືສ່ວນສ້ຽວແຫ່ງຄວາມຮູ້ຂອງພະເຈົ້າ ທີ່ເປີດເຜີຍໃຫ້ແກ່ຄົນໃດຄົນນຶ່ງຜ່ານທາງອົງພະວິນຍານບໍລິສຸດ.

ຂອງປະທານຊະນິດນີ້ເຮັດໃຫ້ເຮົາຮູ້ເຖິງຂໍ້ແທ້ຈິງ ແລະຂໍ້ມູນໂດຍການເປີດເຜີຍແບບເໜືອນທຳມະຊາດຂອງພະວິນຍານບໍລິສຸດຊຶ່ງຂໍ້ມູນດັ່ງກ່າວນີ້ ຜູ້ຮັບບໍ່ໄດ້ຮູ້ມາກ່ອນລ່ວງໜ້າບໍ່ແມ່ນຄວາມຮູ້ທີ່ໄດ້ຮັບມາໂດຍວິທີການທາງທຳມະຊາດ ແຕ່ເປັນການເປີດເຜີຍແບບເໜືອທຳມະຊາດ.

ກ) ຕົວຢ່າງຈາກພະຄຳພີ:

1) ໃນພັນທະກິດຂອງພະເຢຊູ ພະເຢຊູຊົງຮູ້ເຖິງຂໍ້ແທ້ຈິງກ່ຽວກັບນາທານາເອລກ່ອນທີ່ຈະໄດ້ພົບກັບເຂົາ (ໂຢຮັນ 1:47-50) ພະເຢຊູຊົງຮູ້ຂໍ້ມູນຫລາຍຢ່າງກ່ຽວກັບຍິງຊາວສະມາເລັຽເຖິງແມ່ນວ່າພະອົງຈະບໍ່ເຄີຍພົບນາງມາກ່ອນເລີຍ (ໂຢຮັນ 4:18-20)

2) ໃນຄຣິສຕະຈັກຍຸກທຳອິດ ອານາເນັຽ ໄດ້ຮັບຮູ້ຂໍ້ມູນຢ່າງລະອຽດກ່ຽວກັບໂຊໂລ ຊຶ່ງເຂົາບໍ່ເຄີຍພົບໜ້າມາກ່ອນ ເຂົາຮູ້ຢ່າງຊັດເຈນວ່າໂຊໂລພັກຢູ່ບ້ານໃດຖະໜົນຫຍັງເຂົາຮູ້ວ່າໃນຂະນະນັ້ນໂຊໂລກຳລັງອະທິຖານ ແລະເມື່ອເຂົາໄດ້ວາງມືເທິງໂຊໂລແລ້ວ ໂຊໂລກໍຈະເບິ່ງເຫັນໄດ້ອີກ (ກິດຈະການ 9:10-20)

GCI

3) ໃນພະຄຳພີເດີມ ໃນພະທຳ 2ຊາມູເອລ 12:1-14 ພະເຈົ້າຊົງສຳແດງໃຫ້ນາທານຮູ້ເຖິງການປະພຶດບາບຂອງດາວິດຢ່າງລະອຽດ

ຂ) ຄວາມແຕກຕ່າງ ຖ້ອຍຄຳປະກອບດ້ວຍຄວາມຮູ້ແຕກຕ່າງຈາກຄວາມຮູ້ທົ່ວໄປຂອງມະນຸດຊຶ່ງໄດ້ຮັບ ໂດຍວິທີການທາງທຳມະຊາດ

ຖ້ອຍຄຳປະກອບດ້ວຍຄວາມຮູ້ ບໍ່ສາມາດໄດ້ມາໂດຍການຮຽນຮູ້ທາງສະໝອງ ຫລືຫາຄວາມຮູ້ຈາກ ໜັງສືຫລືຕຳລັບຕຳລາໃນມະຫາວິທະຍາໄລ ແລະຖ້ອຍຄຳປະກອບດ້ວຍຄວາມຮູ້ ບໍ່ແມ່ນຄວາມສາມາດ ໃນການສຶກສາຫລືຕີຄວາມໝາຍພະຄຳພີ

ຄ) ການໃຊ້ຖ້ອຍຄຳປະກອບດ້ວຍຄວາມຮູ້ໃນພະຄຳພີ

1) ເພື່ອເປີດເຜີຍຄວາມບາບ (2 ຊາມູເອລ 12:1-10,ກິດຈະການ 5:1-11)
2) ເພື່ອນຳຄົນມາເຖິງພະເຈົ້າ (ໂຢຮັນ 1:47-50, 4:18-20)
3) ເພື່ອນຳພາແລະຊີ້ທິດທາງ (ກິດຈະການ 9:11)
4) ເພື່ອໃຫ້ການໜູນນໍ້າໃຈໃນເວລາທີ່ທໍ້ແທ້ສິ້ນຫວັງ (1 ພົງກະສັດ 19:9-18)
5) ເພື່ອເປີດເຜີຍໃຫ້ຮູ້ເຖິງເຫດການທີ່ຈະເກີດຂຶ້ນໃນອານາຄົດ (ກິດຈະການ 11:27-28)
6) ເພື່ອເປີດເຜີຍໃຫ້ຮູ້ເຖິງສິ່ງທີ່ເຊື່ອງໄວ້ (1 ຊາມູເອນ 10:22)

ງ) ການໃຊ້ຂອງປະທານຖ້ອຍຄຳປະກອບດ້ວຍຄວາມຮູ້

1) ຂອງປະທານຊະນິດນີ້ ມີລັກສະນະເປັນສິ່ງທີ່ເໜືອທຳມະຊາດ ບໍ່ສາມາດໄດ້ມາໂດຍການຄິດໄຕ່ຄວນຫາເຫດຜົນ ..ຫລືໂດຍປະສາດສຳຜັດຕາມທຳມະຊາດ ແຕ່ໂດຍການເປີດເຜີຍທີ່ເໜືອທຳມະຊາດຈາກພະວິນຍານບໍລິສຸດ
2) ເປັນຂອງປະທານທີ່ຕ້ອງໃຊ້ໂດຍຄວາມເຊື່ອ ຜູ້ທີ່ໄດ້ຮັບການສຳແດງຊະນິດນີ້ ຮັບໄດ້ໂດຍຄວາມເຊື່ອ
3) ການເປີດເຜີຍ ເກີດຂຶ້ນພາຍໃນວິນຍານ ບໍ່ແມ່ນໃນອາລົມຫລືຄວາມຄິດ
4) ບໍ່ຈຳເປັນຕ້ອງເປີດເຜີຍອອກມາໃນຮູບຂອງການເຜີຍພະວັດຈະນະ ຜູ້ຮັບຂອງປະທານຊະນິດນີ້ ອາດຮັບໄວ້ ຢ່າງງຽບໆໃນວິນຍານ ຫລືໄດ້ຍິນຄຳບົ່ງບອກເປັນສຽງໃນບາງໂອກາດ (ກິດຈະການ 9:11)
5) ເປັນຂອງປະທານທີ່ອາດຈະຕ້ອງເວົ້າເປັນຖ້ອຍຄຳອອກມາ ຖ້າຕ້ອງແບ່ງປັນແກ່ຜູ້ອື່ນ (ໂຢຮັນ 4:4-7,18)
6) ຄຣິສຕຽນທີ່ເຕັມດ້ວຍພະວິນຍານທຸກຄົນ ສາມາດມີປະສົບການກັບຂອງປະທານຊະນິດນີ້ໄດ້ ຖ້າເຂົາພ້ອມທີ່ຈະຟັງພະສຸລະສຽງຂອງພະເຈົ້າ
7) ເປັນຂອງປະທານທີ່ມີຄ່າຢ່າງຍິ່ງໃນພັນທະກິດການໃຫ້ຄຳປຶກສາ
8) ການທີ່ຈະໃຫ້ຂອງປະທານຊະນິດນີ້ເກີດຂຶ້ນໃນພັນທະກິດຢ່າງຕໍ່ເນື່ອງ ຜູ້ໃຊ້ຈະຕ້ອງຮູ້ຈັກຕອບສະໜອງຕໍ່ການສຳແດງດ້ວຍການເຊື່ອຟັງ

GCI

9) ຫລາຍຄັ້ງທີ່ຂອງປະທານຊະນິດນີ້ເກີດຂຶ້ນຄວບຄູ່ກັບຂອງປະທານຖ້ອຍຄຳປະກອບດ້ວຍປັນຍາ ຊຶ່ງເປັນສະຕິປັນຍາທີ່ພະເຈົ້າຊົງປະທານ ເພື່ອຈະໄດ້ຮູ້ວ່າຄວນຈະເຮັດຢ່າງໃດກັບຄວາມຮູ້ທີ່ໄດ້ຊົງເປີດເຜີຍແລ້ວນັ້ນ ຄືນຳຄວາມຮູ້ທີ່ມີນັ້ນໄປປະຍຸກໃຊ້ໄດ້ຢ່າງຖືກຕ້ອງ ແລະມີສະຕິປັນຍາ

7. ຖ້ອຍຄຳປະກອບດ້ວຍປັນຍາ (1 ໂກຣິນໂທ 12:8)

ຂອງປະທານຊະນິດນີ້ມີຄວາມສຳຄັນຢູ່ໃນລຳດັບຕົ້ນຂອງບັນດາຂອງປະທານທັງຫລາຍ ມັນເຮັດໃຫ້ເຮົາສາມາດທີ່ຈະເວົ້າ ແລະກະທຳການໄດ້ຢ່າງມີສະຕິປັນຍາສິ່ງພົນໃຫ້ເຮົາໃຊ້ຂອງປະທານຊະນິດອື່ນໆໄດ້ຢ່າງຖືກຕ້ອງເໝາະສົມ

ເມື່ອຖ້ອຍຄຳປະກອບດ້ວຍປັນຍາຂາດຫາຍໄປ ຂອງປະທານຊະນິດອື່ນໆກໍອາດຈະຖືກໃຊ້ໄປຢ່າງຜິດໆກໍ່ໃຫ້ເກີດຄວາມສັບສົນວຸ້ນວາຍໄດ້ຢ່າງຫລວງຫລາຍ

ກ) ຄຳນິຍາມ ຖ້ອຍຄຳປະກອບດ້ວຍປັນຍາ ຄືສ່ວນສ່ຽວແຫ່ງພະປັນຍາຂອງພະເຈົ້າ ຊຶ່ງຊົງປະທານ ໃຫ້ເຮົາຢ່າງເໜືອທຳມະຊາດໂດຍທາງພະວິນຍານບໍລິສຸດ ເຮັດໃຫ້ເຮົາເກີດສະຕິປັນຍາໃນເວລານັ້ນໆ ແລະຮູ້ວ່າຄວນຈະເວົ້າຫລືເຮັດສິ່ງໃດລົງໄປ

ຫລາຍຄັ້ງທີ່ພະເຈົ້າຊົງປະທານຖ້ອຍຄຳປະກອບດ້ວຍປັນຍາ ຄວບຄູ່ກັບຖ້ອຍຄຳປະກອບດ້ວຍຄວາມຮູ້ ເພື່ອໃຫ້ບັນດາຜູ້ເຊື່ອນຳຄວາມຮູ້ນັ້ນໄປໃຊ້ໄດ້ຢ່າງຖືກຕ້ອງ ພະເຈົ້າຊົງເປີດເຜີຍໃຫ້ອານາເນັ່ຽຮູ້ເຖິງທີ່ຢູ່ ແລະສະພາບການໃນຊີວິດຂອງໂຊໂລໂດຍຖ້ອຍຄຳປະກອບດ້ວຍຄວາມຮູ້ ແລະຊົງສຳແດງໃຫ້ທ່ານຮູ້ໂດຍຖ້ອຍຄຳປະກອບດ້ວຍປັນຍາດ້ວຍວ່າທ່ານຄວນຈະເຮັດຢ່າງໃດໃນສະຖານະການທີ່ຍາກລຳບາກເຊັ່ນນັ້ນ

ຂ) ຕົວຢ່າງ ຊາຍຄົນນຶ່ງກຳລັງປະເຊີນກັບບັນຫາທາງດ້ານກົດໝາຍ ຈຶ່ງໄປປຶກສາກັບທະນາຍຄວາມຂອງເຂົາ ທະນາຍຄວາມຈະບໍ່ເປີດເຜີຍຄວາມຮູ້ແລະປັນຍາທຸກຢ່າງທີ່ເຂົາມີ ຢູ່ນັ້ນໃຫ້ແກ່ລູກຄວາມ ແຕ່ເຂົາຈະເວົ້າຖ້ອຍຄຳບາງຢ່າງ ຫລືສະແດງຄວາມຮູ້ຂອງເຂົາສະເພາະ ສ່ວນທີ່ກ່ຽວ ຂ້ອງກັບບັນຫາຂອງລູກຄວາມເທົ່ານັ້ນ ເຊັ່ນດຽວກັນ ພະເຈົ້າຜູ້ຊົງຮູ້ທຸກສິ່ງກໍຈະນຳເອົາພະປັນຍາບາງສ່ວນຂອງພະອົງມາເປີດເຜີຍແກ່ລູກຂອງພະອົງ ສະເພາະສ່ວນທີ່ກ່ຽວຂ້ອງກັບບັນຫາຂອງເຂົາເທົ່ານັ້ນຊຶ່ງພະອົງຊົງກະທຳສິ່ງນີ້ໂດຍທາງພະວິນຍານ

ຄ) ຄວາມແຕກຕ່າງ

ຖ້ອຍຄຳປະກອບດ້ວຍປັນຍາ

1) ບໍ່ແມ່ນສະຕິປັນຍາຕາມທຳມະຊາດ
2) ບໍ່ແມ່ນສະຕິປັນຍາທີ່ເກີດຈາກການສຶກສາ ຮຽນຮູ້
3) ບໍ່ແມ່ນສະຕິປັນຍາທີ່ໄດ້ມາຈາກປະສົບການ
4) ບໍ່ແມ່ນສະຕິປັນຍາທີ່ຈະເຂົ້າໃຈຂໍ້ພະຄຳພີ
5) ເປັນສະຕິປັນຍາທີ່ເກີດຂຶ້ນແບບເໜືອທຳມະຊາດ
6) ເປັນສິ່ງທີ່ຈະໄດ້ຮັບຕາມທີ່ພະວິນຍານຊົງຊອບພະໄທ (1ໂກຣິນໂທ 12:11)

GCI

7) ເປັນສິ່ງທີ່ປະທານໃຫ້ເພື່ອແກ້ບັນຫາ ຫລືເພື່ອສະຖານະການໃດສະຖານະການນຶ່ງໂດຍສະເພາະ

8) ບໍ່ແມ່ນຂອງປະທານແຫ່ງປັນຍາ ແຕ່ເປັນຖ້ອຍຄຳປະກອບດ້ວຍປັນຍາ

ງ) ຕົວຢ່າງຈາກພະຄຳພີ

1) ລູກາ 4:1-13 ພະເຢຊູຊົງທົດລອງໃນຖິ່ນທຸລະກັນດານ ຖ້ອຍຄຳທີ່ພະອົງຊົງໄດ້ຕອບກັບຊາຕານນັ້ນຄືຖ້ອຍຄຳປະກອບດ້ວຍປັນຍາ ຊຶ່ງພະວິນຍານບໍລິສຸດຊົງປະທານໃຫ້

2) ລູກາ 20:22-26 ພວກທຳມະຈານ ພະຍາຍາມຈັບຜິດພະເຢຊູ ແຕ່ຖ້ອຍຄຳປະກອບດ້ວຍປັນຍາຊຶ່ງມາຈາກພະວິນຍານໄດ້ເຮັດໃຫ້ພວກເຂົາອຶ້ງໄປ

3) ໂຢຮັນ 8:3-11 ອີກຄັ້ງນຶ່ງທີ່ພວກທຳມະຈານກັບຟາລິຊາຍພະຍາຍາມກັນຜິດພະອົງ ແຕ່ຖ້ອຍຄຳທີ່ເຕັມພະປັນຍາຂອງພະອົງ ແລະຄວາມສາມາດໃນການຈັດການກັບບັນຫາຂອງພະອົງ ເຮັດໃຫ້ພວກເຂົາຕ້ອງນັ່ງງຽບ

4) ກິດຈະການ 6:1-5 ສະຕິປັນຍາໃນການບໍລິຫານຄຣິສຕະຈັກ

5) ກິດຈະການ 15:28 ແກ້ໄຂວິກິດໃນຄຣິສຕະຈັກ

6) ກິດຈະການ 27:23-24 ເຮັດໃຫ້ໂປໂລສາມາດຄວບຄຸມສະຖານະການໄດ້ ຈົນເປັນເຫດໃຫ້ຫລາຍຄົນໄດ້ພົບກັບຄວາມພົ້ນ

ຈ) ໝາຍເຫດ ຖ້ອຍຄຳປະກອບດ້ວຍປັນຍາເປັນສິ່ງທີ່ພະເຈົ້າຊົງສັນຍາໄວ້ກັບສາວົກຂອງພະຄຣິດທຸກຄົນ "ເຫດສະນັ້ນທ່ານທັງຫລາຍຕ້ອງປົງໃຈໄວ້ວ່າຈະບໍ່ຄິດກ່ອນວ່າຈະແກ້ຕົວຢ່າງໃດດ້ວຍວ່າເຮົາຈະໃຫ້ປາກແລະປັນຍາແກ່ທ່ານຊຶ່ງສັດຕູທັງຫລາຍຂອງທ່ານຈະຕໍ່ຕ້ານ ແລະຄັດຄ້ານບໍ່ໄດ້" (ລູກາ 21:14,15)

ສ) ຂໍ້ສັງເກດ ແທ້ໆແລ້ວຖ້ອຍຄຳປະກອບດ້ວຍປັນຍາ ບໍ່ແມ່ນຂອງປະທານທີ່ກ່ຽວກັບການເວົ້າແຕ່ເປັນຂອງປະທານກ່ຽວກັບການສຳແດງຊຶ່ງເກີດຂຶ້ນຢ່າງງຽບໆໃນໃຈຫລືໃນວິນຍານຂອງຜູ້ຮັບຫລາຍຄັ້ງເກີດຂຶ້ນໃນຂະນະທີ່ກຳລັງໃຫ້ຄຳປຶກສາ ເທດສະໜາ ຫລືເຜີຍພະວັດຈະນະ ຫລືເມື່ອໄດ້ຮັບ ຄຳບັນຊາຈາກພະເຈົ້າ ເພື່ອເຮົາຈະໄດ້ຮູ້ເຖິງວິທີໃນການຕອບສະໜອງຕໍ່ຄຳບັນຊານັ້ນ

8. ການສັງເກດວິນຍານ (1ໂກຣິນໂທ 12:10)

ການສັງເກດວິນຍານເປັນເລື່ອງທີ່ມີຄວາມສຳຄັນກວ່າທີ່ເຮົາຄິດ ລົດບັນຫາຖ້າມີການໃຊ້ຂອງປະທານຊະນິດນີ້ໃນຂະນະທີ່ເຮົາຮັບພີເຮົາຈະລົດບັນຫາຕ່າງໆໄດ້ຢ່າງຫລວງຫລາຍ

ການສັງເກດວິນຍານ ເປັນຂອງປະທານຊະນິດທີ່ສາມໃນຂອງປະທານແຫ່ງການສຳແດງ (ອີກສອງຊະນິດໄດ້ແກ່ຖ້ອຍຄຳປະກອບດ້ວຍປັນຍາ ແລະຖ້ອຍຄຳປະກອບດ້ວຍຄວາມຮູ້) ພະວິນຍານບໍລິສຸດຊົງປະທານຂອງປະທານນີ້ເພື່ອໃຫ້ເຮົາສາມາດວິນິໄສແຍກແຍະໄດ້ວ່າ ສິ່ງທີ່ກຳລັງເກີດຂຶ້ນນັ້ນເປັນພະວິນຍານບໍລິສຸດຊົງປະທານຂອງປະທານນີ້ເພື່ອໃຫ້ເຮົາສາມາດວິນິໄສແຍກແຍະໄດ້ວ່າ ສິ່ງທີ່ກຳລັງເກີດຂຶ້ນນັ້ນເປັນພະວິນຍານຂອງຊາຕານ (ວິນຍານຊົ່ວ) ພະວິນຍານຂອງພະເຈົ້າ ຫລືວິນຍານຂອງມະນຸດໂດຍຂອງປະທານຊະນິດນີ້ເຮົາສາມາດສັງເກດຮູ້ເຖິງຕົ້ນເຫດຂອງການກະທຳຄຳສອນ ຫລືເຫດການຕ່າງໆຊຶ່ງເກີດຈາກວິນຍານ

ຂອງປະທານຊະນິດນີ້ ມີຄວາມຈຳກັດຫລາຍກວ່າຂອງປະທານອີກສອງຊະນິດທີ່ໄດ້ກ່າວໄປແລ້ວ ການສັງເກດວິນຍານເປັນການສຳແດງໃຫ້ຮູ້ເຖິງຕົ້ນເຫດຂອງພຶດຕິກຳນັ້ນໆວ່າມາຈາກໃສ

GCI

ທັງນີ້ມັນເປັນຂອງປະທານເໜືອທຳມະຊາດເຊັ່ນດຽວກັນກັບຂອງປະທານຝ່າຍວິນຍານຊະນິດອື່ນໆ ເຮັດໃຫ້ເຮົາມີຄວາມຮູ້ຄວາມເຂົ້າໃຈໃນຍາມຈຳເປັນຊຶ່ງບໍ່ສາມາດຫາໄດ້ໂດຍວິທີການອື່ນ

ກ) ໜ້າທີ່ຂອງຂອງປະທານ ຂອງປະທານການສັງເກດວິນຍານ ເຮັດໃຫ້ເຮົາມີຄວາມເຂົ້າໃຈແບບເໜືອທຳມະຊາດກ່ຽວກັບລັກສະນະ ແລະກິດຈະການຂອງວິນຍານຕ່າງໆເຮັດໃຫ້ຮູ້ວ່າຕົ້ນເຫດຂອງກິດຈະກຳຝ່າຍວິນຍານນັ້ນໆເກີດຈາກພະວິນຍານຂອງພະເຈົ້າ ວິນຍານຂອງຊາຕານ ຫລືວິນຍານຂອງມະນຸດ ແລະເປີດເຜີຍໃຫ້ເຮົາຮູ້ເຖິງລັກສະນະຂອງວິນຍານນັ້ນໆນຳ

ຊາຕານຈະພະຍາຍາມຮຽນແບບການງານຂອງພະວິນຍານບໍລິສຸດ.

ຫລາຍຄັ້ງການຮຽນແບບຂອງມານຄືສົມຈິງສົມຈັງຫລາຍຈົນເຮົາອາດຖືກຫລອກໄດ້

ຍິງຄົນນັ້ນເວົ້າເຖິງໂປໂລໄດ້ຢ່າງຖືກຕ້ອງ ນາງຮ້ອງວ່າ:

"ຄົນເຫລົ່ານີ້ເປັນທາດຂອງພະເຈົ້າສູງສຸດ ມາກ່າວປະກາດທາງພົ້ນແກ່ທ່ານທັງຫລາຍ" ແຕ່ວິນຍານທີ່ຢູ່ເບື້ອງຫລັງຄຳເວົ້າຄື ວິນຍານຊົ່ວ

ຂ) ການໃຊ້ ແລະຄວາມຈຳເປັນທີ່ຕ້ອງມີຂອງປະທານໃນຍຸກປະຈຸບັນ,
ການສັງເກດວິນຍານໄດ້ຮັບການຟື້ນຟູຫລາຍໃນຍຸກປະຈຸບັນ ເຮົາຈະພົບວ່າມັນເປັນຂອງປະທານທີ່ກຳລັງເກີດຂຶ້ນໃນພັນທະກິດຂອງຜູ້ຮັບໃຊ້ພະເຈົ້າຫລາຍຄົນໃນການປະຊຸມຟື້ນຟູທົ່ວໄປ ຂອງປະທານເໜືອນທຳມະຊາດຊະນິດນີ້ ຈຳເປັນຢ່າງຍິ່ງສຳລັບບັນດາມິດຊັນນາລີ ແລະຜູ້ຮັບໃຊ້ພະເຈົ້າຊຶ່ງກຳລັງເຮັດການຢູ່ໃນບ່ອນທີ່ເຕັມໄປດ້ວຍໄສຍາສາດ ລັດທິບູຊາຊາຕານ ແລະເວດມົນຄາຖາຕ່າງໆ

ຄ) ວິທີການໃຊ້ຂອງປະທານ ໜ້າທີ່ຫລັກຂອງປະທານການສັງເກດວິນຍານກໍຄືການສຳແດງເຖິງວິນຍານຊົ່ວທີ່ກຳລັງເຮັດການຢູ່ໃນຊີວິດຄົນຫລືຄຣິສຕະຈັກ ແຕ່ເຮົາຍັງສາມາດໃຊ້ຂອງປະທານນີ້ໃນການວິນິໄສເຖິງທີ່ມາຂອງຄຳເຜີຍພະວັດຈະນະຄຳສອນບາງຢ່າງຕະຫລອດຈົນການສຳແດງຝ່າຍວິນຍານ ຜູ້ທີ່ມີຂອງປະທານຊະນິດນີ້ຈະສາມາດບອກໄດ້ວ່າຕົ້ນກຳເນີດຂອງຄຳສອນ ຫລືກິດຈະການນັ້ນໆ ເປັນມາຈາກວິນຍານຊົ່ວພະວິນຍານຂອງພະເຈົ້າ ຫລືວິນຍານຂອງມະນຸດ

ຖ້າກິດຈະການດັ່ງກ່າວເປັນມາຈາກວິນຍານຊົ່ວ ຜູ້ທີ່ມີຂອງປະທານມັກຈະສາມາດບອກໄດ້ເຖິງ..

1) ຊະນິດຂອງວິນຍານຊົ່ວ ໝາຍເຖິງກິດຈະການຂອງມັນເປັນອັນໃດ ເຊັ່ນ ວິນຍານຂີ້ຕົວະ ວິນຍານທີ່ເຮັດໃຫ້ເກີດຄວາມເຈັບປ່ວຍ (ໂລກມະເລັງ, ຕາບອດ, ເປັນໄບ້..) ວິນຍານບໍ່ສະອາດ ແລະອື່ນໆໃນທຳນອງດຽວກັນ

GCI

2) ຊື່ຂອງວິນຍານຊົ່ວຊຶ່ງມັກຈະເປີດເຜີຍຄວບຄູ່ໄປກັບຊະນິດຂອງວິນຍານຊົ່ວ ແຕ່ກໍບໍ່ໄດ້ຜິດປົກກະຕິແຕ່ຢ່າງໃດທີ່ຈະເປີດເຖິງຊື່ສາມັນຂອງວິນຍານຊົ່ວ

3) ຈໍານວນຂອງວິນຍານຊົ່ວ ເລື່ອງນີ້ເກີດຂຶ້ນໃນກໍລະນີຂອງວິນຍານຊົ່ວທີ່ເອີ້ນວ່າ "ກອງ" (ມາລະໂກ 5:1-9) ແລະຜີເຈັດຜີທີ່ພະເຢຊູຊົງຂັບອອກຈາກມາລີມັກດາລາ (ລູກາ 8:2) ບໍ່ແມ່ນເລື່ອງຜິດປົກກະຕິທີ່ຈະພົບຄົນທີ່ຖືກລົບກວນໂດຍມີວິນຍານຊົ່ວຫລາຍກວ່ານຶ່ງໂຕ ຊຶ່ງທັງໝົດນີ້ເປັນສ່ວນນຶ່ງຂອງການເປີດເຜີຍທີ່ມາຈາກຂອງປະທານການສັງເກດວິນຍານ

4) ພົນກໍາລັງຂອງວິນຍານຊົ່ວບາງຊະນິດບາງຄັ້ງເມື່ອຕ້ອງປະເຊີນກັບວິນຍານຊົ່ວ ຜູ້ທີ່ມີຂອງປະທານການສັງເກດວິນຍານຈະສາມາດບອກໄດ້ວ່າວິນຍານຊົ່ວໂຕໃດທີ່ເຂັ້ມແຂງທີ່ສຸດ ແລະມີອໍານາດຫລາຍທີ່ສຸດ

5) ຂໍ້ມູນຕ່າງໆ ຫລາຍຄັ້ງວິນຍານຊົ່ວຈະບອກເຖິງຂໍ້ມູນຕ່າງໆໃຫ້ກັບຄົນຊຶ່ງພວກມັນຮູ້ວ່າສາມາດສັງເກດວິນຍານ ແລະມີສິດທີ່ຈະຂັບພວກມັນອອກໄດ້

ຢ່າງໃດກໍຕາມເນື່ອງຈາກວິນຍານຊົ່ວມັກກ່ຽວຂ້ອງກັບການຂີ້ຕົວະຈຶ່ງເປັນການດີທີ່ຈະຮັບຂໍ້ມູນເຫລົ່ານັ້ນໂດຍຕັ້ງຂໍ້ສົງໄສໄວ້ກ່ອນ ແລະເຮົາຕ້ອງເພິ່ງພາໃນຄວາມເຂົ້າໃຈ ແລະບັນຫາຊຶ່ງມາຈາກອົງພະວິນຍານບໍລິສຸດ

ງ) ການສັງເກດວິນຍານບໍ່ໄດ້ເຮັດໃຫ້ເຮົາມີຄວາມເຊື່ອໃນການຂັບຜີອອກສະເໝີໄປ ເຖິງແມ່ນການສັງເກດວິນຍານຈະຊ່ວຍໃຫ້ເຮົາຂັບຜີໄດ້ຢ່າງມີປະສິດທິພາບ ແຕ່ລໍາພັງຂອງປະທານນີ້ຢ່າງດຽວຍັງບໍ່ພຽງພໍ ເຮົາຕ້ອງໃຊ້ຂອງປະທານນີ້ຄວບຄູ່ໄປກັບຂອງປະທານແຫ່ງຄວາມເຊື່ອ ແລະການເຮັດການອິດທິລິດ ຜູ້ທີ່ມີຂອງປະທານເຫລົ່ານີ້ມັກຈະປະສົບຄວາມສໍາເລັດຫລາຍທີ່ສຸດໃນການໄລ່ຜີ

9. ຄວາມເຊື່ອ (1ໂກຣິນໂທ 12: 9)

ຄວາມເຊື່ອມັກຈະກ່ຽວຂ້ອງກັບເລື່ອງອານາຄົດສິ່ງທີ່ເບິ່ງບໍ່ເຫັນ ແລະສິ່ງທີ່ເປັນໄປບໍ່ໄດ້ຕາມສາຍຕາພາຍນອກຂອງປະທານແຫ່ງຄວາມເຊື່ອ ຄືຄວາມສາມາດພິເສດທີ່ພະເຈົ້າປະທານໃຫ້ບາງຄົນຊຶ່ງພະອົງຊົງເອີ້ນໃຫ້ເຮັດການບາງຢ່າງທີ່ເບິ່ງຄືເປັນໄປບໍ່ໄດ້ຕາມຄໍາຕັດສັ່ງຂອງພະເຈົ້າ

ຂອງປະທານແຫ່ງຄວາມເຊື່ອ ຄືຄວາມເຊື່ອພິເສດທີ່ພະເຈົ້າມອບໃຫ້ແກ່ຜູ້ເຊື່ອທີ່ເຕັມລົ້ນດ້ວຍພະວິນຍານເມື່ອການງານທີ່ພະອົງຊົງມອບໝາຍໃຫ້ເຮັດນັ້ນຕ້ອງອາໃສຄວາມເຊື່ອທີ່ຫລາຍກວ່າທໍາມະດາທົ່ວໄປ

ຄວາມເຊື່ອທົ່ວໄປເຕີບໃຫຍ່ໄດ້ເພາະການບໍາລຸງລ້ຽງຊີວິດໂດຍພະວັດຈະນະ ແລະການຝຶກຄົນທ່າມກາງສະຖານະການຕ່າງໆໃນຊີວິດ ຄວາມເຊື່ອດັ່ງກ່າວນີ້ສາມາດພັດທະນາຂຶ້ນໄດ້ຈົນເຖິງລະດັບທີ່ສູງທີ່ສຸດ ແຕ່ຂອງປະທານແຫ່ງຄວາມເຊື່ອມີບົດບາດໜ້າທີ່ທີ່ສູງຍິ່ງກວ່າຄວາມເຊື່ອທົ່ວໄປແບບທີ່ສູງທີ່ສຸດເສັຽອີກ

GCI

ກ) ຂອງປະທານແຫ່ງຄວາມເຊື່ອເຮັດວຽກງານຢ່າງໃດ?
ຂອງປະທານແຫ່ງຄວາມເຊື່ອເບິ່ງຄືຈະເຮັດວຽກໃນສະພາບທີ່ເປັນເຊີງຮັບ ແຕ່ບໍ່ໄດ້ເປັນແບບນັ້ນສະເໝີໄປ ການທີ່ດານຽນໄດ້ຮັບການປົກປ້ອງຈາກສິງ ຄືກໍລະນີຕົວຢ່າງຂອງຄວາມເຊື່ອໃນເຊີງຮັບ

ໃນທາງກົງກັນຂ້າມ ແຊມຊັນຂ້າສິງ ຊຶ່ງເປັນຂອງປະທານໃນການເຮັດການອັດສະຈັນ ຂອງປະທານການເຮັດການອັດສະຈັນຕ້ອງກ່ຽວຂ້ອງກັບການມີສ່ວນຮ່ວມຂອງຄົນໃນການສຳແດງເຖິງລິດເດດຂອງພະເຈົ້າ ການທີ່ຄົນມັກຈະຄິດວ່າຂອງປະທານແຫ່ງຄວາມເຊື່ອເປັນຂອງປະທານໃນເຊີງຮັບ ເພາະມັນເປັນຂອງປະທານທີ່ເຮັດງານຄວບຄູ່ໄປກັບຂອງປະທານທີ່ເບິ່ງໂດຍເດັ່ນກວ່າ (ເຊັ່ນ ການທຳການອິດທິລິດ ການຮັກສາໂລກ)

ຜົນຮັບບໍ່ໄດ້ເກີດຂຶ້ນໃນທັນທີ ແຕ່ຈະເກີດຂຶ້ນຢ່າງແນ່ນອນ ຂອງປະທານຊະນິດນີ້ ເຮັດການໄດ້ໃນຫລາຍຮູບແບບ (ເຊັ່ນ ເພື່ອອວຍພອນ ເພື່ອສາບແຊ່ງ ເພື່ອເນລະມິດສ້າງ ເພື່ອທຳລາຍເປັນຕົ້ນ) ມີຕົວຢ່າງທີ່ເດັ່ນຫລາຍເລື່ອງຊຶ່ງເປັນການງານຂອງຂອງປະທານແຫ່ງຄວາມເຊື່ອທີ່ເຮັດການຜ່ານທາງຖ້ອຍຄຳ

1) ໂຢຊວຍ ສັ່ງໃຫ້ຕາເວັນ ແລະດວງຈັນຢຸດ (ໂຢຊວຍ 10:12-14)
2) ເອລີຢາ ຄວບຄຸມລົມຟ້າອາກາດດ້ວຍຖ້ອຍຄຳຂອງທ່ານ
"ບໍ່ມີນ້ຳຄ້າງ ຫລືຝົນໃນປີເຫລົ່ານີ້ ນອກຈາກຕາມຄຳຂອງຂ້າພະບາດ" (1ພົງກະສັດ 17:1 ຢາໂກໂບ 5:17)
3) ໂປໂລເຮັດໃຫ້ເອລີມາດ ນັ່ງງຽບ "ເຈົ້າຈະເປັນຄົນຕາບອດບໍ່ເຫັນດວງອາທິດຈົນເຖິງເວລາກຳນົດ" (ກິດຈະການ 13:8-11)
4) ເປໂຕ ກ່າວການພິພາກສາຂອງພະເຈົ້າເໜືອອານາເນັຽກັບຊັບພີລາ (ກິດຈະການ 5)
ພະຄຳພີໄດ້ສອນເຖິງຫລັກແຫ່ງການໃຊ້ຖ້ອຍຄຳແຫ່ງຄວາມເຊື່ອໄວ້ວ່າ "ຈະເປັນໄປຕາມທີ່ເຂົາສັ່ງນັ້ນ" ໂດຍກ່ຽວຂ້ອງກັບການ "ເຊື່ອໃນພະເຈົ້າ" (ມາຣະໂກ 11:22-23) ແລະ"ທ່ານຈະປ່າວປະກາດໃນເລື່ອງໃດ ແລະເລື່ອງນັ້ນຈະສຳເລັດສົມປະສົງ ແລະຈະມີແສງສະຫວ່າງສ່ອງທາງໃຫ້ທ່ານ" (ໂຢບ 22:28)

10. ການຮັກສາໂລກ (1ໂກຣິນໂທ 12:9)
ຂໍ້ພະຄຳພີອ້າງອີງເຖິງຂອງປະທານຊະນິດນີ້ໃນພະທຳ 1ໂກຣິນໂທ 12 ມີຢູ່ 3 ແຫ່ງ ຄືໃນຂໍ້ທີ່ 9,28 ແລະ30 ໃນແຕ່ລະຂໍ້ ຄຳເດີມຢູ່ໃນຮູບຂອງພະຫູພົດ ຖ້າຈະແປໃຫ້ຖືກຕ້ອງ ຄວນແປວ່າ "ຂອງປະທານຕ່າງໆໃນການຮັກສາໂລກ (ຊະນິດຕ່າງໆ)"

ຂອງປະທານໃນການຮັກສາໂລກ ເຮັດການປຽວຢາຮັກສາໂລກ ແລະຄວາມເຈັບປ່ວຍຕ່າງໆ ແບບເໜືອທຳມະຊາດ ໂດຍບໍ່ໄດ້ໃຊ້ວິທີການໃດໆເລີຍຕາມທຳມະຊາດ ເປັນການທີ່ລິດເດດຂອງພະວິນຍານບໍລິສຸດລົງມາສວມທັບຮ່າງກາຍຂອງຄົນປ່ວຍເຮັດການທຳລາຍໂລກໄພໄຂ້ເຈັບອອກໄປເພື່ອຮັກສາເຂົາໃຫ້ຫາຍດີ

GCI

ການທີ່ຂອງປະທານຊະນິດນີ້ຢູ່ໃນຮູບພະຫູພົດ ຊີ້ໃຫ້ເຫັນວ່າມີຂອງປະທານຫລາຍຊະນິດໃນການຮັກສາໂລກຕ່າງໆ ບາງຄົນມີຂອງປະທານໃນການຮັກສາໂລກອາດຈະປະສົບຄວາມສຳເລັດຫລາຍໃນການຮັກສາຄົນຕາບອດ ບາງຄົນປະສົບຄວາມສຳເລັດໃນການຮັກສາຄົນຫູໜວກ ຫລືໂລກມະເລັງ

ແມ່ນແຕ່ພະເຢຊູກໍບໍ່ໄດ້ເຮັດຢ່າງນັ້ນ ພະອົງຊົງສະເດັດໄປບ່ອນສະຖານທີ່ທີ່ເຕັມໄປດ້ວຍຄົນເປັ້ຽ ແລະຄົນປ່ວຍພຽງແຕ່ເທື່ອດຽວເທົ່ານັ້ນ ທີ່ສະນ້ຳເບດໄຊດາ ຊຶ່ງມີຄົນນອນປ່ວຍຢູ່ບ່ອນນັ້ນຫລວງຫລາຍ ແຕ່ພະອົງຊົງເລືອກບ່ອນຈະຮັກສາຄົນເປັ້ຽພຽງຄົນດຽວເທົ່ານັ້ນ (ໂຢຮັນ 5:1-9)
(1ໂກຣິນໂທ 12:4-7)

ການໃຊ້ຂອງປະທານຮັກສາໂລກ ບໍ່ໄດ້ເຮັດໃຫ້ຜູ້ມີຂອງປະທານສາມາດຮັກສາຄົນເຈັບປ່ວຍໄດ້ທຸກເວລາ.

ກ) ຈຸດປະສົງຂອງຂອງປະທານແຫ່ງການຮັກສາໂລກ
   1) ເພື່ອປົດປ່ອຍຄົນປ່ວຍ ແລະຜູ້ທີ່ທົນທຸກ ແລະເພື່ອທຳລາຍກິດຈະການຂອງມານໃນຮ່າງກາຍມະນຸດ (1ໂຢຮັນ 3:8 ກິດຈະການ 10:38 ແລະລູກາ 13:16)
   2) ເພື່ອພິສູດຄຳກ່າວອ້າງຂອງພະເຢຊູທີ່ວ່າ ພະອົງເປັນພະບຸດຂອງພະເຈົ້າ (ໂຢຮັນ 10:36-38)
   3) ເພື່ອຢືນຢັນພະວັດຈະນະ (ມາຣະໂກ 16:17-20, ກິດຈະການ 4:29,30,31,33)
   4) ເພື່ອຊັກນຳຄົນເຂົ້າມາຫາພະບຸດ (ມັດທາຍ 4:23,25)
   5) ເພື່ອຖວາຍກຽດແກ່ພະເຈົ້າ (ມາຣະໂກ 2:12 ລູກາ 13:13, 18:43, ໂຢຮັນ 9:2-3)

ພະວິນຍານບໍລິສຸດໃຫ້ຂອງປະທານໃນການຮັກສາໂລກແກ່ຜູ້ຮັບໃຊ້ພະເຈົ້າເພື່ອສົ່ງພະພອນຕໍ່ໄປຍັງຜູ້ທີ່ພະອົງປະສົງຈະຮັກສາຕາມນ້ຳພະໄທຂອງພະອົງ.

ນາອາມານກໍມີບັນຫາໃນການຮັບເອົາຂອງປະທານແຫ່ງການຮັກສາໂລກທີ່ພະເຈົ້າສົ່ງໄປໃຫ້ທ່ານຜ່ານທາງເອລີຊາ.

ຫລາຍຄັ້ງ ການຮັກສາໂລກຈຳເປັນຕ້ອງມີການສະແດງອອກທາງຄວາມເຊື່ອແບບຄວບຄູ່ ຄືຕ້ອງມີຄວາມເຊື່ອໃນການຮັບເອົາການຫາຍໂລກ ແລະຄວາມເຊື່ອໃນການໃຊ້ຂອງປະທານແຫ່ງການຮັກສາໂລກ.

11. ການເຮັດການອິດທິລິດ (1 ໂກຣິນໂທ 12:10)

ການອິດທິລິດເກີດຂຶ້ນເມື່ອພະເຈົ້າເຂົ້າແຊກຂະບວນການປົກກະຕິຂອງທຳມະຊາດການອິດທິລິດເກີດຂຶ້ນເມື່ອພະເຈົ້າໃຫ້ຄວາມສາມາດແກ່ເຮົາໂດຍລິດເດດຂອງພະວິນຍານບໍລິສຸດ ເພື່ອໃຫ້ເຮັດບາງຢ່າງທີ່ຢູ່ນອກເໜືອຂີດຄວາມສາມາດຂອງມະນຸດ

GCI

ພະອົງປະທານຄວາມສາມາດນີ້ໃຫ້ເຮົາໃນເວລາພິເສດສະເພາະ ເພື່ອຈຸດປະສົງທີ່ພິເສດສະເພາະ

ຂອງປະທານຂອງພະວິນຍານທຸກຊະນິດຖືເປັນການອິດທິລິດ ແຕ່ການໃຊ້ຄຳວ່າ ການອິດທິລິດໃນກໍລະນີນີ້ ໝາຍເຖິງກິດຈະການຕ່າງໆທີ່ເຮັດດ້ວຍລິດເດດ

ກ) ການອິດທິລິດ ເປັນຂໍ້ພິສູດເຖິງການເປັນຂຶ້ນມາຈາກຄວາມຕາຍ ທີ່ປະຕິເສດບໍ່ໄດ້ ຖ້າພະເຢຊູບໍ່ໄດ້ຊົງພະຊົນຢູ່ ພະນາມຂອງພະອົງຍ່ອມບໍ່ມີລິດເດດໃດໆ ທີ່ຈະຮັກສາຄົນປ່ວຍ ແລະທຳການອັດສະຈັນ (ກິດຈະການ 4:33)

ຂ) ການເຮັດການອິດທິລິດໃນພະນາມພະເຢຊູ ເຮັດໃຫ້ເກີດສິ່ງຕ່າງໆໄດ້ດັ່ງຕໍ່ໄປນີ້

1) ເຮັດໃຫ້ເກີດຄວາມກ້າ ເຮັດໃຫ້ຜູ້ເຊື່ອມີໃຈກ້າໃນການປ່າວປະກາດພະຄຣິດ
2) ມີກຳລັງໃຈໃນການອະທິຖານ ເຮັດໃຫ້ຜູ້ເຊື່ອທູນຂໍພະພອນຈາກພະເຈົ້າຫລາຍຂຶ້ນອີກ (ກິດຈະການ4:31)
3) ເຮັດໃຫ້ຄົນສຳນຶກບາບ ເຮັດໃຫ້ຄົນຮູ້ສຶກຕົວສຳນຶກໃນຄວາມຜິດບາບຂອງຕົນ (ກິດຈະການ 5:28-33)
4) ເຮັດໃຫ້ຄົນຫຼາພັນຄົນໄດ້ກັບໃຈໃໝ່ ເພາະການອັດສະຈັນ ເຮັດໃຫ້ຄົນຫຼາພັນໄດ້ຮັບເຊື່ອພາຍໃນວັນດຽວ (ກິດຈະການ 4:4,5,14)
5) ຖວາຍກຽດແກ່ພະເຈົ້າ ທຸກຄົນໄດ້ສັນລະເສີນ ຖວາຍກຽດແກ່ພະເຈົ້າໃນສິ່ງທີ່ຊົງກະທຳ (ກິດຈະການ 4:21)

ພະກິດຕິຄຸນໄດ້ແຜ່ຜາຍອອກໄປ ພະກິດຕິຄຸນແຜ່ຂະຫຍາຍອອກໄປຢ່າງໄວວາ (ກິດຈະການ 5:14-16)

ຄ) ທຸກແຫ່ງຫົນທີ່ສາວົກເທດສະນາສັ່ງສອນ ຮັກສາຄົນປ່ວຍ ໄລ່ຜີອອກ ແລະເຮັດການອັດສະຈັນ ຝູງຊົນຈະຫັນກັບມາຫາພະເຈົ້າ

1) ໃນສະມາເລັຽ ຊາວສະມາເລັຽຕັ້ງໃຈຟັງຟີລິບ ເພາະເຂົາໄດ້ຍິນຄຳສອນ ແລະເຫັນການອັດສະຈັນທີ່ທ່ານໄດ້ເຮັດ (ກິດຈະການ 8:6)
2) ໃນຊາໂລນ ແລະລິດດາ ທຸກຄົນທີ່ອາໃສໃນບໍລິເວນທີ່ຮາບຊາໂລນ ແລະເມືອງລິດດາໄດ້ຫັນກັບມາຫາອົງພະຜູ້ເປັນເຈົ້າ ເມື່ອເປໂຕໄດ້ສັ່ງໄອເນອັດວ່າ "ໄອເນອັດເອີຍ ພະເຢຊູຄຣິດຊົງໂປດທ່ານໃຫ້ຫາຍໂລກໄດ້ ຈົ່ງລຸກຂຶ້ນເກັບບ່ອນນອນຂອງທ່ານເຖີດ" ໃນທັນໃດນັ້ນໄອເນອັດໄດ້ລຸກຂຶ້ນ (ກິດຈະການ 9:34-35)
3) ໃນເມືອງຢັບຟາ ຄົນຫລວງຫລາຍໃນເມືອງຢັບຟາ ໄດ້ເຊື່ອໃນພະເຈົ້າ ເມື່ອເປໂຕເຮັດໃຫ້ໂດຄັດ ເປັນຂຶ້ນມາຈາກຄວາມຕາຍ (ກິດຈະການ 9:42)
4) ໃນເມືອງລິດສະຕາ ຊາວເມືອງລິດສະຕາເຂົ້າໃຈວ່າເທບພະເຈົ້າໄດ້ລົງມາຫາພວກເຂົາເມື່ອໄດ້ເຫັນຄົນເປັ້ຽຢ່າງໄດ້ຕາມຄຳສັ່ງຂອງໂປໂລ (ກິດຈະການ 28:8) (ກິດຈະການ 5:12-16)

GCI

5) ໜັງສືກິດຈະການປິດສາກລົງດ້ວຍເລື່ອງລາວການອັດສະຈັນຢ່າງຫລວງຫລາຍ (ກິດຈະການ 28:8)

ງ) ແນວທາງປະຕິບັດໃນການໃຊ້ຂອງປະທານ

1) ການຊົງເຈີມຂອງພະວິນຍານບໍລິສຸດ ເພື່ອກໍ່ໃຫ້ເກີດຄວາມໝັ້ນໃຈແລະສິດທິອຳນາດຢ່າງພິເສດ
2) ຖ້ອຍຄຳແຫ່ງຄວາມເຊື່ອ ແລະສິດທິອຳນາດ ເອລີຢາ ກ່າວວ່າພະເຈົ້າຜູ້ຊົງຕອບດ້ວຍໄຟ ຊົງເປັນພະເຈົ້າຂອງອິດສະລາເອນ ໄຟທີ່ຕົກມາຈາກທ້ອງຟ້ານັ້ນ ເປັນຕົວຢ່າງໜຶ່ງຂອງການເຮັດການອິດທິລິດ (ເບິ່ງ 1ພົງກະສັດ 18:21-39)
3) ການລົງມືເຮັດດ້ວຍຄວາມເຊື່ອ

## IV. ຂອງປະທານເພື່ອການຮັບໃຊ້ຕາມໜ້າທີ່

ກ. ຂອງປະທານໃນການເຜີຍພະວັດຈະນະ

"ແລະເຮົາທຸກຄົນມີຂອງປະທານທີ່ຕ່າງກັນ ຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ ຄືຖ້າເປັນການເຜີຍພະວັດຈະນະກໍຈົ່ງເຜີຍຕາມກຳລັງຂອງຄວາມເຊື່ອ.. ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດຊັງສິ່ງທີ່ຊົ່ວ ຈົ່ງຍຶດໝັ້ນໃນສິ່ງທີ່ດີ " (ໂຣມ 12:6 ແລະ 9)

1. ຕົວຢ່າງຂອງຜູ້ເຜີຍພະວັດຈະນະຕາມແບບພະຄຳພີໃຫມ່ຄື ຊີໂມນ ເປໂຕ (ອ່ານພະທຳກິດຈະການ 10 ບົດທຳອິດ ແລະພະທຳ 1, 2 ເປໂຕ

2. ຄຸນລັກສະນະຂອງຄົນທີ່ມີຂອງປະທານໃນການເຜີຍພະວັດຈະນະ

ກ) ເປັນຄົນທີ່**ຮູ້ຈັກໃຊ້ທັງສຽງ** ແລະຖ້ອຍຄຳ
ຂ) ເປັນຄົນທີ່**ມີຄວາມກ້າ** ແລະກົງໄປກົງມາຈົນໜ້າຕົກໃຈໃນບາງຄັ້ງເຮັດໃຫ້ເຂົາເປັນ "ຄົນຂອງສາທາລະນະ"
ຄ) ເຂົາ**ໃຊ້ຂໍ້ພະຄຳພີຢູ່ເລື້ອ**ຍໆເພື່ອສ້າງຄວາມໜ້າເຊື່ອຖື ແລະຢືນຢັນສັດຈະທຳທີ່ເຂົາປະກາດ
ງ) ເຂົາມີຄວາມສາມາດທີ່**ຈະສັງເກດເຫັນບຸກຄະລິກ** ແລະທ່າທີອັນຊົ່ວຮ້າຍຂອງຄົນອື່ນ (ເຊັ່ນ ເປໂຕເຫັນອານາເນັຽ ກັບຊັບຟີລາ ໃນກິດຈະການທີ່ 5)
ຈ) ເຂົາມີຄວາມເລັ່ງຮ້ອນໃຈ**ທີ່ຈະປ່ຽນທ່າທີ**ຂອງຄົນທີ່ເອົາແຕ່ໃຈຕົວເອງ
ສ) ເຂົາຈະໃຫ້ໂອກາດຜູ້ຟັງສະແດງການຕອບສະໜອງ ຫລື**ສະແດງອອກບາງ**ຢ່າງຊຶ່ງເປັນເຄື່ອງໝາຍ ເຖິງການຍອມຮັບໃນສັດສະທຳທີ່ເຂົາໄດ້ປະກາດໄປນັ້ນເຊັ່ນ "ຈົ່ງກັບໃຈໃຫມ່ ແລະຮັບບັບຕິດສະມາ"
ຊ) ຜູ້ເຜີຍະວັດຈະນະ ເກືອບຈະບໍ່ຮູ້ສຶກສົນໃຈການວິພາກວິຈານຂອງຄົນອື່ນເລີຍ ເຂົາຈະມີອາການແບບ "ໜັງໜາ" ແລະບໍ່ຄ່ອຍໄຄ່ວຄວ້າເຖິງແມ່ນຄົນອື່ນຈະພະຍາຍາມໃຫ້ເຂົາປ່ຽນແປງ

ຫລາຍຄັ້ງ ຜູ້ເຜີຍພະວັດຈະນະເບິ່ງຄືເປັນຄົນທີ່ **"ຫົວແຂງ"** ແລະບໍ່ຍອມປານີປານອມກັບໃຜ

GCI

3. ພະສັນຍາຂອງພະເຈົ້າສຳລັບຜູ້ທີ່ຕອບສະໜອງຢ່າງຖືກຕ້ອງ
   ກ) "ດ້ວຍວ່າພະສັນຍານັ້ນຕົກແກ່ທ່ານທັງຫລາຍກັບລູກຫລານຂອງທ່ານນຳ ແລະແກ່ຄົນທັງຫລາຍທີ່ຢູ່ໄກຄືທຸກຄົນທີ່ອົງພະຜູ້ເປັນເຈົ້າພະເຈົ້າຂອງເຮົາຊົງເອີ້ນມາເຝົ້າພະອົງ" (ກິດຈະການ 2:39)

   "ເຂົາເປັນຄົນທີ່ເນັ້ນຫລັກການ, ຫລາຍກວ່າຄວາມສຳພັນ"

4. ຄຳຕອບຂອງພະເຈົ້າສຳລັບບັນຫາໃນເລື່ອງນີ້
   "ຈົ່ງຮັກດ້ວຍໃຈຈິງ" (ໂຣມ 12:9)

   **<u>ປະເດັນສຳຄັນ</u>**: ຫາກຄົນທີ່ມີຂອງປະທານໃນການເຜີຍພະວັດຈະນະ ບໍ່ຮູ້ຈັກຮຽນຮູ້ທີ່ຈະປັບຄວາມກ້າຫານ ຄວາມຕົງໄປຕົງມາ ແລະຄວາມເສີຍຊາຂອງຕົນເອງໂດຍຄວາມຮັກຂອງພະຄຣິດແລ້ວເຂົາຈະກໍ່ຄວາມເສັຽຫາຍຫລາຍກວ່າທີ່ຈະເກີດຜົນດີ ແຕ່ເມື່ອເຂົາຮຽນຮູ້ທີ່ຈະປັບວິທີການປ່າວ ປະກາດພະກິດຕິຄຸນ ຂອງເຂົາດ້ວຍຄວາມຮັກ ເຂົາກໍຈະກາຍເປັນອາວຸດອັນຊົງພະລັງ ຍິ່ງຂອງພະເຈົ້າໃນການຕໍ່ຕ້ານດ້ວຍຄວາມຊົ່ວຮ້າຍ ແລະໃນການສ້າງສັນຄວາມດີ.

ຂ. ຂອງປະທານໃນການບົວລະບັດ

" ແລະເຮົາທຸກຄົນມີຂອງປະທານທີ່ສຳຄັນຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ..ຖ້າເປັນການບົວລະບັດກໍຈົ່ງບົວລະບັດ ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນ..(ແຕ່) ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດຊັງສິ່ງທີ່ຊົ່ວ ຈົ່ງຍຶດໝັ້ນໃນສິ່ງທີ່ດີ" (ໂຣມ 12:6,7 ແລະ 9)

ຄຳວ່າ "ບົວລະບັດ" ຕາມທີ່ໃຊ້ໃນພະຄຳພີນັ້ນ ມາຈາກພາສາກຣີກວ່າ "ໄດໂກເນສ" ຊຶ່ງເປັນຮາກສັບຂອງຄຳວ່າ "ມັກຄະນາຍົກ" ຊຶ່ງໝາຍເຖິງຄົນງານຄຣິສຕຽນກຸ່ມນຶ່ງ.

ດັ່ງນັ້ນ ຂອງປະທານແຫ່ງການບົວລະບັດ ຈຶ່ງຕ້ອງກ່ຽວ ຂ້ອງກັບງານດ້ານວັດຖຸ ແລະງານບົວລະບັດຕ່າງໆ.

(ໃນທາງກົງກັນຂ້າມ ຂອງປະທານແຫ່ງການສະແດງຄວາມ ເມດຕາ ຈະກ່ຽວຂ້ອງກັບພາລະຄວາມຕ້ອງການທາງ ດ້ານຈິດໃຈ ແລະອາລົມຄວາມຮູ້ສຶກ ຄຣິສຕຽນໂດຍສ່ວນໃຫຍ່ ຖ້າບໍ່ມີຂອງປະທານແຫ່ງການບົວລະບັດກໍຈະມີຂອງ ປະທານແຫ່ງການສະແດງຄວາມເມດຕາ ເພາະວ່າຂອງປະທານ ທັງສອງຊະນິດນີ້ເປັນທີ່ຕ້ອງການຫລາຍ).

1. ຕົວຢ່າງຂອງປະທານໃນການບົວລະບັດ ຈາກພະຄຳພີໃໝ່
   ມັກຄະນາຍົກ 7 ຄົນ ໂດຍສະເພາະສະເຕຟາໂນ ແລະຟີລິບ, ໃນກິດຈະການບົດທີ 6, ຄຣິສຕະຈັກຍຸກທຳອິດຈະຕ້ອງມີຂໍ້ກຳນົດ 3ຢ່າງ ກ່ອນຈະຖືກເລືອກໃຫ້ເປັນຜູ້ຮັບໃຊ້ (ມັກຄະນາຍົກ) (ກິດຈະການບົດທີ 6:1-3)
   ກ.) ມີຊື່ສຽງດີ

GCI

ຂ) ປະກອບດ້ວຍພະວິນຍານບໍລິສຸດ ແລະສະຕິປັນຍາ (ຮູ້ຈັກວິທີການດຳເນີນຊີວິດທີ່ຖືກຕ້ອງ)

ຄ) ພະເຢຊູຊົງໃຫ້ຄວາມເຂົ້າໃຈບາງຢ່າງແກ່ເຮົາໃນເລື່ອງຂອງປະທານແຫ່ງການບໍລະບັດ ໂດຍເບິ່ງຊີວິດຂອງມາທາໃນລູກາບົດທີ 10

2. ຄຸນລັກສະນະຂອງຄົນທີ່ມີຂອງປະທານແຫ່ງການບໍລະບັດ:

ກ) ມີໃຈຮ້ອນຮົນ ປາດຖະນາ ຈົນເກືອບເປັນຄືຄວາມຮູ້ສຶກບີບຄັ້ນ **<u>ທີ່ຈະບໍລະບັດຊ່</u>**ວຍເຫລືອຄົນອື່ນໆໃນຄຣິສຕະຈັກ

ຂ) ເຂົາເປັນຄົນທີ່ມີຄວາມ**<u>ເຂົ້າໃຈຢ່າງເລິກຊຶ້ງ</u>** ໃນພາລະບັນຫາ ແລະຄວາມຕ້ອງການຝ່າຍວັດຖຸຂອງ ຄົນອື່ນໆ ເຂົາຈະສັງເກດເຫັນພາລະບັນຫາເຫລົ່ານີ້ໄດ້ດີ ໃນຂະນະທີ່ຄົນອື່ນເບິ່ງບໍ່ເຫັນ.

ຄ) ເນື່ອງຈາກເປັນເລື່ອງຍາກສຳລັບຜູ້ບໍລະບັດທີ່ຈະກ່າວຄຳວ່າ "ບໍ່" ເມື່ອເຂົາເຫັນເຖິງຄວາມຕ້ອງການເຂົາຈຶ່ງມີແນວໂນ້ມທີ່ຈະເຂົ້າໄປກ່ຽວຂ້ອງກັບຫລາຍສິ່ງຫລາຍຢ່າງຫລາຍເກີນໄປ ຈົນຕົວເອງອິດເມື່ອຍ

ງ) ຜູ້ບໍລະບັດມັກຈະກ່ຽວຂ້ອງກັບການຕອບສະໜອງຄວາມຕ້ອງ ການຝ່າຍວັດຖຸຂອງຄົນອື່ນຫລາຍຈົນມີແນວໂນ້ມທີ່ຈະເບິ່ງຂ້າມຄວາມຕ້ອງການຝ່າຍວິນຍານ.

ຈ) ຜູ້ບໍລະບັດມັກຈະຄາດຫວັງໃຫ້ຄົນອື່ນທຸ້ມເທ ແລະຂະຫຍັນຂັນແຂງໃນການບໍລະບັດຄືຕົນເອງ (ສັງເກດເບິ່ງ ມາທາໃນລູກາບົດທີ່ 10) ລັກສະນະເຊັ່ນນີ້ ເຮັດໃຫ້ຄົນອື່ນຄິດວ່າ ຜູ້ບໍລະບັດເປັນ "ຄົນຈູ້ຈີ້"

ສ) ຕາມປົກກະຕິແລ້ວ ງານສະເພາະໜ້າມີຄວາມສຳຄັນຕໍ່ຜູ້ບໍລະບັດຫລາຍ ຈົນມັນກາຍເປັນ "ຈຸດໝາຍ" ຂອງເຂົາ ແທນທີ່ຈະເປັນພຽງ "ວິທີການໜຶ່ງ" ທີ່ຈະນຳພາໄປສູ່ຈຸດໝາຍຊຶ່ງສຳຄັນກວ່າ ເຮັດໃຫ້ບໍລະບັດຮູ້ສຶກສັບສົນກັບການຈັດລຳດັ**ບຄວາມສຳຄັນ** ບັນຫານີ້ເກີດຂຶ້ນກັບມາທາຄືກັນ.

ຊ) ບຸກຄະລິກລັກສະນະໂດດເດ່ນປະການນຶ່ງຂອງຜູ້ບໍລະບັດຄື ເຂົາຕ້ອງການເຮັດໃຫ້ງານສຳເລັດລຸລ່ວງໂດຍໄວທີ່ສຸດ ເຊັ່ນດຽວກັບມາທາ ແລະຟີລິບ ເພື່ອຈະໄດ້ທຳງານນີ້ຕໍ່ໄປອີກ ບາງທີລັກສະນະຂໍ້ນີ້ຄວນຈະເປັນລັກສະນະໂດດເດັ່ນເພາະຕົວຂອງຜູ້ບໍລະບັດ ແຕ່ຜູ້ບໍລະບັດຈະສົນໃຈພຽງເປົ້າໝາຍທີ່ຢູ່ສະເພາະໜ້າເທົ່ານັ້ນ ແຕ່ຜູ້ບບໍລິຫານ ຈະເບິ່ງເຫັນພາບລວມ ແລະໃຫ້ຄວາມສົນໃຈກັບເປົ້າໝາຍໄລຍະຍາວຫລາຍກວ່າ

ຍ) ການທີ່ເຂົາໝົກມຸ້ນຢູ່ກັບເປົ້າໝາຍສະເພາະໜ້າ ແລະການທີ່ເຂົາປາດຖະນາທີ່ຈະເຮັດງານສະເພາະໜ້າໃຫ້ສຳເລັດລຸລ່ວງໄປຢ່າງໄວວານັ້ນ ເຮັດໃຫ້ຜູ້ບໍລະບັດຮູ້ສຶກເປັນການຍາກທີ່ຈະ

GCI

ເຮັດວຽກພາຍໃຕ້ການນໍາຂອງຄົນອື່ນ ເຮັດໃຫ້ເຂົາຮູ້ສຶກອຶດອັດທີ່ຈະເຮັດຕາມລະບຽບແບບແຜນຕ່າງໆ ແລະຈະພະຍາຍາມຫລີກລ້ຽງຢ່າງທີ່ສຸດ

ດ) ຜູ້ບໍລິລະບັດ ຈະມີຄວາມອົດທົນທາງກາຍສູງກວ່າຄົນອື່ນໆສະເໝີ ເຂົາສາມາດທໍາງານໄດ້ຢ່າງຕໍ່ເນື່ອງໃນຂະນະທີ່ຫລາຍຄົນຮູ້ສຶກເມື່ອຍຈະຕ້ອງຢຸດພັກ ມາທາເປັນຕົວຢ່າງຊັດເຈນໃນເລື່ອງນີ້

ຕ) ຜູ້ບໍດລະບັດເປັນຜູ້ເສັຽສະຫລະຢ່າງຍິ່ງອັນທີ່ຈິງແລ້ວເຂົາເປັນຄົນທີ່ມີຄວາມເສັຽສະຫລະຫລາຍທີ່ສຸດໃນບັນດາຄຣິສຕຽນທັງຫລາຍ ເຂົາຈະບໍ່ຄິດອັນໃດເລີຍທີ່ຕ້ອງເສັຽທັງເວລາ ແລະເງິນທອງເພື່ອຈະທໍາງານໃຫ້ສໍາເລັດ.

ຖ) ແຕ່ຄຸນລັກສະນະແຫ່ງການເສັຽສະຫລະໃນຕົວຜູ້ບໍລິລະບັດນີ້ ອາດຈະກາຍເປັນຂໍ້ບົກພ່ອງແທນທີ່ຈະເປັນປະໂຫຍດ ເພາະມັນເຮັດໃຫ້ຜູ້ບໍລິລະບັດມີແນວໂນ້ມມັກຕັດສິນຄົນອື່ນຊຶ່ງເຂົາຄິດວ່າໜ້າຈະຮູ້ຈັກເສັຽສະຫລະແບບດຽວກັບຕົນເອງ ເລື່ອງນີ້ເປັນຄວາມຈິງໂດຍສະເພາະຢ່າງຍິ່ງໃນຄອບຄົວຂອງຜູ້ບໍລິລະບັດ ຊຶ່ງເຂົາຄາດຫວັງທີ່ຈະໃຫ້ຄົນອື່ນໆໃນຄອບຄົວມີຄວາມເສັຽສະຫລະເຊັ່ນດຽວກັນກັບເຂົາ ເພື່ອເຂົາຈະໄດ້ເຮັດໜ້າທີ່ຂອງຕົນໄດ້ຕໍ່ໄປ (ຂໍ້ສັງເກດ ທ່າທີຂອງມາທາໃນການຕັດສິນການກະທໍາຂອງມາລີອາ) ຜົນຮັບຄືຄົນໃນຄອບຄົວຂອງຜູ້ບໍລິລະບັດຈະຮູ້ວ່າກໍາລັງບໍລິລະບັດຈະຮູ້ວ່າກໍາລັງຖືກປະຖິ້ມ ເພາະເຂົາມົວແຕ່ສາລະວົນຢູ່ກັບການບໍລິລະບັດຄົນອື່ນ ຫລືຊ່ອຍງານຂອງຄຣິສຕະຈັກ.

3. ອັນຕະລາຍທີ່ອາດຈະເກີດກັບຜູ້ທີ່ມີຂອງປະທານໃນການບໍລິລະບັດຄື:

ກ) ເຂົາໃຫ້ຄວາມສົນໃຈງານ ຫລາຍກວ່າ“ ສົນໃຈໃນຄົນ”

ຂ) ເຂົາມີແນວໂນ້ມທີ່ຈະລະເລີຍຄວາມສໍາພັນ ມຸ້ງເນັ້ນແຕ່ຈະເຮັດງານຂອງຕົນໃຫ້ສໍາເລັດ

4. ຄໍາຕອບຂອງພະເຈົ້າສໍາລັບບັນຫາເລື່ອງນີ້:

ກ) ພະເຢຊູຕັດກັບສາວົກຢູ່ຫ້ອງຊັ້ນເທິງວ່າ ຜູ້ໃດທີ່ປະສົງຈະເຮັດການເພື່ອພະອົງຈະຕ້ອງມີ “ນໍ້າໃຈຢ່າງຜູ້ຮັບໃຊ້” ຄືການມີຫົວໃຈເພື່ອຄົນອື່ນເພື່ອຄົນອື່ນເພາະເປົ້າໝາຍສໍາຄັນຄືການຄືນດີກັນ (ການມີຄວາມສໍາພັນທີ່ຖືກຕ້ອງ) ບໍ່ແມ່ນການງານ.

ຂ) ນີ້ເປັນເຫດທີ່ຄຣິສຕະຈັກໄດ້ກໍາໜົດຄຸນສົມບັດຂອງຜູ້ບໍລິລະບັດໄວ້ 3 ປະການຄື “ມີຊື່ສຽງດີປະກອບດ້ວຍພະວິນຍານ ແລະສະຕິປັນຍາ ເພາະຄໍາວ່າບັນຫາໃນພະຄໍາພີໝາຍເຖິງ ການຮູ້ຈັກໃຊ້ຂອງປະທານຂອງພະເຈົ້າໄດ້ຢ່າງຖືກຕ້ອງ”

ຄ) ນີ້ເປັນເຫດທີ່ໂປໂລເຕືອນຜູ້ບໍລິລະບັດທຸກຄົນວ່າ “ຈົ່ງຮັກກັນສັນພີ່ນ້ອງ ສ່ວນການໃຫ້ກຽດກັນ ແລະກັນນັ້ນຈົ່ງຖືວ່າຜູ້ອື່ນດີກວ່າຕົວ” **(ໂຣມ 12:10)**

GCI

**<u>ປະເດັນສຳຄັນ</u>** ພະຄຣິດບໍ່ໄດ້ສົ່ງພະວິນຍານບໍລິສຸດມາເພື່ອໃຫ້ເຮົາໄດ້ຮັບຂອງປະທານເພື່ອຮັບໃຊ້ພະອົງເທິງແຜ່ນດິນໂລກເທົ່ານັ້ນ ແຕ່ພະອົງໄດ້ສົ່ງພະວິນຍານມາເພື່ອປ່ຽນແປງຈິດໃຈເຮົາເພື່ອໃຫ້ເຮົາເຮັດການຂອງພະອົງໄດ້ຢ່າງຖືກຕ້ອງ ເພື່ອຄົນທີ່ຖືກຕ້ອງ ພະອົງສົ່ງພະວິນຍານບໍລິສຸດມາເພື່ອປະທານ "ຫົວໃຈຢ່າງຜູ້ຮັບໃຊ້" ໃຫ້ແກ່ເຮົາ ຊຶ່ງເປັນຫົວໃຈຂອງພະອົງເອງເປັນຫົວໃຈທີ່ມີຄວາມຮັກແທ້ສັນພີ່ນ້ອງເປັນຫົວໃຈທີ່ຜັກດັນໃຫ້ເຮົາຖືວ່າຜູ້ອື່ນດີກວ່າຕົວເຮົາເອງໂດຍມີເຫດຜົນທີ່ຖືກຕ້ອງ ນັ້ນຄືການທີ່ຈະຄືນດີກັບພະເຈົ້າ ແລະຄົນອື່ນໆ "ຫົວໃຈຢ່າງຜູ້ຮັບໃຊ້" ນີ້ເປັນຂໍ້ຄຸນສົມບັດສຳຄັນຂອງທຸກຄົນທີ່ມີຂອງປະທານໃນການບົວລະບັດກ່ອນທີ່ເຂົາຈະເປັນເພື່ອນຮ່ວມງານຂອງພະເຈົ້າ ແລະໄດ້ບັນຈຸສັກກະຍະພາບສູງສຸດໃນຊີວິດຂອງເຂົາ.

ຄ. ຂອງປະທານໃນການສັ່ງສອນ

"ແລະເຮົາທຸກຄົນມີຂອງປະທານທີ່ຕ່າງກັນ ຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ..ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນຢ່າທໍ້ຖອຍ
ຈົ່ງມີຈິດໃຈກະຕືລືລົ້ນດ້ວຍພະວິນຍານຈົ່ງບົວລະບັດອົງພະຜູ້ເປັນເຈົ້າ" (ໂຣມ 12:6-8 ແລະ 12)

1. ຕົວຢ່າງຂອງປະທານໃນການສອນ ໃນພະຄຳພີໃໝ່
   ອັກຄະສາວົກມັດທາຍ

2. ຄຸນລັກສະນະຂອງຄົນທີ່ມີຂອງປະທານໃນການສອນ:

   ກ) ເຂົາຈະນຳສະເໜີເນື້ອຫາຂອງເຂົາ ຢ່າງມີ**<u>ລະບຽບ</u>** ຄຸນສົມບັດນີ້ ອາດຈະເປັນຂໍ້ສຳຄັນທີ່ໂດດເດັ່ນທີ່ສຸດຂອງຄົນທີ່ມີຂອງປະທານໃນການສອນ.

   ຂ) ຜູ້ທີ່ມີຂອງປະທານໃນການສອນ ຈະພະຍາຍາມຈັດລະບຽບເນື້ອຫາ**<u>ທີ່ຄ້າຍຄືກັນ</u>**ໄວ້ໃນບໍລິບົດດຽວກັນ ທຸກຄົນທີ່ມີຂອງປະທານໃນການສອນຈະຮູ້ຈັກອຶດອັດຖ້າພົບເຫັນໃຜທີ່ມັກເອົາເນື້ອຫາພະຄຳພີໄປສອນຫລືເທດສະໜາແບບນອກບໍລິບົດ

   ຄ) ມັດທາຍບໍ່ພຽງແຕ່ລວບລວມ ແລະຈັດລະບົບຄຳສອນຂອງພະເຢຊູເທົ່ານັ້ນ ແຕ່ຍັງໄດ້ຮຽບຮຽງໄວ້ໃນ ຮູບແບບທີ່ຜູ້ອ່ານຈະຈົດຈຳ ແລະທ່ອງຈຳໄດ້ງ່າຍ ຕົວຢ່າງທີ່ດີຄືເລື່ອງທັດສະນະຄະຕິໃນຄຳເທດສະນາ ເທິງພູເຂົາ ແລະວິບັດເຈັດປະການໃນບົດທີ່ 23.

   ງ) ຜູ້ທີ່ມີຂອງປະທານໃນການສອນ ຈະລະມັດລະວັງໃນການ**<u>ໃຊ້ຄຳ</u>**ຢ່າງຖືກຕ້ອງ ຄົນທີ່ມີຂອງປະທານ ໃນການສອນ ອາດສະດຸ້ງດ້ວຍຄວາມຕົກໃຈຖ້າເຫັນນັກເທດໃຊ້ຄຳຜິດ ຫລືອອກສຽງຜິດ ການໃຊ້ ຄຳຢ່າງຖືກຕ້ອງເປັນເລື່ອງສຳຄັນຢ່າງຍິ່ງສຳລັບຄົນທີ່ມີຂອງປະທານໃນການສອນ.

GCI

ຈ) ຜູ້ເປັນຄູ ຫລືອາຈານ ຈະເຊື່ອຢ່າງຈິງໃຈວ່າຂອງປະທານ**ໃນການສອນ** ຂອງຕົນເປັນພື້ນຖານສຳລັບ ທຸກເລື່ອງລາວ ໃນຊີວິດຄຣິສຕຽນ .

ສ) ມັດທາຍ**ສ້າງຂໍ້ພະຄຳພີ**ຫລາຍກວ່າຜູ້ຂຽນຂ່າວປະເສີດຄົນອື່ນໆ ເພື່ອຢືນຢັນສັດຈະທຳທີ່ນຳສະເໜີ ນີ້ຄືຄຸນລັກສະນະທີ່ໂດດເດັ່ນອີກປະການນຶ່ງຂອງຜູ້ທີ່ເປັນອາຈານ

ຊ) ຜູ້ເປັນອຈາຈານ ຈະພະຍາຍາມຢ່າງສູງສຸດທີ່ຈະເອົາສັດຈະທຳ**ໃຫມ່ໆ**ເຂົ້າມາຢູ່ໃນກອບຂອງສັດຈະທຳທີ່ຜູ້ຄົນຍອມຮັບນັບຖືກັນຢູ່ນັ້ນ

ຍ) ຜູ້ເປັນອາຈານ ມີແນມໂນ້ມທີ່ຈະເນັ້ນ**ທິດສະດີ**ຫລາຍກວ່າພາກປະຕິບັດ ທັ້ງນີ້ເພາະເຂົາຕ້ອງກ່ຽວ ຂ້ອງກັບທິດສະດີແຫ່ງສັດຈະທຳຫລາຍ ຈົນລືມອະທິບາຍເຖິງແງ່ມູມໃນພາກປະຕິບັດໄປ.

ດ) ຜູ້ເປັນອາຈານ ຈະມີຄວາມຮັກຢ່**າງຈິງຈັງ**ໃນການຄົ້ນຄວ້າສັດຈະທຳຂອງພະຄຳພີ ການຄົ້ນຄວ້າເປັນສິ່ງທີ່ດຶງດູດໃຈຫລາຍສຳລັບຜູ້ທີ່ມີຂອງປະທານໃນການສອນ ຫລາຍຍິ່ງກວ່າການນຳສະເໜີເນື້ອຫາຄຳສອນເສັຽອີກ ເຂົາຈະຮັກໃນການຂຸດຄົ້ນຫາສັດຈະທຳຂອງພະຄຳພີ.

ຕ) ຜູ້ທີ່ເປັນອາຈານຈະຢືນກາງທີ່ຈະພິສູດເຖິງສິດທິອຳນາດຂອງຜູ້**ນຳສະເໜີ**ສັດຈະທຳກ່ອນທີ່ເຂົາຈະຍອມໃນສັດຈະທຳນັ້ນໆ ລັກສະນະຂໍ້ນີ້ເຮັດໃຫ້ຄົນອື່ນຄິດວ່າຜູ້ມີ ຂອງປະທານໃນການສອນເປັນຄົນໃຈເຢັນ ແລະເຄັ່ງຄັດບັນຍັດ

ຖ) ຜູ້ເປັນອາຈານມັກຈະມີຄວາມໂນ້ມອ່ຽງທີ່ຈະເປັນຄົນພູມໃຈໃນສິ່ງທີ່ຕົນຮຽນຮູ້ມາ ເຮັດໃຫ້ເຂົາ**ຂົນ ຂວາຍ**ຢາກຈະຮຽນຮູ້ເພີ່ມເຕີມຢູ່ເລື້ອຍໆ ບໍ່ໜ້າແປກໃຈທີ່ທ່ານມັດທາຍອະດີດຄົນເກັບພາສີຈະເປັນຜູ້ທີ່ມີການສຶກສາຫລາຍກວ່າຄົນອື່ນໃດໃນບັນດາສາວົກທັງສິບສອງຄົນ ແຕ່ເປັນການດີທີ່ມັດທາຍຮູ້ເຖິງອັນຕະລາຍໃນຂໍ້ນີ້ ຈຶ່ງຈັດການກັບເລື່ອງນີ້ໄດ້ຢ່າງເໝາະສົມ ແຕ່ຖ້າຜູ້ເປັນອາຈານບໍ່ຮູ້ເຖິງອັນຕະລາຍໃນຂໍ້ນີ້ ເຂົາກໍຈະບູຊາຄວາມຮູ້ໃນສະມອງຂອງຕົວເອງເປັນພະເຈົ້າ.

ທ) ປະການສຸດທ້າຍ ຜູ້ມີຂອງປະທານໃນການສອນ ມີຄວາມໂນ້ມອ່ຽງທີ່ຈະເພີກເສີຍຕໍ່ສຽງຂອງພະວິນຍານບໍລິສຸດໃນການຕີຄວາມພະຄຳພີ ແລະເພິ່ງພາໃນຄວາມຮູ້ຂອງຕົນເອງເປັນຫລັກ ທັງນີ້ເປັນເພາະ ວ່າສິ່ງທີ່ເຂົາໄດ້ຮຽນຮູ້ໂດຍການສຶກສາຄົ້ນຄວ້າຂອງເຂົານັ້ນໄດ້ກາຍເປັນສິ່ງທີ່ສຳຄັນຢ່າງຍິ່ງສຳລັບເຂົາຈົນລືມໄປວ່າ ຂໍ້ພະຄຳພີຄືສັດຈະທຳທີ່ໄດ້ຮັບການເປີດເຜີຍ ແລະມີຊີວິດຢູ່ແລະຈະກາຍເປັນຖ້ອຍຄຳທີ່ຊົງຊີວິດສຳລັບເຮົາໄດ້ ກໍຕໍ່ເມື່ອເຮົາຍັງຍອມໃຫ້ພະວິນຍານບໍລິສຸດຊຶ່ງເປັນຜູ້ປະພັນພະຄຳພີໄດ້ແປຄວາມໝາຍໃຫ້ເຮົາເຂົ້າໃຈເທົ່ານັ້ນ

3. ອັນຕະລາຍທີ່ອາດຈະເກີດຂຶ້ນກັບຜູ້ທີ່ມີຂອງປະທານໃນການສອນ .

ກ) ເຂົາມີແນວໂນ້ມທີ່ຈະໃຫ້ຄວາມສົນໃຈກັບເນື້ອຫາ ຫລາຍກວ່າສົນໃຈຄົນ

ຂ) ເຂົາມີແນວໂນ້ມທີ່ຈະເອົາຄວາມຄິດເຊິງປັດສະຍາຂອງຕົນ ໄປທົດແທນຄວາມສຳພັນກັບຜູ້ຄົນ

GCI

4. ຄຳຕອບຂອງພະເຈົ້າສຳລັບບັນຫາໃນເລື່ອງນີ້:
"ຢ່າອ່ອນລະອາ ຈົ່ງມີຈິດໃຈກະຕືລືລົ້ນດ້ວຍພະວິນຍານ ຈົ່ງບົວລະບັດຕໍ່ອົງພະຜູ້ເປັນເຈົ້າ" (ໂຣມ12:11)
ປະເດັນສຳຄັນ: ຖ້າຜູ້ທີ່ມີຂອງປະທານໃນການສອນບໍ່ໄດ້ມີຈິດໃຈກະຕືລືລົ້ນດ້ວຍພະວິນຍານ ຄື ເປັນຜູ້ມີຊີວິດໃນພະວິນຍານ ແລະພະວິນຍານຢູ່ໃນເຂົາໃນຂະນະທີ່ເຂົາມຸ້ງເນັ້ນຄົ້ນຄວ້າ ແລະເຮັດບົດສອນ ເຂົາຈະຕົກຢູ່ໃນການທົດລອງຄິດວ່າເນື້ອຫາຄຳສອນຂອງຕົນເອງນັ້ນມີຄວາມສຳຄັນກວ່າສິ່ງອື່ນໃດທັງໝົດ ແທນທີ່ຈະໃຊ້ຄຳສອນຂອງຕົນເປັນວິທີການນຳພານັກຮຽນຂອງຕົນໃຫ້ກ້າວໄປສູ່ການມີຄວາມສຳພັນອັນດີກັບພະເຈົ້າ ແລະຄົນອື່ນໆ (ຊຶ່ງເປັນເປົ້າໝາຍຂອງການສອນທັງມວນ) ຄົນທີ່ຄິດຢ່າງນີ້ ສະແດງວ່າບໍ່ແມ່ນຜູ້ທີ່ກຳລັງຮັບໃຊ້ພະເຈົ້າ ແຕ່ກຳລັງຮັບໃຊ້ຄວາມອວດດີຂອງຕົນເອງ.

ງ. ຂອງປະທານໃນການເຕືອນສະຕິ

"ແລະເຮົາທຸກຄົນມີຂອງປະທານທີ່ຕ່າງກັນ ຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ..ຖ້າເປັນການເຕືອນສະຕິກໍຈົ່ງເຕືອນສະຕິ ຈົ່ງຊື່ນຊົມຍິນດີໃນຄວາມຫວັງ ຈົ່ງອົດທົນຕໍ່ຄວາມຍາກລຳບາກ ຈົ່ງຂະໝັກຂະເໝັ້ນອະທິຖານ" (ໂຣມ 12:6, 8 ແລະ 12)

ການເຕືອນສະຕິ ໃນຄວາມໝາຍຂອງຄຣິສຕຽນນັ້ນ ຄືການນຳເອົາສັດຈະທຳຂອງຄຣິສຕຽນມາປະຍຸກໃຊ້ໃນຊີວິດປະຈຳວັນ ຜູ້ເຕືອນສະຕິຈະຊ່ວຍອະທິບາຍເຖິງວິທີການນຳເອົາຫລັກຄຳສອນຂອງຄຣິສຕຽນມາໃຊ້ໃນການດຳເນີນຊີວິດປະຈຳວັນ ເຂົາຈະບອກໃຫ້ຄົນອື່ນຮູ້ເຖິງວິທີນຳເອົາສັດຈະທຳມາໃຊ້ໃນຊີວິດ

1. ຕົວຢ່າງຂອງປະທານການເຕືອນສະຕິຈາກພະຄຳພີໃໝ່ - ອັກຄະສາວົກໂປໂລ

2. ຄຸນລັກສະນະຂອງຜູ້ທີ່ມີຂອງປະທານໃນການເຕືອນສະຕິ:

ກ) ທີ່ຊັດເຈນທີ່ສຸດຄື ເຂົາຈະເປັນຄົນທີ່**<u>ເນັ້ນການປະຕິບັດ</u>** ເຂົາຈະເຫັນວ່າຊີວິດຄຣິສຕຽນນັ້ນຄືວິຖີໃນການ ດຳ ເນີນຊີວິດບໍ່ແມ່ນຫລັກປັດສະຍາຫລືສາດສະໜາ ຜູ້ທີ່ມີຂອງປະທານໃນການເຕືອນສະຕິຈະຮູ້ສຶກ ເບື່ອໜ່າຍຕໍ່ ການ ເທດສະໜາຫລືສັ່ງສອນທີ່ເປັນໄປໃນແບບທິດສະດີ ແທນທີ່ຈະເປັນແບບປະຕິບັດ ໂປໂລກ່າວວ່າ "ເພາະວ່າແຜ່ນດິນຂອງພະເຈົ້າບໍ່ແມ່ນເລື່ອງຂອງຄຳເວົ້າ ແຕ່ເປັນເລື່ອງລິດເດດ" (1 ໂກຣິນໂທ 4:20).

ຂ) ລິດເດດນີ້ ເປັນພະຄຸນຂອງພະເຈົ້າ ຫົວຂໍ້ທີ່ຜູ້ເຕືອນສະຕິຈະຢໍ້າຢູ່ສະເໝີກໍຄື "ສິ່ງທີ່ເປັນໄປບໍ່ໄດ້ສຳລັບມະນຸດນັ້ນ ເປັນໄປໄດ້ສຳລັບພະເຈົ້າ" ຫລັກສຳຄັນທີ່ຜູ້ເຕືອນສະຕິກ່າວຢໍ້າກໍຄື "ການເຄັ່ງ

GCI

ບັນຍັດ ນຳໄປສູ່ຄວາມຕາຍ ສ່ວນພະຄຸນນຳໄປສູ່ຊີວິດ" ນີ້ເປັນເຫດທີ່ທ່ານກ່າວໂຈມຕີຊີວິດໃຕ້ທຳບັນຍັດຢູ່ສະເໝີ ແລະເນັ້ນຢ່າງແຂງຂັນເຖິງຊີວິດໃນພະຄຸນ

ຄ) ຜູ້ເຕືອນສະຕິມີຄວາມໂນ້ມອ່ຽງທີ່ຈະຫລຸບວ່າ ຄວາມທຸກລຳບາກ ແລະບັນຫາ ເປັນໂອກາດຂອງມະນຸດທີ່ຈະຈະເລີນຂຶ້ນໃນພະຄຸນ ແລະເຂົາຈະແປກໃຈທີ່ຄົນອື່ນເບິ່ງບໍ່ເຫັນຄວາມຈິງໃນເລື່ອງນີ້ຫລາຍຄັ້ງເລື່ອງນີ້ເຮັດໃຫ້ຄົນອື່ນຄິດວ່າເຂົາເປັນຄົນແຂງກ້າວແລະໃຈດຳ

ງ) ຜູ້ເຕືອນສະຕິ ບໍ່ພຽງແຕ່ຈະເບິ່ງເຫັນພາບຂອງຄົນອື່ນໃນຖານະທີ່ເປັນຄົນບາບ ແລະໄດ້ຮັບຜົນກະທົບຈາກບາບເທົ່ານັ້ນ ແຕ່ເຂົາຍັງສາມາດຈິນຕະນາການ ແລະພັດທະນາເຖິງສະພາບຊີວິດໃຫມ່ທີ່ຈະເກີດຂຶ້ນເມື່ອພະເຈົ້າຊົງຊຳລະເຂົາໃຫ້ບໍລິສຸດແລ້ວດ້ວຍຄວາມຮັກຂອງພະອົງ

ຈ) ຜູ້ເຕືອນສະຕິ ຈະຮູ້ສຶກເປັນຫ່ວງເປັນໃຍໃນຜູ້ຟັງຂອງເຂົາ ແລະມີຄວາມປາດຖະນາທີ່ຈະໄດ້ຮັບຄວາມຮູ້ສຶກຂອງຜູ້ຟັງເທົ່າໃດ ແຕ່ຜູ້ເຕືອນສະຕິມັກຈະກະຕືລືລົ້ນທີ່ຈະຮູ້ວ່າຜູ້ຟັງຈະຕອບສະໜອງຢ່າງໃດຕໍ່ຄຳສອນຂອງເຂົາ)

ສ) ວິທີການຂອງຜູ້ເຕືອນສະຕິນັ້ນຄືການໃຫ້ຄຳຂໍ້ແນະນຳຢ່າງຈຳເພາະເຈາະຈົງ ຫລືສະເໜີໂຄງການພິເສດສະເພາະໃຫ້ຄົນອື່ນເພື່ອເອົາຊະນະບັນຫາ ແລະຈຸດອ່ອນບາງຢ່າງ ທີ່ແທ້ແລ້ວໃນຈົດໝາຍຝາກຂອງໂປໂລນັ້ນປະກອບໄປດ້ວຍຂໍ້ແນະນຳຫລາຍຢ່າງຫລາຍປະການເພື່ອຊ່ວຍເຫລືອຄົນໃຫ້ມີໄຊຊະນະໃນບັນຫາທາງປະຕິບັດຕ່າງໆ ເຊັ່ນ ການແຕ່ງງານ ການຜິດປະເວນີ ຄວາມກັງວົນ ການເມົາເຫລົ້າ ອາຫານ ເຄື່ອງດື່ມ ການມະນັດສະການ ນີ້ຄືວິທີການເທດສະໜາ ສັ່ງສອນ ແລະໃຫ້ຄຳປຶກສາຂອງຜູ້ເຕືອນສະຕິ ເຂົາຈະຍົກບັນຫາຂຶ້ນມາເປັນຫົວຂໍ້ສົນທະນາ ຈາກນັ້ນກໍກ່າວວ່າ "ນີ້ຄືຄຳຕອບຈາກພະເຈົ້າ 1,2,3 "

ຍ) ຜູ້ເຕືອນສະຕິເປັນຜູ້ທີ່ມີ**<u>ຄວາມອຸດສາພະຍາຍາມ</u>**ຢ່າງຍິ່ງ ຖ້າຍັງມີຄົນຟັງເຂົາຢູ່ ແຕ່ເມື່ອຜູ້ຟັງເລີ່ມໝົດຄວາມສົນໃຈໃນຄຳສອນຂອງເຂົາ ເຂົາກໍຈະເລີກສົນໃຈຜູ້ຟັງ ແລະຫັນໄປຫາຄົນອື່ນໆແທນ

3. ອັນຕະລາຍທີ່ອາດຈະເກີດຂຶ້ນກັບຜູ້ເຕືອນສະຕິ

"ຈົ່ງຊົມຊື່ນຍິນດີໃນຄວາມຫວັງ ຈົ່ງອົດທົນຕໍ່ຄວາມຍາກລຳບາກ ຈົ່ງຂະມັກຂະເໝັ້ນອະທິຖານ" (ໂຣມ 12:12)

ນີ້ຄືສິ່ງທີ່ພະເຈົ້າຊົງສຳແດງແກ່ໂປໂລໃນຂະນະທີ່ທ່ານກຳລັງພະຍາຍາມແກ້ບັນຫາທີ່ອາລາເບຍ ນີ້ເປັນເຫດທີ່ທ່ານໄດ້ເຕືອນສະຕິຜູ້ເຕືອນສະຕິທັງຫລາຍໃນພະທຳໂຣມ 12

ປະເດັນສຳຄັນ: ມີແນວໂນ້ມທີ່ຜູ້ເຕືອນສະຕິຈະປ່ຽນໄປເຕືອນສະຕິຄົນອື່ນໆ ຖ້າຄົນທີ່ເຂົາກຳລັງແນະນຳຢູ່ນັ້ນບໍ່ຄ່ອຍໃຫ້ຄວາມສົນໃຈ ແຕ່ໂປໂລກ່າວວ່າ "ຢ່າໝົດຄວາມຫວັງ ຈົ່ງອົດທົນເຖິງແມ່ນວ່າທ່ານຈະຫລົ້ມເຫລວ ແລະວາງໃຈໃນພະເຈົ້າໂດຍການ

GCI

ອະທິຖານຢ່າງຕໍ່ເນື່ອງສະໝ່ຳສະເໝີ ຢ່າວາງໃຈໃນສູດສຳເລັດ ໂຄງການ ຫລືຂໍ້ແນະນຳຂອງຕົນເອງ“

ຈ. ຂອງປະທານໃນການໃຫ້

“ແລະເຮົາທຸກຄົນມີຂອງປະທານທີ່ຕ່າງກັນ ຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ...ຖ້າເປັນການບໍລິຈາກ ກໍຈົ່ງໃຫ້ດ້ວຍໃຈກວ້າງຂວາງ..ຈົ່ງເຫັນອົກເຫັນໃຈຊ່ວຍທຳມີກກະຊົນເມື່ອເຂົາຂັດສົນ ຈົ່ງມີນ້ຳໃຈອັດຕະຍະໃສໄມຕີ” (ໂຣມ 12:6,8 ແລະ 13)

ຄຣິສຕຽນທຸກຄົນໄດ້ຮັບການຊົງເອີ້ນໃຫ້ເປັນຜູ້ອາລັກຂາທີ່ຊື່ສັດ ຄືການຍອມໃຫ້ພະເຈົ້າເປັນທີ່ນຶ່ງໃນການໃຊ້ເວລາຄວາມສາມາດ ແລະເງິນທອງທີ່ເຮົາມີຢູ່ນັ້ນ ນີ້ເປັນເຫດທີ່ພະຄຳພີເນັ້ນຄວາມສຳຄັນຂອງການຖວາຍສິບລົດ ແລະຮຽກຮ້ອງໃຫ້ເຮົາຖວາຍໄດ້ທັງໝົດ ບໍ່ແມ່ນຖວາຍຈາກສ່ວນທີ່ເຫລືອໃຊ້ ແຕ່ພະຄຳພີກໍໄດ້ກ່າວໄວ້ຊັດເຈນວ່າມີຜູ້ເຊື່ອບາງຄົນທີ່ໄດ້ຮັບການເລືອກສັນຈາກພະເຈົ້າເປັນພິເສດໃຫ້ເຮັດໜ້າທີ່ເປັນຜູ້ໃຫ້ ຫລືຜູ້ບໍລິຈາກ ເຂົາຈຶ່ງໄດ້ຮັບຂອງປະທານໃນການໃຫ້ ຫລືການຖວາຍເປັນຫລັກໃນການຮັບໃຊ້ພະເຈົ້າ

1. ຕົວຢ່າງຜູ້ມີຂອງປະທານໃນການໃຫ້ ຈາກພະຄຳພີໃໝ່ - ບາລານາບັດ

ເຮົາໄດ້ພົບເລື່ອງຂອງບາລານາບັດຄັ້ງທຳອິດໃນກິດຈະການບົດທີ່ 4 ຊື່ຂອງທ່ານຄືໂຢເຊບ ແລະພວກອັກຄະສາວົກເອີ້ນທ່ານວ່າ “ບາລານາບັດ ພາສາເຮັບລູແປວ່າ ລູກແຫ່ງການໜູນນ້ຳໃຈ” ຊຶ່ງເປັນຊື່ທີ່ເໝາະສົມຫລາຍສຳລັບຜູ້ທີ່ມີຂອງປະທານໃນການໃຫ້

2. ຄຸນລັກສະນະຂອງຜູ້ທີ່ມີຂອງປະທານໃນການໃຫ້

ກ) ຜູ້ໃຫ້ມີຄວາມສາມາດໃນການຫາເງິນ ແລະສະສົມສັບສົນ ພະເຈົ້າຈະບໍ່ເອີ້ນໃຫ້ເຮົາເຮັດສິ່ງໃດໂດຍທີ່ບໍ່ໄດ້ປະທານລິດແດດແກ່ເຮົາທີ່ຈະເຮັດການນັ້ນໆເສຽກ່ອນ ບາລານາບັດ ເປັນເຈົ້າຂອງທີ່ດິນ ແລະມີສັບສົນຫລາຍ(ເຊັ່ນດຽວກັນກັບອານາເນັຽ ຊຶ່ງມີຂອງປະທານໃນການໃຫ້ແຕ່ນຳໄປໃຊ້ຜິດ)

ຂ) ຜູ້ໃຫ້ ສະໜັບສະໜູນ ແລະຊ່ວຍເຫລືອພັນທະກິດຂອງຄົນອື່ນໂດຍຖືເປັນການຊົງເອີ້ນ ແລະພັນທະກິດຂອງຕົນເອງ ຊຶ່ງໝາຍເຖິງເຂົາຕ້ອງໄວ້ວາງໃຈໃນເພື່ອນຮ່ວມງານ ແລະໃນພັນທະກິດຂອງພວກເຂົາ

ຄ) ຜູ້ໃຫ້ ປະສົງທີ່ຈະມີສ່ວນຢ່າງສະເພາະເຈາະຈົງໃນພັນທະກິດທີ່ເຂົາສະໜັບສະໜູນຢູ່ນັ້ນ ບາງຄັ້ງຈຶ່ງເຮັດໃຫ້ບາງຄົນຄິດວ່າເຂົາພະຍາຍາມທີ່ຈະຄວບຄຸມພັນທະກິດນັ້ນໆດ້ວຍເງິນຂອງເຂົາ ຊຶ່ງໃນຄວາມເປັນຈິງແລ້ວ ເຂົາພະຍາຍາມທີ່ຈະເຮັດໃຫ້ເງິນທອງທີ່ເຂົາລົງທຶນໄປນັ້ນບໍ່ເສັຽລ້າໆ ຊຶ່ງເປັນຂໍ້ດີອັນນຶ່ງໃນການເປັນນັກທຸລະກິດຂອງເຂົາ

GCI

ງ) ຜູ້ໃຫ້ ຈະມີຄວາມສາມາດເປັນພິເສດໃນການວິນິໄສເບິ່ງພັນທະກິດຕ່າງໆ ທີ່ຜູ້ຄົນພະຍາຍາມສະເໜີຂໍການສະໜັບສະໜູນ ຫລາຍຄັ້ງເບິ່ງຄືເຂົາຈະສາມາດບອກໄດ້ລ່ວງໜ້າເລີຍວ່າ ພັນທະກິດໃດຈະປະສົບຄວາມສຳເລັດຫລືຫລົ້ມເຫລວ ໃນຂະນະທີ່ຄົນອື່ນໆອາດຈະຍັງເບິ່ງບໍ່ອອກ ບາລານາບັດສາມາດສັງເກດໄດ້ວ່າພັນທະກິດຂອງໂປໂລ ແລະມາຣະໂກຈະເປັນໄປຢ່າງໃດ

ຈ) ຜູ້ໃຫ້ປະຕິເສດຢ່າງສິ້ນເຊີງບໍ່ຍອມໃຫ້ຄົນກົດດັນເຂົາໃນການຖວາຍ ອັນແທ້ຈິງວິທີທີ່ໄດ້ຜົນແນ່ນອນໃນການເຮັດໃຫ້ເຂົາປະຕິເສດທີ່ຈະຖວາຍກໍຄື ການສ້າງຄວາມກົດດັນໃຫ້ເຂົານັ້ນເອງ ການທີ່ເຂົາປະຕິເສດຄຳຂໍ ຫລືຄວາມກົດດັນເຊັ່ນນີ້ ເຮັດໃຫ້ບາງຄົນຄິດວ່າເຂົາເຫັນແກ່ຕົວ ຊຶ່ງທີ່ແທ້ແລ້ວເຂົາເປັນຄົນທີ່ໃຈກ້ວາງຂວາງທີ່ສຸດໃນບັນດາຄຣິສຕຽນທັງຫລາຍ

ສ) ຜູ້ໃຫ້ ບາງຄັ້ງຈະໃຊ້ການຖວາຍຂອງເຂົາ ເປັນສິ່ງກະຕຸ້ນໃຫ້ຄົນອື່ນໆຖວາຍນຳອີກ ຖ້າເຂົາເຫັນວ່າການເຮັດແບບນັ້ນສາມາດຊ່ວຍໃຫ້ພັນທະກິດກ້າວໜ້າໄປໄດ້ ບາລານາບັດເປັນຜູ້ນຳໃນການຖວາຍທີ່ດິນຂອງຕົນໃຫ້ແກ່ຄຣິສຕະຈັກໃນຍຸກນັ້ນ

ຊ) ແຕ່ສ່ວນໃຫຍ່ ຜູ້ໃຫ້ມັກບໍ່ມັກອອກໜ້າອອກຕາ ເຂົາມັກຈະຖວາຍແບບລັບໆ ຫລາຍກວ່າ ເຂົາຈຳເປັນຕ້ອງອາໄສກຽດຫລືການຍອມຮັບຢ່າງທີ່ຜູ້ເຕືອນສະຕິຕ້ອງການເພື່ອເປັນແຮງໃຈໃນການເຮັດວຽກຕໍ່ໄປ ເພາະເຂົາໄດ້ຮັບກຽດນັ້ນຢູ່ແລ້ວຈາກຄວາມສຳເລັດໃນການຫາເງິນ ແລະການເຮັດທຸລະກິດ ເຖິງແມ່ນໃນກິດຈະການບົດທີ່ 14 ບາຣະນາບາຈະຖືກເອີ້ນວ່າ ເປັນອັກຄະສາວົກຮ່ວມກັບໂປໂລ ແຕ່ທ່ານກໍຍັງພໍໃຈທີ່ຈະເປັນຮອງ ຍອມໃຫ້ໂປໂລເປັນຜູ້ທີ່ໄດ້ຮັບກຽດ

ຍ) ຜູ້ໃຫ້ມັກຈະເສັຽໃຈ ຖ້າເຫັນຄົນອື່ນໃຊ້ເງິນທອງໄປຢ່າງເປົ່າປະໂຫຍດ ເພາະເຂົາເຫັນວ່າເງິນທອງສ່ວນນັ້ນໜ້າຈະເປັນປະໂຫຍດຕໍ່ພັນທະກິດອື່ນໆໄດ້ອີກຫລວງຫລາຍ

ດ) ຜູ້ໃຫ້ຈະໄດ້ຮັບຄຳຂໍຄວາມຊ່ວຍເຫລືອຫລວງຫລາຍ ຈົນເປັນເລື່ອງງ່າຍທີ່ຈະປະຕິເສດ ຖ້າປັດສະຈາກນ້ຳໃຈ ແລະພະວິນຍານຂອງພະຄຣິດແລ້ວ ເຮົາອາດຈະຢູ່ໃນການທົດລອງໃຈໃນເລື່ອງນີ້ ກາຍເປັນຄົນທີ່ໃຈແຂງກະດ້າງຕໍ່ຄວາມທຸກຍາກ ແລະບັນຫາຂອງຄົນອື່ນໄປ.

3. ອັນຕະລາຍທີ່ອາດຈະເກີດຂຶ້ນກັບຜູ້ທີ່ມີຂອງປະທານໃນການໃຫ້

ເຂົາອາດຈະກາຍເປັນຄົນທີ່ເນັ້ນຄວາມສຳຄັນຂອງກິດຈະກຳ ຫລາຍກວ່າຄວາມສຳຄັນຂອງຄົນຄືເນັ້ນກິດຈະກຳຕ່າງໆ ຫລາຍກວ່າຄວາມສຳພັນຂອງຜູ້ຄົນທີ່ກ່ຽວຂ້ອງ

4. ຄຳຕອບຂອງພະເຈົ້າສຳລັບບັນຫາເລື່ອງນີ້

" ຈົ່ງເຫັນອົກເຫັນໃຈຊ່ວຍທຳນຸກະຊົນເມື່ອເຂົາຂັດສົນ ຈົ່ງມີນ້ຳໃຈອັດຕະຍະໃສໄມຕຣີ" (ໂຣມ 12:13)

GCI

ກ) ໃນແງ່ນີ້ງ ຖ້າປັດສະຈາກບາລານາບັດ ພັນທະກິດຕ່າງໆ ເກືອບທັງໝົດໃນພະຄຳພີໃຫມ່ຄົງຈະເກີດຂຶ້ນບໍ່ໄດ້ແນ່ນອນ:

1) ບາລານາບັດ ສະໜັບສະໜູນການຈັດການອົງກອນຂອງຄຣິສຕະຈັກທຳອິດ ລວມທັງພັນທະກິດຕ່າງໆຂອງເປໂຕ

2) ທ່ານເປັນຜູ້ຮັບຜິດຊອບໃນການລິເລີ້ມພັນທະກິດຂອງມັກຄະນາຍົກຊຸດທຳອິດໃນການບົວລະບັດ

3) ແລະຮັບຜິດຊອບການກໍ່ຕັ້ງຄຣິສຕະຈັກແຫ່ງທຳອິດນອກເຂດປາແລັດສະໄຕ ຄືຢູ່ເມືອງອັນຕີໂອເຊັຽ

4) ເຮັດໃຫ້ໂປໂລເປັນທີ່ຍອມຮັບຂອງພີ່ນ້ອງຄຣິສຕຽນ

5) ຮັບຜິດຊອບໃນການເດີນທາງໄປປະກາດຄັ້ງທຳອິດຂອງໂປໂລ ຖ້າປັດສະຈາກບາລານາບັດ ກໍອາດຈະບໍ່ມີໂປໂລ ແລະໜັງສືເຫລັ້ມຕ່າງໆໃນພະຄຳພີໃຫມ່ທີ່ໂປໂລເປັນຜູ້ຂຽນກໍໄດ້

6) ບາລານາບັດ ເປັນຜູ້ເຮັດໃຫ້ ໂປຣັນ ມາຣະໂກ ຍັງຄົງຢູ່ໃນພັນທະກິດໄດ້ຕໍ່ໄປ ຊຶ່ງເປັນຜົນເຮັດໃຫ້ພະກິດຕິຄຸນເຫລັ້ມທຳອິດໄດ້ຖືກຂຽນຂຶ້ນ ຄືພະທຳມາຣະໂກ ຊຶ່ງເປັນພື້ນຖານຂອງພະທຳມັດທາຍ ແລະລູກາ

ປະເດັນສຳຄັນ: ຖ້າປັດສະຈາກຂອງປະທານໃນການຖວາຍແລ້ວ ຄົງເປັນການຍາກຫລາຍທີ່ພັນທະກິດອື່ນໃດຈະດຳເນີນຕໍ່ໄປໄດ້ ເພາະຊັບພະຍາກອນຍ່ອມມີຄວາມສຳຄັນຕໍ່ພັນທະກິດເກືອບທຸກປະເພດ

## ສ. ຂອງປະທານໃນການບໍລິຫານຄຣິສຕະຈັກ

"ແລະເຮົາທຸກຄົນມີຂອງປະທານທີ່ຕ່າງກັນ ຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ..ຜູ້ທີ່ຄອບຄອງ ກໍຈົ່ງຄອບຄອງດ້ວຍເອົາໃຈໃສ່ ຈົ່ງອວຍພອນແກ່ຄົນຄົນທີ່ຂົ່ມເຫັງທ່ານ ຈົ່ງໃຫ້ພອນ ຢ່າແຊ່ງດ່າເລີຍ" (ໂຣມ 12:6,8 ແລະ14)

ຂອງປະທານໃນການຄອບຄອງ ຫລືການບໍລິການງານແປໄດ້ຫລາຍຢ່າງ ເຊັ່ນພະຄຳພີສະບັບ RSV ແປວ່າ "ຜູ້ໃຫ້ການສະໜັບສະໜູນ" ສະບັບຄິງເຈມ ແປວ່າ "ຜູ້ຄອບຄອງ" ສະບັບNEB ແປວ່າ "ຂອງປະທານໃນການບໍລິຫານ" ສະບັບອື່ນໆແປວ່າ "ການຈັດການ" "ຜູ້ທີ່ຢູ່ໃນອຳນາດປົກຄອງ" "ຜູ້ທີ່ເປັນປະທານ""ຜູ້ນຳ" ຂ້າພະເຈົ້າຄິດວ່າ "ຜູ້ບໍລິຫານ" ໜ້າຈະເໝາະສົມທີ່ສຸດສຳລັບຄຸນລັກສະນະໂດຍລວມຂອງຂອງປະທານຊະນິດນີ້

1. ຕົວຢ່າງຂອງຜູ້ບໍລິຫານ ຈາກພະຄຳພີໃຫມ່

GCI

ໄດ້ແກ່ ຢາໂກໂບ ນ້ອງຂອງພະເຢຊູ ກັບໂປ່ຣັນ ມາຣະໂກ

ຢາໂກໂບ ນ້ອງຂອງພະເຢຊູ ຄືຜູ້ນຳຊຶ່ງເປັນທີ່ຍອມຮັບຂອງຄຣິສຕະຈັກໃນຍຸກທຳອິດ ສ່ວນໂປ່ຣັນ ມາຣະໂກ ຊຶ່ງເປັນຜູ້ຂຽນພະທຳມາຣະໂກ ເປັນຜູ້ນຳຊຶ່ງເປັນທີ່ຍອມຮັບຂອງຄຣິສຕະຈັກໃຫຍ່ໃນກຸງໂຣມຫລັງຍຸກການຂົ່ມເຫງໂດຍຈັກກະພັດດີເນໂຣ.

2. ຄຸນລັກສະນະຂອງຜູ້ບໍລິຫານ

ກ) ລັກສະນະເດັ່ນຊັດທີ່ສຸດນັກບໍລິຫານຄື ເຂົາເປັນນັກປະຕິບັດ ເປັນຄົນເຮັດໃຫ້ງານຕ່າງໆສຳເລັດ ຄວາມສົນໃຈຫລັກຂອງນັກບໍລິຫານຄືການເຮັດໃຫ້ວຽກງານຄືບໜ້າໄປສູ່ເປົ້າໝາຍສູງສຸດ ເຮົາຈຶ່ງພົບວ່າພະທຳມາຣະໂກເປັນໜັງສືທີ່ເຕັມໄປດ້ວຍການເຮັດວຽກຕ່າງໆ ຄຳທີ່ປາກົດເລື້ອຍໆກໍຄື "ໃນທັນໃດນັ້ນ" ໃຈຄວາມສຳຄັນຂອງພະທຳຢາໂກໂບ ກໍເປັນເລື່ອງຂອງການປະຕິບັດເຊັ່ນກັນ "ທ່ານຈົ່ງເປັນຜູ້ປະຕິບັດຕາມພະວັດຈະນະ ບໍ່ແມ່ນເປັນແຕ່ພຽງຜູ້ຟັງເທົ່ານັ້ນ" "ນັກປະຕິບັດ"

ເມື່ອເຂົາກ້າວໄປຂ້າງໜ້າ ຍ່ອມສ່ຽງບໍ່ໄດ້ທີ່ຈະຕ້ອງກະທົບກະທັ້ງຄົນອື່ນ ດັ່ງນັ້ນນັກບໍລິຫານຈຶ່ງສ້າງສັດຕູໄວ້ຫລາຍກວ່າພັນທະກິດອື່ນໃດ ຍົກເວັ້ນຜູ້ເຜີຍພະວັດຈະນະ ດັ່ງນັ້ນນັກບໍລິຫານຈຶ່ງມີສັດຕູ ແລະພວກທີ່ບໍ່ພໍໃຈເຂົາຢູ່ຫລາຍ

ຂ) ບໍ່ພຽງແຕ່ຄຳວ່າ "ໃນທັນທີທັນໃດ" ເທົ່ານັ້ນທີ່ສຳຄັນສຳລັບນັກບໍລິຫານ ຄຳວ່າ "ສິດທິອຳນາດ" ກໍສຳຄັນເຊັ່ນກັນ ນັກບໍລິຫານເປັນຄົນທີ່ໃຊ້ສິດທິອຳນາດ ພະທຳຢາໂກໂບ ຖືວ່າເປັນໜັງສືທີ່ສະແດງສິດທິອຳນາດຫລາຍໃນພະຄຳພີໃໝ່ ຢາໂກໂບໄດ້ວາງຫລັກປະຕິບັດໃນເລື່ອງຕ່າງໆ ເພື່ອສອນໃຫ້ຄົນຮູ້ວ່າຄວນປະພຶດປະຕິບັດຢ່າງໃດ ແລະບໍ່ມີພະກິດຕິຄຸນເຫລັ້ມໃດທີ່ເນັ້ນເຖິງສິດທິອຳນາດຂອງພະເຢຊູເທົ່າກັບພະທຳມາຣະໂກ ນັກບໍລິຫານຕ້ອງການໃຫ້ທຸກຄົນຢູ່ພາຍໃຕ້ສິດທິອຳນາດຂອງເຂົາ ເພື່ອເຂົາຈະສາມາດກວດສອບແຕ່ລະຄົນໄດ້ສະເໝີ

ຄ) ນັກບໍລິຫານຈະກ້າວອອກໄປຂ້າງໜ້າເພື່ອຮັບຜິດຊອບໜ້າທີ່ ຖ້າຫາກບໍ່ມີໃຜເປັນຜູ້ນຳຕາມໂຄງສ້າງຂອງອົງກອນດັ່ງທີ່ຢາໂກໂບໄດ້ເຮັດ ໃນການເປັນຜູ້ນຳຂອງຄຣິສຕະຈັກຍຸກທຳອິດ ແລະມາຣະໂກ ໄດ້ລຸກຂຶ້ນເປັນຜູ້ນຳຄຣິສຕະຈັກໃນກຸງໂຣມພາຍຫລັງໄລຍະແຫ່ງການຂົ່ມເຫັງຂອງຈັກກະພັດດີເນໂຣ.

ງ) ນັກບໍລິຫານ ມີຄວາມສາມາດ ແລະຄວາມເຕັມໃຈທີ່ຈະມອບໝາຍໜ້າທີ່ຮັບຜິດຊອບ ແລະຖ່າຍໂອນອຳນາດໃຫ້ແກ່ຄົນອື່ນເພາະຄຸນລັກສະນະໃນຂໍ້ນີ້ເອງ ຢາໂກໂບຈຶ່ງມອບໝາຍງານມິດຊັນນາລີໃຫ້ແກ່ເປໂຕ ແລະໂປໂລ ເພາະການມອບໝາຍໜ້າທີ່ນີ້ເອງ ຈຶ່ງເຮັດໃຫ້ຄຣິສຕະຈັກໄດ້ແຜ່ຂະຫຍາຍອອກໄປທົ່ວໂລກໃນຍຸກນັ້ນ.

ຈ) ນັກບໍລິຫານ ຈະມີຄວາມສາມາດໃນການເບິ່ງເຫັນພາບລວມ ແລະເບິ່ງເຫັນເປົ້າໝາຍໄລຍະຍາວໄດ້ຊັດເຈນ ເຊັ່ນ ເລື່ອງການຕັດສິນໃຈຂອງຢາໂກໂບກໍລະນີບັນຫາການເຂົ້າສຸນັດຂອງຄຣິສຕະ

GCI

ຈັກໃນຍຸກທຳອິດ ແລະມາຣະໂກ ຜູ້ຊຶ່ງຄອຍຢ້ຳແກ່ຄຣິສຕຽນຊາວໂຣມຢູ່ສະເໝີເຖິງລິດເດດ ແລະສິດທິອຳນາດຂອງອົງພະເຢຊູຄຣິດ

ສ) ນັກບໍລິຫານ ຈະມີຄວາມສາມາດເປັນພິເສດໃນການຈັດການງານໃນຄວາມຮັບຜິດຊອບ (ຊື່ນຶ່ງຂອງນັກບໍລິຫານກໍຄື"ຜູ້ຈັດການ") ນີ້ເປັນເຫດທີ່ຢາໂກໂບໄດ້ຮັບເລືອກໃຫ້ຈັດການງານຂອງຄຣິສຕະຈັກຍຸກທຳອິດ ແລະມາຣະໂກໄດ້ຮັບເລືອກໃຫ້ຈັດການດູແລຄຣິສຕຽນໃນກຸງໂຣມຊຶ່ງກຳລັງສັບສົນ ແລະຖືກຂົ່ມເຫງ ຄວາມສາມາດພິເສດໃນການຈັດລະບຽບນີ້ ເຮັດໃຫ້ເຮົາເຂົ້າໃຈເພື່ອທີ່ຈະຢຸດຄວາມສັບສົນວຸ້ນວາຍຂອງພວກເຂົາ ແລະເຮັດໃຫ້ຄຣິສຕະຈັກມີລະບົບລະບຽບ ແລະຕັ້ງໝັ້ນຢູ່ໄດ້.

ຊ) ນັກບໍລິຫານ ຕ້ອງປະເຊີນກັບຄຳວິພາກວິຈານ ແລະຄວາມຮ້ອນແຮງ ຫລາຍກວ່າຂອງປະທານອື່ນໃດລວມກັນເສັຽອີກ ເປັນໄປບໍ່ໄດ້ທີ່ເຮົາຈະຕັດສິນໃຈໃນເລື່ອງສຳຄັນຄືການເຂົ້າພິທີຕັດ ຄືຢາໂກໂບໄດ້ເຮັດໃນປະຊຸມໃຫຍ່ທີ່ກຸງເຢລູຊາເລັມ ໂດຍທີ່ບໍ່ກໍ່ຜົນກະທົບຫລືເຮັດໃຫ້ໃຜສະດຸດ ເຊັ່ນດຽວກັນກັບການທີ່ມາຣະໂກຕັດສິນໃຈຖິ້ມໂປໂລໃນລະຫວ່າງການເດີນທາງໄປປະກາດຄັ້ງທຳອິດ (ແມ່ນແຕ່ໃນຄຣິສຕະຈັກທຸກວັນນີ້ກໍເຊັ່ນກັນ ການຕັດສິນໃຈໃນລະດັບບໍລິຫານຍັງຄົງກໍ່ໃຫ້ເກີດການຂັດແຍ້ງກັນໄດ້ຫລາຍທີ່ສຸດ ເຊັ່ນ ເລື່ອງເງິນທອງ ການຈ້າງຄົນງານ ເງິນເດືອນ ສຳນັກງານ ແລະວັນພັກ).

ຍ) ນັກບໍລິຫານ ຕ້ອງການເຮັດໃຫ້ງານໃນຄວາມຮັບຜິດຊອບສຳເລັດໄວທີ່ສຸດ ເພື່ອຈະໄດ້ເລີ້ມງານອື່ນຕໍ່ໄປໄດ້ ນີ້ເປັນເຫດຜົນທີ່ຊັດເຈນວ່າ ເປັນຫຍັງຂ່າວປະເສີດມາຣະໂກ ຈຶ່ງເປັນໜັງສືທີ່ສັ້ນທີ່ສຸດ ແລະບໍ່ຄ່ອຍມີລາຍລະອຽດ ຄືທີ່ປາກົດໃນຂ່າວປະເສີດເຫລັ້ມອື່ນເທົ່າໃດ ຢາໂກໂບກໍຂຽນຈົດໝາຍຝາກໃນລັກສະນະດຽວກັນ.

ດ) ນັກບໍລິຫານ ຈະຮູ້ວ່າຊັບພະຍາກອນບຸກຄົນທີ່ເຂົາສາມາດໃຊ້ງານໄດ້ນັ້ນມີຢູ່ເທົ່າໃດ ນັ້ນ ຄື ເຂົາສາມາດເບິ່ງເຫັນຄວາມສາມາດໃນແຕ່ລະຄົນໄດ້ວ່າ ໃຜແດ່ທີ່ເໝາະສົມໃນການເຮັດວຽກແຕ່ລະຢ່າງ ເຊັ່ນຢາໂກໂບ ເຫັນຄຸນຄ່າທີ່ເຊື່ອງຢູ່ພາຍໃນເປໂຕ ໂປໂລ ແລະບາລານາບັດ ໃນສ່ວນທີ່ເຂົາສາມາດຈະເປັນປະໂຫຍດຕໍ່ແຜ່ນດິນຂອງພະເຈົ້າ ພະເຈົ້າຍ່ອມບໍ່ເອີ້ນໃຫ້ເຮົາເຮັດວຽກໃດໆ ໂດຍທີ່ບໍ່ເສີມໃຫ້ເຮົາມີຄວາມສາມາດພໍທີ່ຈະເຮັດວຽກງານນັ້ນໄດ້ ດັ່ງນັ້ນພະເຈົ້າຈຶ່ງຊົງເສີມນັກບໍລິຫານໃຫ້ມີຄວາມສາມາດຈະສັງເກດເຫັນສັກຄະຍະພາບຂອງຄົນງານແຕ່ລະຄົນ.

ຕ) ນັກບໍລິຫານ ມັກຈະເຄັ່ງຄັດໃນການດຳເນີນຕາມກົດເກນທີ່ຕົກລົງກັນໄວ້ແລ້ວນັ້ນ ລອງອ່ານເບິ່ງຈົດໝາຍຝາກຂອງຢາໂກໂບແລ້ວຈະເຫັນວ່າ ທ່ານໄດ້ວາງລະບຽບ ຂໍ້ກຳໜົດຕ່າງໆໄວ້ຫລາຍຂໍ້ ແລະຮຽກຮ້ອງໃຫ້ຜູ້ອ່ານເຮັດຕາມລະບຽບເຫລົ່ານັ້ນ ໃນຄາລາເຕັຽ 2 ໂປໂລໄດ້ວິຈານເຖິງຄວາມເຄັ່ງບັນຍັດຂອງຢາໂກໂບ ແລະກ່າວວ່າ ນັ້ນເປັນສາເຫດທີ່ຊັກນຳໃຫ້ເປໂຕຫລົງໄປ.

ຖ) ສຸດທ້າຍ ຄວາມກົດດັນ ຖືເປັນເໝືອນ "ອາຫານ ແລະເຄື່ອງດື່ມ" ສຳລັບນັກບໍລິຫານ ເຂົາສາມາດເຮັດວຽກໄດ້ດີພາຍໃຕ້ສະພາວະຄວາມກົດດັນ ຢາໂກໂບໄດ້ກ້າວສູ່ຄວາມເປັນຜູ້ນຳຄຣິສຕະຈັກຍຸກທຳອິດເຕັມຕົວໃນຂະນະທີ່ພວກຜູ້ນຳຢິວກຳລັງຂົ່ມເຫງຄຣິສຕະຈັກ ແລະຄຣິສ

GCI

ຕຽນກໍມີຄວາມຂັດແຍ້ງ ແລະບໍ່ລົງລອຍກັນໃນເລື່ອງຕ່າງໆ ເຊັ່ນດຽວກັນກັບມາຣະໂກຜູ້ທີ່ໄດ້ຢືນຢັດໃນການເປັນຜູ້ນໍາຄຣິສຕະຈັກແຫ່ງໂຣມພາຍໃຕ້ຄວາມກົດດັນ ແລະການຂົ່ມເຫງຈາກກະສັດເນໂຣ ມາຣະໂກໄດ້ຂຽນຂ່າວປະເສີດມາຣະໂກຂຶ້ນມາພາຍໃຕ້ຄວາມກົດດັນຢ່າງສາຫັດ ຈົນເກືອບຈະແບກບໍ່ໄຫວ.

3. ອັນຕະລາຍທີ່ອາດຈະເກີດຂຶ້ນກັບຜູ້ທີ່ມີຂອງປະທານໃນການບໍລິຫານ ຈັດການ

ຄືເຂົາມີແນວໂນ້ມທີ່ຈະເປັນຄົນຊຶ່ງເນັ້ນການປະຕິບັດ ຫລາຍກວ່າ ເນັ້ນຄົນ ແລະເພາະການທີ່ເຂົາເປັນນັກປະຕິບັດ ຊຶ່ງມີແຮງຜັກດັນສໍາຄັນຢູ່ທີ່ການເຮັດວຽກໃຫ້ສໍາເລັດ ຊຶ່ງການເຮັດເຊັ່ນນີ້ ເຮັດໃຫ້ເຂົາຕ້ອງປະເຊີນໜ້າກັບຄົນອື່ນຢູ່ເກືອບຕະຫລອດເວລາ ແລະອາດຈະຕົກຢູ່ໃນການທົດລອງໃນເລື່ອງນີ້ໄດ້ງ່າຍ ຄືການທີ່ເຂົາມັກຈະມີປະຕິກິລິຍາຕອບໂຕ້ຄົນທີ່ຄັດຄ້ານເຂົາແທນທີ່ຈະນໍາເອົາອັນໃດເປັນຕາມການຊົງນໍາ ແລະນໍ້າພະໄທຂອງພະເຈົ້າ.

4. ຄໍາຕອບຂອງພະເຈົ້າສໍາລັບບັນຫາເລື່ອງນີ້

"ຈົ່ງອວຍພອນແກ່ຄົນທີ່ຂົ່ຽວເຂັນທ່ານ ຈົ່ງໃຫ້ພອນ ຢ່າແຊ່ງດ່າເລີຍ" (ໂຣມ13:14)ນັ້ນຄື ຢ່າຍອມໃຫ້ຄົນອື່ນຄວບຄຸມຊີວິດທ່ານ ແຕ່ຈົ່ງຢູ່ພາຍໃຕ້ການຄວບຄຸມຢ່າງສິ້ນເຊີງຂອງພະເຈົ້າປະເດັນສໍາຄັນບໍ່ມີໃຜເຮັດໃຫ້ສັດຕະກາຍເປັນມິດໄດ້ (ຫລືນໍາຄົນມາເຖິງພະຄຣິດ) ຖ້າເຮົາຍັງປະຕິບັດຕໍ່ເຂົາຄືເປັນສັດຕູ ຫລືຄົນຕໍ່ຕ້ານສາດສະໜາ ວິທີດຽວທີ່ຈະເຮັດໃຫ້ເຂົາກາຍມາເປັນມິດໄດ້ກໍຄື ໃຫ້ປະຕິບັດຕໍ່ເຂົາຄືກັບເປັນມິດ

ຊ. ຂອງປະທານໃນການສະແດງຄວາມເມດຕາ

"ແລະເຮົາທຸກຄົນມີຂອງປະທານທີ່ຕ່າງກັນ ຕາມພະຄຸນທີ່ໄດ້ປະທານໃຫ້ແກ່ເຮົາ.. ຜູ້ທີ່ສະແດງຄວາມເມດຕາ ກໍຈົ່ງສະແດງດ້ວຍໃຈຍິນດີ..ຈົ່ງຊົ່ນຊົມຍິນດີກັບຜູ້ທີ່ມີຄວາມຊື່ນຊົມຍິນດີ ຈົ່ງຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້" (ໂຣມ 12:6, 8b ແລະ 15)

ຈົ່ງຈື່ໄວ້ວ່າ ຂອງປະທານທີ່ຫລາຍທີ່ສຸດໃນທ່າມກາງຄຣິສຕຽນນັ້ນ ຄືຂອງປະທານໃນການບົວລະບັດ ແລະການສະແດງຄວາມເມດຕາ ເພາະຄົນສ່ວນໃຫຍ່ຈໍາເປັນຕ້ອງອາໃສຂອງປະທານເຫລົ່ານີ້ຫລາຍ

ປະທານການວ່າ ນຶ່ງໃນສາມຂອງຜູ້ອ່ານເປັນຜູ້ທີ່ມີຂອງປະທານໃນການບົວລະບັດ ສ່ວນອີກນຶ່ງໃນສາມ ມີຂອງປະທານໃນການສະແດງຄວາມເມດຕາ.

1. ຕົວຢ່າງຜູ້ສະແດງຄວາມເມດຕາ ຈາກພະຄໍາພີໃໝ່ ລູກາ

2. ຄຸນລັກສະນະຂອງຜູ້ທີ່ມີຂອງປະທານໃນການສະແດງຄວາມເມດຕາ

GCI

ກ) ລັກສະນະທີ່ໂດດເດັ່ນທີ່ສຸດ ເຂົາເປັນຄົນທີ່ໄວຕໍ່ຄວາມຮູ້ສຶກຂອງຄົນອື່ນ ແລະຂອງຕົນເອງ ເຂົາຄວນມີຄວາມຮູ້ສຶກເຫັນອົກເຫັນໃຈຄົນອື່ນ "ເອົາໃຈເຂົາມາໃສ່ໃຈເຮົາ" ແຕ່ໃນເວລາດຽວກັນກໍເປັນຄົນທີ່ຮູ້ສຶກເຈັບໄດ້ງ່າຍ ຈົນຄົນອື່ນບໍ່ຢາກສະແດງຄວາມກົງໄປກົງມາກັບເຂົາເພາະຢ້ານຈະເຮັດໃຫ້ເຂົາເຈັບຊ້ຳນ້ຳໃຈ

ການໄວຕໍ່ຄວາມຮູ້ສຶກນີ້ ເຮັດໃຫ້ຜູ້ທີ່ມີຂອງປະທານໃນການສະແດງຄວາມເມດຕາສາມາດຊື່ມຊັບຄວາມງາມໄດ້ຢ່າງລຶກຊຶ້ງ ພະທຳລູກາໄດ້ຮັບການຂະນານນາມວ່າເປັນໜັງສືທີ່ງົດງາມທີ່ສຸດໃນໂລກ ມີແຕ່ລູກາເທົ່ານັ້ນທີ່ໄດ້ບັນທຶກບົດເພງອັນງົດງາມໃນການປະສູດຂອງພະເຢຊູໄວ້ເປັນຕອນຊຶ່ງເຮົາເອີ້ນວ່າ "ເພັງສັນລະເສີນຂອງມາລີ" ແລະບົດສັນລະເສີນຂອງເສຄາລີຢາ ຊຶ່ງໃຊ້ເປັນບົດອະທິຖານກັນຢູ່ທົ່ວໄປໃນຄຣິສຕະຈັກທຸກວັນນີ້

ການໄວຕໍ່ຄວາມຮູ້ສຶກຢ່າງຊຶ້ງເຊັ່ນນີ້ ເຮັດໃຫ້ຜູ້ສະແດງຄວາມເມດຕາ ມີລັກສະນະທີ່ແຕກຕ່າງຈາກ ຜູ້ບໍລິລະບັດຢ່າງເດັ່ນຊັດ ຜູ້ບໍລິລະບັດນັ້ນ ພະຍາຍາມຜັກດັນໃຫ້ຄົນອື່ນເຮັດວຽກຈົນອາດເອີ້ນວ່າປັດສະຈາກ"ຄວາມເວດທະນາ" ຊຶ່ງຂໍ້ນີ້ເປັນລັກສະນະທີ່ກົງກັນຂ້າມກັບຜູ້ສະແດງຄວາມເມດຕາຢ່າງສິ້ນເຊີງ.

ຂ) ເຂົາເປັນຜູ້ທີ່ໃຫ້ຄວາມສົນໃຈໃນຕົວບຸກຄົນຫລາຍ ແລະມີຄວາມຮັກຕໍ່ຄົນອື່ນຢູ່ໂດຍທຳມະຊາດທ່ານຄົງຈື່ໄດ້ວ່າ ຜູ້ເພີຍພະວັດຈະນະກໍໃຫ້ຄວາມສົນໃຈຕໍ່ຜູ້ຄົນດ້ວຍເຊັ່ນກັນ ແຕ່ເປັນຄວາມສົນໃຈໃນລະດັບມວນຊົນ ສ່ວນຜູ້ສະແດງຄວາມເມດຕາສົນໃຈຊີວິດຄົນໃນລະດັບຕົວຕໍ່ຕົວ ລູກາໄດ້ລວບລວມຂໍ້ຂຽນກ່ຽວກັບຊີວິດສ່ວນຕົວຂອງຫລາຍໆຄົນໄວ້ຢ່າງໜ້າອັດສະຈັນໃຈຫລາຍກວ່າຜູ້ຂຽນພະຄຳພີຄົນອື່ນໃດທັງໝົດ ຜູ້ຮູ້ທາງພະຄຳພີຄົນນຶ່ງກ່າວໄວ້ວ່າ ລູກາໄດ້ກ່າວເຖິງຊີວິດຄົນກວ່າ 110 ຄົນໃນພະທຳກິດຈະການ ພ້ອມດ້ວຍລາຍລະອຽດສ່ວນຕົວກ່ຽວກັບແຕ່ລະຄົນໄວ້ເກືອບຈະທຸກໜ້າຂອງໜັງສື.

ຄ) ເຂົາຈະຮູ້ສຶກສົນໃຈຄົນທີ່ລະທົມທຸກເປັນພິເສດ ມີແຕ່ລູກາເທົ່ານັ້ນທີ່ບັນທຶກໃຫ້ເຮົາຮູ້ເຖິງຄວາມຫວ່ງໃຍຂອງພະເຢຊູທີ່ມີຕໍ່ຄົນຍາກຈົນ ແລະຜູ້ທີ່ຖືກປະຖິ້ມ ເຊັ່ນໃນຄຳອຸປະມາເລື່ອງ "ເສດຖີກັບລາຊາໂລ" ລູກນ້ອຍຫລົງຫາຍ" "ຊາວສະມາເລັຽໃຈດີ" ເປັນຕົ້ນ.

ງ) ຄົນທີ່ປະກອບດ້ວຍຂອງປະທານໃນການສະແດງຄວາມເມດຕາ ຈະເນັ້ນເຖິງພັນທະກິດການຮັກສາໂລກຫລາຍກວ່າພັນທະກິດດ້ານອື່ນ ໝາຍເຖິງເຂົາຈະເນັ້ນເລື່ອງການອະທິຖານຄຣິສຕຽນຄົນອື່ນໆ ນຳ ມີຕົວຢ່າງຫລວງຫລາຍປາກົດຢູ່ໃນທັງພະທຳລູກາ ແລະກິດຈະການຜູ້ທີ່ມີຂອງປະທານຄວາມເມດຕາ ຮູ້ວ່າພະລັງຂອງຕົນເອງມາຈາກໃສ ນີ້ເປັນເຫດທີ່ລູກາກ່າວເຖິງພະວິນຍານບໍລິສຸດໃນພະທຳລູກາ ແລະກິດຈະການຫລາຍກວ່າພະທຳເຫລົ່ມອື່ນໃນພະຄຳພີໃໝ່ຮ່ວມກັນເສັຽອີກ.

ຈ) ແຕ່ຄວາມສົນອົກສົນໃຈໃນເລື່ອງການຮັກສາໂລກຂອງເຂົາ ບໍ່ໄດ້ເປັນແຕ່ພຽງເລື່ອງກາຍຍະພາບເທົ່ານັ້ນ ເຂົາຈະຮູ້ສຶກຫວ່ງໃຍຫລາຍຕໍ່ສະພາບຈິດໃຈ ແລະຄວາມທຸກພາຍໃນຂອງຄົນອື່ນ

GCI

ຊຶ່ງລັກສະນະຂໍ້ນີ້ນໍາ ທີ່ເຮັດໃຫ້ເຂົາແຕກຕ່າງຈາກຜູ້ບໍລິລະບັດ ຊຶ່ງຈະສົນໃຈໃນເລື່ອງທາງກາຍ ແລະບັນຫາດ້ານວັດຖຸຂອງຄົນອື່ນເປັນຫລັກ ຊາວສະມາເລັຽໃຈດີບໍ່ໄດ້ຢຸດຢູ່ພຽງແຕ່ການສະໝານແຜໃຫ້ແກ່ຊາຍທີ່ຖືກທໍາຮ້າຍຮ່າງກາຍເທົ່ານັ້ນ ເຂົາຍັງຈັດຫາທີ່ພັກ ແລະຕຽມການເລື່ອງອານາຄົດໄວ້ໃຫ້ຊາຍເຄາະຮ້າຍ ເພື່ອເຂົາຈະໄດ້ບໍ່ຕ້ອງກັງວົນໃນເລື່ອງອື່ນໃດອີກ.

ສ) ເຂົາເປັນຄົນທີ່ຍອມທຸກຢ່າງເພື່ອຈະໄດ້ບໍ່ຕ້ອງເຮັດໃຫ້ໃຜເສັຽໃຈ ຈຶ່ງເຮັດໃຫ້ຜູ້ທີ່ມີຂອງປະທານຄວາມເມດຕາເປັນຄົນທີ່ບໍ່ຄ່ອຍກ້າຕັດສິນໃຈ ເຂົາຕ້ອງຮຽນຮູ້ທີ່ຈະແກ້ໄຂໃນເລື່ອງນີ້ກ່ອນທີ່ຈະສາມາດເຮັດໜ້າທີ່ຜູ້ນໍາຄຣິສຕະຈັກໄດ້ຢ່າງເຕັມທີ່.

ຊ) ເພາະເຫດທີ່ເຂົາໃຫ້ຄວາມສົນໃຈຫວ່ງໃຍຄົນຜູ້ຍາກໄຮ້ ແລະຖືກປະຖິ້ມຫລາຍເປັນພິເສດ ເຂົາຈຶ່ງມີຄວາມໂນ້ມອ່ຽງທີ່ຈະລະເລີຍບັນຫາ ແລະຄວາມຕ້ອງການຂອງຄົນລະດັບສູງໃນສັງຄົມຊຶ່ງອາດຈະມີບັນຫາ ແລະຕ້ອງການຄວາມຊ່ວຍເຫລືອຢ່າງດຽວກັນ ຖ້າທ່ານອ່ານພຽງແຕ່ພະທໍາລູກາ ແລະກິດຈະການເທົ່ານັ້ນ ທ່ານອາດຫລົງຄິດໄປວ່າ ການເປັນຄົນຍາກຈົນຄືຄຸນນະທໍາທີ່ຄຣິສຕຽນຕ້ອງຮັກສາໄວ້ ຄວາມຫ່ວງໃຍຄົນທຸກຍາກຢ່າງນີ້ ຍັງອາດຈະສ້າງບັນຫາໃຫ້ຄອບຄົວໄດ້ ເພາະຄົນໃນຄອບຄົວຈະຮູ້ສຶກວ່າທ່ານກໍາລັງປະຖິ້ມພວກເຂົາ ເພື່ອເອົາເວລາໄປທຸ້ມເທໃຫ້ກັບຜູ້ຄົນຍາກຈົນ.

ຍ) ຄົນທີ່ມີຂອງປະທານແຫ່ງຄວາມເມດຕາ ຖືວ່າເປັນຄຣິສຕຽນປະເພດທີ່ຍອມຮັບທຸກຄົນໄດ້ດີທີ່ສຸດລູກາເນັ້ນຢູ່ສະເໝີວ່າພະກິດຕິຄຸນ ເປັນຂອງປະທານສໍາລັບທຸກຄົນໃນໂລກ ມີພຽງລູກາເທົ່ານັ້ນທີ່ເຮັດໃຫ້ຊາຍຊາວສະມາເລັຽຊຶ່ງຊາວຢິວລັງກຽດໄດ້ກາຍເປັນວິລະບູລຸດ ທ່ານບັນທຶກເລື່ອງລາວທີ່ພະເຢຊູຊົງຍົກຍ້ອງນາຍຮ້ອຍຊາວໂຣມວ່າເປັນຜູ້ທີ່ມີຄວາມເຊື່ອຫລາຍຍິ່ງກວ່າໃຜໆໃນອິດສະລາເອນ ສໍາລັບລູກາແລ້ວ ເຜົ່າພັນ ເພດ ແລະເຊື້ອຊາດບໍ່ໄດ້ມີຄວາມແຕກຕ່າງໃດໆເລີຍ.

ດ) ຜູ້ທີ່ມີຂອງປະທານໃນການສະແດງຄວາມເມດຕາ ຈະມີໃຈກະລຸນາ ແລະມີຄວາມອ່ອນໂຍນຕໍ່ຄົນອື່ນສະເໝີ ວາຈາຂອງເຂົາຈະສະແດງເຖິງຄວາມອ່ອນຫວານ ແລະສະແດງຄວາມຮັກໃນການສໍາພັດແຕະຕ້ອງຜູ້ອື່ນ ລູກາກ່າວເຖິງການ "ວາງມື" ໄວ້ຫລາຍຄັ້ງໃນໜັງສືລູກາ ຊຶ່ງເກືອບຈະພໍໆກັບໜັງສືເຫລັ້ມອື່ນໃນພະຄໍາພີໃຫມ່ລວມກັນ ຜູ້ທີ່ມີຂອງປະທານຊະນິດນີ້ ຄວນຕ້ອງລະມັດລະວັງອັນຕະລາຍໄວ້ ເນື່ອງຈາກການວາງຕົວສະໜິດສະໜົມກັບຄົນອື່ນຢ່າງນີ້ອາດນໍາໄປສູ່ການເຂົ້າໃຈຜິດ ຫລືເຮັດໃຫ້ຄູ່ສົມລົດຮູ້ສຶກຫຶງຫວງ.

ຕ) ເພາະເຫດທີ່ຜູ້ມີຂອງປະທານຄວາມເມດຕາ ມັກຈະກະຕືລືລົ້ນທີ່ຈະຊ່ວຍເຫລືອຜູ້ທີ່ຕົກທຸກໄດ້ຍາກຢູ່ສະເໝີ ອາດເຮັດໃຫ້ຫລາຍຄົນເລີ່ມຄິດວ່າເຂົາເປັນຄົນທີ່ມັກຫຍຸ້ງກ່ຽວກັບທຸລະຂອງຄົນອື່ນຫລາຍເກີນໄປ ຊຶ່ງໃນເລື່ອງນີ້ເຂົາຈະຕ້ອງຮູ້ຈັກບັງຄັບຕົວໃຫ້ຢູ່ໃນຄວາມພໍເໝາະພໍດີ.

ຖ) ຄົນຊຶ່ງມີຂອງປະທານຄວາມເມດຕາ ເປັນຜູ້ທີ່ມີຄວາມເສັຽສະຫລະເປັນຢ່າງຍິ່ງ ເຊັ່ນດຽວກັນກັບຜູ້ບໍລິລະບັດ ທີ່ເກືອບຈະເວົ້າປະຕິເສດໃຜບໍ່ເປັນເລີຍ ຜູ້ບໍລິລະບັດຈະເສັຽສະຫລະເພື່ອເຮັດໃຫ້ວຽກງານສໍາເລັດລຸລ່ວງ ສ່ວນຜູ້ສະແດງຄວາມເມດຕາເສັຽສະຫລະເພື່ອຊ່ວຍບັນເທົາຄວາມທຸກ

GCI

ແລະຄວາມເຈັບປວດຂອງຄົນອື່ນ ຕະຫລອດທຸກຍຸກທຸກສະໄໝ ຄຣິສຕະຊົນໄດ້ພະຍາຍາມເລືອກສັນສັນຍາລັກຕ່າງໆມາເຮັດເປັນກະຈົກສີປະດັບໃນໂບດ ເພື່ອເປັນກຽດແກ່ຜົນງານທຳມິກະຊົນ ຫລືບັນທຶກເລື່ອງລາວເດັ່ນໆ ພະທຳແຕ່ລະເຫລັ້ມສຳລັບລູການັ້ນ ສັນຍາລັກປະຈຳຕົວຂອງທ່ານຄືຮູບງົວ ເພາະງົວຄືສັດທີ່ມີຄວາມເສັຽສະຫລະ ລູກາເບິ່ງເຫັນພະເຢຊູໃນຖານະທີ່ເປັນເຄື່ອງບູຊາສູງສຸດເພື່ອລົບລ້າງບາບມວນມະນຸດ ເປັນ "ເຄື່ອງບູຊາເພື່ອຄົນທັງໂລກ".

ຫ) ສຸດທ້າຍ ຜູ້ມີຂອງປະທານໃນການສະແດງຄວາມເມດຕາ ຈະຮູ້ຈັກສັງເກດເຫັນຄົນອື່ນທີ່ມີວິນຍານຢ່າງດຽວກັນ ແລະຮູ້ສຶກຢາກຜູກພັນໃກ້ຊິດກັບພວກເຂົາ ໃນທາງກັບກັນ ເຂົາເບິ່ງຄືຈະມີສັນຊາດຕະຍານພາຍໃນທີ່ຈະສັງເກດເຫັນຄວາມບໍ່ຈິງໃຈໃນຕົວຄົນອື່ນ ເຂົາຈະປິດໃຈຕໍ່ຄົນໆນັ້ນທັນທີ.

3. ອັນຕະລາຍທີ່ອາດຈະເກີດຂຶ້ນກັບຜູ້ທີ່ມີຂອງປະທານໃນການສະແດງຄວາມເມດຕາ

ເຂົາມັກຈະມີແນວໂນ້ມທີ່ຈະເນັ້ນໜັກໄປທາງອາລົມຄວາມຮູ້ສຶກຫລາຍກວ່າເຫດຜົນ

ຊຶ່ງເຮັດໃຫ້ເຂົາມັກຈະຖືກທົດລອງໃຈໃຫ້ດຳເນີນຊີວິດໂດຍອາໃສຄວາມຮູ້ສຶກເປັນຫລັກ ແທນທີ່ຈະສ້າງຄວາມສົມດູນທັງທາງດ້ານອາລົມກັບເຫດຜົນ.

4. ຄຳຕອບຂອງພະເຈົ້າສຳລັບບັນຫານີ້:

"ຈົ່ງຊື່ນຊົມຍິນດີກັບຜູ້ທີ່ມີຄວາມຊື່ນຊົມຍິນດີ ຈະຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້ " (ໂຣມ 12:15)

ນັ້ນຄື ການດຳເນີນຊີວິດທີ່ສົມດູນ ໂດຍຕ້ອງເປີດໃຈໃຫ້ກັບຄວາມຊື່ນຊົມຍິນດີ ແລະຄວາມເຈັບປວດ, ຄວາມສຳເລັດ ແລະຄວາມຫລົ້ມເຫລວ, ຄວາມຮັ່ງມີບໍລິບູນ ແລະຄວາມຂັດສົນເຂັ້ນແຄ້ນ

ປະເດັນສຳຄັນ: ບຸກຄົນຊຶ່ງມີຂອງປະທານ ໃນການສະແດງຄວາມເມດຕາ ຈະຕ້ອງຮູ້ຈັກສ້າງສົມດູນໃນຊີວິດຂອງຕົນນຳວິນຍານແຫ່ງຄວາມເບີກບານໃຈ ແລະລ່າເລີງຍິນດີບໍ່ເຊັ່ນນັ້ນເຂົາອາດຈະຕົກຢູ່ໃນພາວະແຫ່ງຄວາມຮູ້ສຶກເວດທະນາສົງສານຕົວເອງ ຄຣິສຕຽນເຮົາເປັນຜູ້ນຳຂ່າວດີ ຄວາມຮູ້ສຶກກັບວິນຍານຂອງເຮົາຈະຕ້ອງສະທ້ອນໃຫ້ຄົນເຫັນເຖິງຂ່າວດີນັ້ນນຳ.

## V. ສະຫລຸບ

ກ. ກຸນແຈສູ່ການຄົ້ນພົບຂອງປະທານຝ່າຍວິນຍານພັນທະກິດຂອງເຮົາ

1. ເຮົາຕ້ອງສະແຫວງຫາພະເຈົ້າຢ່າງຮ້ອນຮົນເພື່ອໃຫ້ຄົ້ນພົບຂອງປະທານ ແລະງານຮັບໃຊ້ຂອງເຮົາ

GCI

1ໂກຣິນໂທ14:1ຈົ່ງມຸ້ງຫາຄວາມຮັກແລະຂົນຂວາຍຂອງປະທານຝ່າຍພະວິນຍານດ້ວຍຄວາມຈິງໃຈສະເພາະຢ່າງຍິ່ງການເຜີຍພະວັດຈະນະແກ່ເຮົາ.

ພະຄຳພີໄດ້ເຕືອນເຮົາໃຫ້ມຸ້ງສະແຫວງຫາຂອງປະທານຝ່າຍວິນຍານດ້ວຍຄວາມຮ້ອນຮົນ ແລະ ຮ້ອນໃຈ.

ກ) ມັດທາຍ 7:7 "...ເຕືອນໃຈໃຫ້ເຮົາທູນຂໍ "

ເຫດຜົນຂໍ້ນຶ່ງທີ່ເຮັດໃຫ້ເຮົາບໍ່ມີກໍເພາະເຮົາບໍ່ໄດ້ຂໍ

**ຢາໂກໂບ 4:2-3** "ທ່ານທັງຫລາຍຢາກໄດ້ ແຕ່ບໍ່ໄດ້ ທ່ານກໍຂ້າກັນ ທ່ານໂລບແຕ່ບໍ່ໄດ້ ທ່ານກໍຜິດຖຽງກັນ ແລະເຮັດສົງຄາມກັນ ທ່ານບໍ່ມີເພາະທ່ານບໍ່ໄດ້ຂໍ ທ່ານຂໍ ແລະບໍ່ໄດ້ຮັບ ເພາະທ່ານຂໍຜິດ ຫວັງໄດ້ໄປເພື່ອສະໜອງກິເລດຕັນຫາຂອງທ່ານ"

ເຮົາຕ້ອງທູນຂໍດ້ວຍຄວາມເຊື່ອ ບໍ່ແມ່ນດ້ວຍຄວາມສົງໃສ:

**ຢາໂກໂບ 1:6-7** "ແຕ່ຈົ່ງໃຫ້ຜູ້ນັ້ນທູນຂໍດ້ວຍຄວາມເຊື່ອ ຢ່າສົງໄສເລີຍ ເພາະວ່າຜູ້ທີ່ສົງໄສເປັນເໝືອນຄື້ນໃນທະເລຊຶ່ງຖືກລົມພັດຊັດໄປມາ ຜູ້ນັ້ນຈົ່ງຢ່າຄິດວ່າຈະໄດ້ຮັບສິ່ງໃດຈາກພະເຈົ້າເລີຍ"

ການຂໍ ຊອກ ແລະເຄາະ ໃນມັດທາຍ 7:7-8 ຊີ້ໃຫ້ເຫັນວ່າເຮົາຕ້ອງມີຄວາມມານະ ເຮົາຈະຕ້ອງທູນຂໍຕໍ່ໄປໂດຍບໍ່ຢຸດ ເຮົາຕ້ອງຫາ ແລະເຄາະ ປະຕູແຫ່ງສະຫວັນ.

ຂ) ມັດທາຍ 9:11 ເຮັດໃຫ້ເຮົາມີຄວາມໝັ້ນໃຈວ່າພະເຈົ້າເຕັມໃຈທີ່ຈະປະທານຂອງປະທານໃຫ້ແກ່ເຮົາ

ຂໍ້ 9 ຈະເອົາເຂົ້າໃຫ້ແທນກ້ອນຫີນ?

ຂໍ້ 10 ເອົາປາໃຫ້ແທນງູ

ຂໍ້ 11 ຖ້າມະນຸດຊຶ່ງເປັນຄົນບາບຍັງຮູ້ຈັກໃຫ້ຂອງດີແກ່ລູກຂອງຕົນ ຍິ່ງກວ່ານັ້ນເທົ່າໃດທີ່ພະບິດາ ຜູ້ຊົງສະຖິດໃນສະຫວັນຈະປະທານຂອງດີໃຫ້ແກ່ຄົນທີ່ຂໍຕໍ່ພະອົງ

2. ເລີ້ມຮັບໃຊ້ພະເຈົ້າໃນງານຕ່າງໆ ເທົ່າທີ່ສາມາດເຮັດໄດ້ - ມັດທາຍ 25:16-17
ຊາຍທີ່ມີຫ້າຕະລັນ ແລະຊາຍທີ່ມີສອງຕະລັນ ຕ່າງກໍໄດ້ຄົ້ນພົບສັກກະຍະພາບຂອງຕົວເອງ ແລະທຸ້ມເທທຳງານຕາມຕະລັນທີ່ຕົນເອງໄດ້ຮັບມານັ້ນ

**ເອເຟໂຊ 5:15-16** "ເຫດສະນັ້ນທ່ານຈົ່ງລະມັດລະວັງໃນການດຳເນີນຊີວິດໃຫ້ດີ ຢ່າໃຫ້ເໝືອນຄົນມີປັນຍາ ຈົ່ງສວຍໂອກາດ ເພາະວ່າທຸກວັນນີ້ເປັນການທີ່ຊົ່ວ"

GCI

ຂ. ກຸນແຈສູ່ການພັດທະນາຂອງປະທານຝ່າຍວິນຍານ/ ພັນທະກິດຂອງເຮົາ

2ໂກຣິນໂທ 8:7, 2ຕີໂມທຽວ 1:6-7

1. ປະການທໍາອິດ ພະຍາຍາມຫາທາງເຮັດໃຫ້ຂອງປະທານທີ່ມີຢູ່ຮຸ່ງເຮືອງຂຶ້ນ
ພະເຈົ້າຊົງປະສົງໃຫ້ເຮົາພັດທະນາ ແລະເຮັດໃຫ້ຂອງປະທານຂອງເຮົາຮຸ່ງເຮືອງຂຶ້ນ 2ໂກຣິນໂທ 8:7 ,

ໃນເມື່ອທ່ານມີພັກພ້ອມແລ້ວໃນທຸກສິ່ງ

ຄວາມຮຸ່ງເຮືອງຫລືລ້ໍາເລີດ ບໍ່ໄດ້ເກີດຂຶ້ນໃນເວລາຊົ່ວຂ້າມຄືນ ເຮົາຕ້ອງສະແຫວງຫາ ແລະຕ້ອງພັດທະນາຢູ່ຕະຫລອດ.

**2ຕີໂມທຽວ 1:6** "ອັນຂອງປະທານຂອງພະເຈົ້າຊຶ່ງມີຢູ່ໃນທ່ານ ໂດຍທີ່ຂ້າພະເຈົ້າໄດ້ເອົາມືວາງເທິງ ທ່ານນັ້ນຂໍເຕືອນວ່າທ່ານຈົ່ງກະທໍາໃຫ້ຮຸ່ງເຮືອງຂຶ້ນ"

ບາງທີອາດເປັນຄວາມຢ້ານ ເປັນຕົວຂັດຂວາງຕີໂມທຽວໃນການໃຊ້ຂອງປະທານຂອງທ່ານ ໂປໂລຈຶ່ງໄດ້ຂຽນເຕືອນໃຈໄວ້ໃນ 2ຕີໂມທຽວ 1:7 ຄຣິສຕຽນຫລາຍຄົນເຕັມໄປດ້ວຍສັກກະຍະພາບ ແລະຂອງປະທານ ແຕ່ບໍ່ຍອມໃຊ້ເພາະເຂົາມີຄວາມຢ້ານ

ຂັ້ນຕອນທໍາອິດ ທີ່ຈະນໍາໄປສູ່ຄວາມລ້ໍາເລີດໃນຂອງປະທານ ກໍຄືການເລີ້ມເຮັດການຕາມຂອງປະທານທີ່ຕົນເອງມີຢູ່ ອັນໃດກໍຕາມທີ່ຖິ້ມໄວ້ລ້າໆ ອີກບໍ່ນານມັນກໍຈະເສັຽໄປ.

2. ຂັ້ນທີ່ສອງ ໃນການພັດທະນາຂອງປະທານ ກໍຄືການຍອມຮັບຄໍາເຕືອນເພື່ອແກ້ໄຂຂໍ້ບົກພ່ອງ

ສຸພາສິດ 12:1 "ຜູ້ໃດທີ່ຮັກວິໄນກໍຮັກຄວາມຮູ້ ແຕ່ບຸກຄົນທີ່ກຽດການຕັກເຕືອນກໍເປັນຄົນໂງ່"
ສຸພາສິດ 29:1 "ບຸກຄົນທີ່ຖືກຕັກເຕືອນເລື້ອຍໆ ແຕ່ຍັງແຂງຄໍ ຈັກໝ່ອຍຄໍາຈະຫັກ ຮັກສາບໍ່ໄດ້"
ສຸພາສິດ 1:5 "ທັງນັກປາດຈະໄດ້ຍິນ ແລະເພີ່ມພູນການຮຽນຮູ້ ແລະຄົນທີ່ມີຄວາມເຂົ້າໃຈຈະໄດ້ຄວາມຊໍ່າຊອງ"

3. ວິທີທີ່ສາມ ຄືການຮຽນຮູ້ຈາກຄວາມສໍາເລັດຂອງຄົນອື່ນ
ສຸພາສິດ 27:17 "ເຫລັກລັບເຫລັກໄດ້ ຄົນນຶ່ງກໍລັບເພື່ອນຂອງຕົນໄດ້"

4. ຂັ້ນຕອນທີ່ສີ່ ເພື່ອການພັດທະນາຂອງປະທານ ຄື ການຮຽນຮູ້ຈາກຄວາມຫລົ້ມເຫລວຂອງຄົນອື່ນ

ສຸພາສິດ 1:5 "ທັງນັກປາດຈະໄດ້ຍິນ ແລະເພີ່ມພູນການຮຽນຮູ້ ແລະຄົນທີ່ມີຄວາມເຂົ້າໃຈຈະໄດ້ຄວາມຊໍ່າຊອງ"

GCI

5. ກຸນແຈປະການທີ່ຫ້າ ຄືຢ່າຍອມໃຫ້ຄວາມຜິດພາດໃນອາດີດກາຍເປັນອຸປະສັກຂັດຂວາງເຮົາ

**ຟີລິບບອຍ 3:13** "ເບິ່ງກ່ອນພີ່ນ້ອງທັງຫລາຍ ຂ້າພະເຈົ້າບໍ່ຖືວ່າຂ້າພະເຈົ້າໄດ້ສວຍໄວ້ແລ້ວ ແຕ່ຂ້າພະເຈົ້າເຮັດຢ່າງນີ້ງ ຄື ລືມສິ່ງທີ່ຜ່ານພົ້ນມາແລ້ວເສັຽ ແລະໂນ້ມຕົວອອກໄປຫາ ສິ່ງທີ່ຢູ່ຂ້າງໜ້າ"

6. ກຸນແຈປະການທີ່ຫົກ ຄື **ຄວາມພຽນພະຍາຍາມ**

**ຟີລິບບອຍ 3:14** "ຂ້າພະເຈົ້າບາກບັ່ນມຸ້ງໄປສູ່ຫລັກໄຊ ເພື່ອຈະໄດ້ຮັບລາງວັນ ຊຶ່ງໃນພະເຢຊູຄຣິດພະເຈົ້າໄດ້ຊົງເອີ້ນຈາກເບື້ອງເທິງ ໃຫ້ເຮົາໄປຮັບ"

**ໜັງສືອ້າງອີງ**